ACET

ANALYTICAL CENTER
OF EXCELLENCE
ON TRAFFICKING




# ໃຫ້ບັນດາຜູ້ລັກລອບ ຄ້າຂາຍສັດປ່າຈ່າຍເພື່ອ ການປົກປັກຮັກສາສັດປ່າ

## ກໍລະນີສຶກສາເພື່ອການສ້າງຕັ້ງກອງທຶນ ອານຸລັກຟື້ນຟູສັດປ່າຈາກການຍຶດ ແລະ ຮິບຊັບສິນຂອງຜູ້ກະທຳຜິດ

ເອກະສານນີ້ແມ່ນບໍ່ມີຄ່າໃຊ້ຈ່າຍສຳລັບບຸກຄະລາກອນ, ເຈົ້າໜ້າທີ່, ຜູ້ໃຊ້ທີ່ຢູ່ໃນຂະແໜງການສຶກສາ ແລະ ບໍ່ແມ່ນເພື່ອເຮັດການຄ້າ, ຍ້ອນຂໍ້ມູນຖືກໃຊ້ເພື່ອເປັນແຫຼ່ງຄວາມຮູ້. ເອກະສານອາດບໍ່ໄດ້ຮັບການດັດແກ້ກ່ອນການເຜີຍແຜ່ໃນຊ່ອງທາງໃດໜຶ່ງ.

ບົດລາຍງານນີ້ສ້າງຂຶ້ນໄດ້ໂດຍການປະກອບສ່ວນຈາກອົງການຟີແລນ ແລະ ຜ່ານການສະໜອງທຶນໂດຍ ພີເອັມໄອ ອິມແພັກ, ທຶນຊ່ວຍເຫຼືອລ້າຈາກມູນນິທິຟີລິບມໍລິດສາກົນ. ເພື່ອໄດ້ຂໍ້ມູນເພີ່ມເຕີມກະລຸນາຕິດຕໍ່ ricardo@freeland.org

ລິຂະສິດ: ສູນການວິເຄາະຂໍ້ມູນເພື່ອຕ້ານການລັກລອບ (ອາເຊັດ), 2020

# ສາລະບານ

**ສະຫຼຸບເນື້ອໃນໂດຍຫຍໍ້** 3

ບັນດາສິ່ງທ້າທາຍ: 4

ກາລະໂອກາດຕ່າງໆ: 4

**ເຫດຜົນໃນການນໍາໃຊ້ມາດຕະການຄໍາຕັດສິນທີ່ເປັນການຊົດເຊີຍ ແລະ ເພີ່ມເຕີມ ແມ່ນເພື່ອທັບມ້າງໂຄງລ່າງພື້ນຖານການເງິນຂອງບັນດາຜູ້ລັກລອບຄ້າຂາຍສັດປ່າ** 5

ກ. ການລັກລອບຄ້າຂາຍສັດປ່າສ້າງຜົນກໍາໄລນັບມື້ນັບເພີ່ມຂຶ້ນ: 6

ຂ. ແຜນງານຕໍ່ສູ້ຕ້ານການລັກລອບຄ້າຂາຍສັດປ່າໄດ້ຮັບການຈັດສັນທຶນໜ້ອຍຫຼາຍ: 6

ຄ. ການກໍານົດໂທດທີ່ເບົາ ແລະ ບໍ່ເໝາະສົມກັບຜົນກະທົບທີ່ເກີດຂຶ້ນ: 7

ຂີດຄວາມສາມາດຂອງເຈົ້າໜ້າທີ່ບັງຄັບໃຊ້ກົດໝາຍ: 7

ງ. ເພີ່ມທະວີຄວາມສ່ຽງທາງການເງິນໃຫ້ຜູ້ລັກລອບຄ້າຂາຍສັດປ່າ: 8

**ຍຸດທະສາດແບບໃໝ່ເພື່ອທັບມ້າງໂຄງລ່າງພື້ນຖານການເງິນຂອງອາດຊະຍາກອນສັດປ່າ: ການຊົດເຊີຍ** 9

ກ. ການແນະນໍາແຜນງານການຊົດເຊີຍ: 9

ຂ. ບັນຫາດ້ານກົດໝາຍ: 10

ຄ. ກໍລະນີສຶກສາ: ສະຫະລັດອາເມລິກາ 12

ງ. ການນໍາໃຊ້ມາດຕະການຊົດເຊີຍໃນຂະບວນຍຸຕິທໍາຂອງຊາດອື່ນ: 15

**ວິທີແກ້ໄຂຜົນເສຍຫາຍຕໍ່ສັດປ່າໂດຍຜ່ານການນໍາໃຊ້ມາດຕະການຄໍາຕັດສິນຂອງສານ: "ຄໍາຕັດສິນທີ່ມີລັກສະນະຫືອຄິດປະດິດສ້າງ", "ການບໍລິການທາງການເງິນແກ່ຊຸມຊົນ" ແລະ ບັນລຸຂໍ້ຕົກລົງ** 17

ກ. ພາກແນະນໍາ: 17

ຂ. ບັນຫາທາງກົດໝາຍ: 17

ຄ. ກໍລະນີສຶກສາ: ປະເທດການາດາ 18

ງ. ກໍລະນີສຶກສາ: ສະຫະລັດອາເມລິກາ ("ການບໍລິການທາງການເງິນໃຫ້ຊຸມຊົນ") 19

ຈ. ກໍລະນີສຶກສາ: ປະເທດອິດສະຕາລີ 19

ສ. ການນໍາໃຊ້ຄໍາຕັດສິນເພີ່ມເຕີມໃນລະບົບຍຸຕິທໍາອື່ນໆ: 20

ຊ. ການບັນລຸຂໍ້ຕົກລົງ: 20

**ການພິຈາລະນາເພີ່ມເຕີມ ແລະ ສິ່ງທ້າທາຍຕ່າງໆ** 23

ກ. ອັບເດດ ຫຼື ປັບປຸງກອບວຽກທາງກົດໝາຍໃນປະຈຸບັນ: 23

ຂ. ຂີດຄວາມສາມາດທາງການເງິນຂອງຜູ້ກະທໍາຜິດ ແລະ ຮິບຊັບສິນຂອງອາດຊະຍາກອນ: 24

ຄ. ການຄົ້ນຄວ້າຊອກຫາການຊົດເຊີຍຈາກລັດຖະບານຕ່າງປະເທດ: 25

ງ. ການມີສ່ວນຮ່ວມຂອງສັງຄົມໃນການກໍານົດຈໍານວນຫືອໜ່ອຍ ແລະ ປະເມີນຜົນເສຍຫາຍ: 25

ຈ. ການຟ້ອງຮ້ອງເພື່ອປະໂຫຍດຂອງສ່ວນລວມ: 25

**ບັນດາຄໍາແນະນໍາທາງດ້ານຍຸດທະສາດ** 27

**ສະຫຼຸບສັງລວມ** 29

**ເອກະສານອ້າງອີງ** 30

**ຄໍາຂອບໃຈ** 34

# ສະຫຼຸບເນື້ອໃນໂດຍຫຍໍ້

ການລັກລອບຄ້າຂາຍສັດປ່າແມ່ນໜຶ່ງໃນການຄ້າຜິດກົດໝາຍທີ່ສ້າງຮັ່ງຄູນມີທີ່ສຸດຢູ່ໃນໂລກນະປະຈຸບັນນີ້. ໂດຍມີມູນຄ່າການຊື້ຂາຍ 20 ຕື້ໂດລາ ຫຼື ຫຼາຍກວ່ານີ້ຕໍ່ປີ, ຜົນກະທົບອັນໜັກໜ່ວງຂອງມັນແມ່ນ: ກ) ອັດຕາການສູນເສຍພັນສັດທີ່ໄວທີ່ສຸດໃນປະຫວັດສາດ; ຂ) ເພີ່ມການສໍ້ລາດບັງຫຼວງໃນບັນດາຕ່ອງໂສ້ການບັງຄັບໃຊ້ກົດໝາຍໃນທົ່ວໂລກ; ແລະ ຄ) ການແຜ່ລະບາດຂອງພະຍາດຈາກສັດສູ່ຄົນ ຕົວຢ່າງ: ໂຄວິດ-19 ທີ່ຄຸກຄາມສຸຂະພາບຂອງມະນຸດ ແລະ ຄວາມປອດໄພຂອງໂລກ. ເຖິງວ່າ ຜົນກະທົບອັນໜັກໜ່ວງຂອງມັນຈະມີຕໍ່ສັດປ່າ ແລະມະນຸດ, ການລັກລອບຄ້າຂາຍສັດປ່າຍັງບໍ່ທັນຍອມຮັບໃຫ້ເປັນການກະທຳຜິດທາງອາຍາທີ່ຮຸນແຮງ, ທີ່ສະທ້ອນໃຫ້ເຫັນຈາກການກຳນົດໂທດທີ່ເບົາ ໃຊ້ໃນຫຼາຍປະເທດ, ແລະ ຂາດການເອົາໃຈໃສ່ຈາກໜ່ວຍງານບັງຄັບໃຊ້ກົດໝາຍ ແລະ ຮັກສາຄວາມສະຫງົບ. ການປົກປ້ອງສັດປ່າຍັງໄດ້ຮັບການພິຈາລະນາເປັນຂະແໜງການທີ່ໄດ້ຮັບການຈັດສັນທຶນທີ່ມີໜ້ອຍ, ສ່ວນຫຼາຍພົບສິ່ງທ້າທາຍດ້ານງົບປະມານທີ່ເປັນການຂາດກະແສເງິນສົດເພື່ອວຽກບໍລິຫານ ແລະ ກົດໝາຍອານຸລັກສັດປ່າທີ່ມີຄວາມອ່ອນແອ ພາໃຫ້ບັນດາຜູ້ລັກລອບມີທ່າໄດ້ປຽບຫຼາຍກວ່າ. ບັນດາຜູ້ລັກລອບຈະຈ່າຍເງິນໃຫ້ການບໍລິການຂົນສົ່ງ (ຕາມຖ້ຽວການຂົນສົ່ງສັດປ່າ), ແລະ ເຂົາກໍ່ຈ່າຍໃນລາຄາສູງ. ແຕ່ບັນດາໜ່ວຍງານຕໍ່ສູ້ຕ້ານການລັກລອບຄ້າຂາຍສັດປ່າໂດຍລວມແລ້ວພັດໄດ້ຮັບການຈັດສັນງົບໜ້ອຍຫຼາຍ, ງົບປະມານມາຊ້າ ແລະ ກໍ່ບໍ່ສົມກັບການປະຕິບັດໜ້າທີ່. ທຸລະກິດຕະຫຼາດມືດແບບນີ້ ມີລັກສະນະ **ຜົນຕອບແທນສູງ ແຕ່ມີຄວາມສ່ຽງຕໍ່າ.** ການລ່າສັດ ແລະ ການລັກລອບຄ້າຂາຍສັດປ່າທີ່ມີຂະໜາດໃຫຍ່ຍັງສືບຕໍ່ໄປຈົນກວ່າວົງຈອນນີ້ຈະຖືກຂັດຂວາງ.

ເພື່ອປ້ອງກັນການຄ້າປະເພດນີ້ຈາກການເປັນສາເຫດພາໃຫ້ເກີດການສູນພັນເພີ່ມຂຶ້ນ, ລະບົບນິເວດເສື່ອມໂຊມ ແລະ ເກີດການລະບາດຂອງພະຍາດເພີ່ມເຕີມ, ພວກເຮົາຈຳເປັນຕ້ອງໄດ້ຕີກັບວົງຈອນການ

**ການແລກເອົາລະຫວ່າງຄວາມສ່ຽງ ແລະ ຜົນຕອບແທນ**




ອາດຊະຍາກຳຕໍ່ສັດປ່າໃນສັງຄົມປະຈຸບັນຍັງສືບຕໍ່ເປັນທຸລະກິດທີ່ມີຄວາມສ່ຽງຕໍ່າແຕ່ໃຫ້ຜົນຕອບແທນສູງສຳລັບອາດຊະຍາກຳທີ່ມີການຈັດຕັ້ງ.

ຄ້າຂາຍນີ້ ໂດຍເຮັດໃຫ້ການລັກລອບຄ້າຂາຍສັດປ່າ **ມີຄວາມສ່ຽງສູງ, ຜົນຕອບແທນໜ້ອຍ ແລະ ໃຫ້ໜ່ວຍງານຕ້ານການລັກລອບຄ້າຂາຍສັດປ່າໄດ້ຮັບນະໂຍບາຍສົ່ງເສີມຫຼາຍກວ່າເກົ່າ.** ໜຶ່ງໃນວິທີຈັດຕັ້ງປະຕິບັດແມ່ນການຍຶດຜົນກຳໄລທີ່ໄດ້ຈາກການລັກລອບຄ້າຂາຍສັດປ່າ ແລະ ປັບປຸງແຜນງານຄືນເພື່ອໃຫ້ນຳໄປຊຸກຍູ້ຜູ້ໃດທີ່ມີຜົນງານພົ້ນເດັ່ນໃນການອານຸລັກສັດປ່າ, ແລະ ເປັນການສະໜອງທຶນແກ່ການປົກປັກຮັກສາ ແລະ ຟື້ນຟູສັດປ່າ.

ໂດຍການກຳນົດເປົ້າໝາຍໂຄງລ່າງພື້ນຖານທາງການເງິນຂອງຜູ້ລັກລອບຄ້າຂາຍສັດປ່າ ແລະ ນຳໃຊ້ເງິນຂອງຜູ້ກະທຳຜິດໃຫ້ມາເປັນທຶນແກ່ການອານຸລັກສັດປ່າ, ພວກເຮົາສາມາດ:

- ທັບມ້າງວົງຈອນການເງິນຈາກການລັກລອບຄ້າຂາຍສັດປ່າ;
- ປ່ຽນທິດທາງການກະທຳຜິດໃນອານາຄົດ;
- ຊ່ວຍອານຸລັກປະຊາກອນສັດປ່າທີ່ເປັນເປົ້າໝາຍ, ແຫຼ່ງທີ່ຢູ່ອາໄສ ແລະ ຟື້ນຟູຄືນບັນດາຊຸມຊົນທີ່ໄດ້ຮັບຜົນກະທົບ.

ບັນດາລັດຖະບານ ແລະ ອົງການຈັດຕັ້ງຕ່າງໆໄດ້ພິຈາລະນາ ແລະ ລິເລີ່ມຫຼາຍຍຸດທະສາດທີ່ຕ່າງກັນ ເນັ້ນໃສ່ການແກ້ໄຂບັນຫາດັ່ງກ່າວ. ບົດລາຍງານນີ້ຈະໄດ້ສຸມໃສ່ການນຳໃຊ້ ມາດຕະການຄຳຕັດສິນທີ່ເປັນການຊົດເຊີຍ ແລະ ເພີ່ມເຕີມ ເພື່ອເຮັດໃຫ້ຜູ້ກະທຳຜິດດ້ານສັດປ່າໄດ້ຊຳລະເງິນຕໍ່ກັບຜົນເສຍຫາຍທີ່ເຂົາເຈົ້າໄດ້ກໍ່ໃຫ້ເກີດກັບສັດປ່າ, ລະບົບນິເວດ ແລະ ຊຸມຊົນໃນທ້ອງຖິ່ນ. ກອງທຶນສາມາດຈັດສັນຜ່ານການເປັນຄູ່ຮ່ວມງານກັນລະຫວ່າງ ພາກລັດ-ພາກອົງການທາງສັງຄົມ ເພື່ອຈັດຕັ້ງປະຕິບັດການຟື້ນຟູ.

## ບັນດາສິ່ງທ້າທາຍ:

- **ກອບວຽກດ້ານນິຕິກຳ:** ເພື່ອສະດວກໃນການເຂົ້າເຖິງ ທີ່ເປັນຄຳຕັດສິນຂອງສານດ້ານຜົນຕອບແທນ, ສານໃດໜຶ່ງຈະມີພື້ນຖານທາງກົດໝາຍເພື່ອກຳນົດມາດຕະການຄຳຕັດສິນທີ່ເປັນການຊົດເຊີຍ ຫຼື ມາດຕະການເພີ່ມເຕີມສຳລັບຜູ້ກະທຳຜິດ.
- **ກຳນົດຜູ້ຖືກເຄາະຮ້າຍ ແລະ ເພີ່ມທະວີຈຸດຢືນ:** ຍ້ອນຜູ້ຖືກເຄາະຮ້າຍໂດຍກົງຈາກການລັກລອບຄ້າຂາຍສັດປ່າອາດບໍ່ສາມາດມີສິດທາງກົດໝາຍໃນຕົວຂອງມັນ (ເຊັ່ນ: ສັດປ່າຕ່າງໆ), ພາກສ່ວນທີ່ຖືກກະທົບເສຍຫາຍໂດຍທາງອ້ອມ (ເຊັ່ນ: ພາກລັດ, ສະມາຊິກໃນຊຸມຊົນ ຫຼື ການຈັດຕັ້ງອື່ນໆ) ຈຳເປັນຈະຕ້ອງຕາງໜ້າໃຫ້ຜູ້ຖືກເຄາະຮ້າຍ.
- **ການກຳນົດວິທີຊົດເຊີຍທີ່ມີຄວາມໝາຍ:** ການກຳນົດຈຳນວນຂອງຜົນເສຍຫາຍທີ່ເປັນນາມມະທຳນັ້ນ (ເຊັ່ນ: ຜົນເສຍຫາຍທີ່ມີຕໍ່ສິ່ງແວດລ້ອມ ຫຼື ພັນສັດ) ແມ່ນສັບຊ້ອນ ແລະ ອາດຕ້ອງການໆວິເຄາະທາງເສດຖະກິດທີ່ໃຊ້ເຕັກນິກຂັ້ນສູງ. ເມື່ອກຳນົດຈຳນວນໄດ້ແລ້ວ, ສານຈະຕ້ອງການເລືອກວິທີຊົດເຊີຍທີ່ເໝາະສົມ ເພື່ອກຳນົດໂທດຕາມຜົນເສຍຫາຍຕົວຈິງ ໂດຍພິຈາລະນາເຖິງຄວາມເໝາະສົມ.

  **ການປະຕິບັດຕາມຄຳສັ່ງຂອງສານ:** ເມື່ອການຊຳລະເງິນຄ່າຊົດເຊີຍໃຫ້ແກ່ອົງການຈັດຕັ້ງ ເພື່ອປະຕິບັດແຜນງານສະເພາະໃດໜຶ່ງທີ່ຊ່ວຍຊົດເຊີຍຜົນເສຍຫາຍທີ່ເກີດຂຶ້ນ, ຈະຍັງຕ້ອງໄດ້ເອົາໃຈໃສ່ຮັບປະກັນຄວາມເປັນກາງຂອງພາກສ່ວນທີ່ເປັນສານ. ບັນດາມາດຕະການ ແລະ ການປ້ອງກັນຈະຕ້ອງມີເພື່ອຮັບປະກັນໃຫ້ໄດ້ວ່າ ຄຳສັ່ງຂອງສານໄດ້ຮັບການຈັດຕັ້ງປະຕິບັດສອດຄ່ອງຕາມຄຳສັ່ງຂອງສານແທ້.

## ກາລະໂອກາດຕ່າງໆ:

- **<u>ມາດຕະການປາບປາມເພີ່ມເຕີມ:</u>** ເພື່ອຮັບປະກັນໃຫ້ໄດ້ເຖິງຈຸດປະສົງຂອງມາດຕະການປາບປາມ, ການຊົດເຊີຍ ແລະ ການຟື້ນຟູໄດ້ຮັບການປະຕິບັດນັ້ນ, ມັນມີຄວາມສຳຄັນທີ່ ຄຳຕັດສິນເພີ່ມ ຈະມັກກຳນົດໃຫ້ຕື່ມໃສ່ອີກ (ແລະ ບໍ່ໄດ້ນອນໃນ) **ມາດຕະການກຳນົດໂທດທາງກົດໝາຍອື່ນ** (ເຊັ່ນ: ຄ່າປັບໄໝ, ການຕັດອິດສະຫຼະພາບ). ສະນັ້ນ ມາດຕະການດັ່ງກ່າວຈະໃຊ້ເປັນມາດຕະການກຳນົດໂທດເພີ່ມ.
- **<u>ການຈັດສັນທຶນເພີ່ມ:</u>** ເມື່ອນຳໃຊ້ມາດຕະການກຳນົດໂທດເພີ່ມໃສ່ກັບຄ່າປັບໄໝແລ້ວ, ທັງສອງມາດຕະການເປັນມາດຕະການທາງການເງິນຕື່ມໃຫ້ຜູ້ກະທຳຜິດ ແລະ ແຫຼ່ງທຶນເພີ່ມເຕີມສາມາດໃຊ້ໂດຍລັດຖະບານເພື່ອແກ້ໄຂບັນຫາຜົນເສຍຫາຍ ຫຼື ປົກປ້ອງສັດສາຍພັນຕ່າງໆ.
- **<u>ການຍົກລະດັບບົດບາດຂອງຜູ້ຖືກເຄາະຮ້າຍ:</u>** ໃນເວລາທີ່ມາດຕະການລົງໂທດທົ່ວໄປເນັ້ນໃສ່ການລົງໂທດຈຳເລີຍ, ຄຳຕັດສິນທີ່ເປັນການຊົດເຊີຍ ແລະ ເພີ່ມເຕີມຈະເນັ້ນໃສ່ການຍົກລະດັບບົດບາດຂອງຜູ້ຖືກເຄາະຮ້າຍ ແລະ ຊອກຫາວິທີຊົດເຊີຍຜົນເສຍຫາຍສະເພາະໃດໜຶ່ງໂດຍໃຊ້ຫຼັກຄວາມຍຸຕິທຳເພື່ອການຟື້ນຟູຫຼາຍກວ່າ.
- **<u>ການມີສ່ວນຮ່ວມຂອງມະຫາຊົນ:</u>** ບັນດາບົດແນະນຳສຳລັບມາດຕະການຄຳຕັດສິນຂອງສານເພີ່ມເຕີມ ສາມາດຮ່າງຂຶ້ນມາເພື່ອຊຸກຍູ້ຄວາມໂປ່ງໃສ່ໃນຂະບວນຍຸຕິທຳ ແລະ ຊຸກຍູ້ການມີສ່ວນຮ່ວມຂອງມະຫາຊົນໃນການກຳນົດຄຳຕັດສິນ (ເຊັ່ນ: ກຳນົດຜົນເສຍຫາຍທີ່ເກີດຈາກສາເຫດໃດ ແລະ ກຳນົດວິທີການຊົດເຊີຍທີ່ຈຳເປັນ).

ຈຸດປະສົງຂອງບົດລາຍງານນີ້ແມ່ນເພື່ອສົ່ງເສີມການປຶກສາຫາລືເພີ່ມເຕີມກ່ຽວກັບມາດຕະການຄຳຕັດສິນທີ່ເປັນການຊົດເຊີຍ ແລະ ເພີ່ມເຕີມ, ໂດຍສະເພາະ: ວິທີໃນການນຳໃຊ້ມາດຕະການດັ່ງກ່າວເພື່ອທັບມ້າງໂຄງລ່າງພື້ນຖານດ້ານການເງິນຂອງອາດຊະຍາກຳຕໍ່ສັດປ່າເພື່ອໃຫ້ພາກສ່ວນຂອງລັດມີປະສົບການທີ່ເປັນປະໂຫຍດແກ່ການດຳເນີນຄະດີ ເຮັດໃຫ້ການຈັດຕັ້ງປະຕິບັດມີຮູບມະທຳຫຼາຍຂຶ້ນ ແລະ ມີຜົນຕົວຈິງ. ໃນອີກດ້ານໜຶ່ງ, ການປຶກສາຫາລືດັ່ງກ່າວອາດຊ່ວຍໃຫ້ພາກສ່ວນຂອງລັດພິຈາລະນາການສ້າງ ຫຼື ການປັບປຸງແຜນງານໃໝ່ ຫຼື ກຳລັງມີຢູ່ນັ້ນພາຍໃຕ້ຂອບເຂດໜ້າທີ່ຂອງຕົນເພື່ອກຳນົດເປົ້າໝາຍຂະບວນການທາງການເງິນ ແລະ ຄວາມຮັ່ງມີຂອງຜູ້ກະທຳຜິດລັກລອບຄ້າຂາຍສັດປ່າ.

# ເຫດຜົນໃນການນຳໃຊ້ມາດຕະການຄຳຕັດສິນທີ່ເປັນການຊິດເຊີຍ ແລະ ເພີ່ມເຕີມ ແມ່ນເພື່ອທັບມ້າງໂຄງລ່າງພື້ນຖານການເງິນຂອງບັນດາຜູ້ລັກລອບຄ້າຂາຍສັດປ່າ

ໃນເວລາທີ່ມີການພິມເຜີຍແຜ່ບົດລາຍງານນີ້, ຜົນກະທົບຂອງອາດຊະຍາກຳສັດປ່າຍິ່ງມີຄວາມໜັກໜ່ວງ. ຕົວຢ່າງ: ປີກາຍນີ້ຊ້າງ 30.000 ໂຕຖືກລ່າເພື່ອເອົາງາຊ້າງ; ປະຈຸບັນມີພຽງເສືອປ່າ 4% ຖ້າທຽບໃສ່ສັດຕະວັດກ່ອນ; ໂຕແຮດອາຟລິກກາ ຖືກລ່າທຸກໆ 8 ຊົ່ວໂມງ; ແລະ ໂຕລິ່ນ ຫຼາຍກວ່າ 1 ລ້ານໂຕ ຖືກຂາຍຢ່າງຜິດກົດໝາຍຕັ້ງແຕ່ປີ 2000, ເຮັດໃຫ້ໂຕລິ່ນ ເປັນສັດປ່າລ້ຽງລູກດ້ວຍນົມທີ່ຖືກລັກລອບຄ້າຂາຍຫຼາຍທີ່ສຸດໃນໂລກ.[1] ການລັກລອບຄ້າຂາຍສັດປ່າມີທ່າອ່ຽງເພີ່ມຂຶ້ນ, ເປັນໄພຄຸກຄາມຕໍ່ປະຊາກອນສັດປ່າ, ລະບົບນິເວດ ແລະ ເມື່ອພວກເຮົາໄດ້ພະເຊີນກັບເຊື້ອໄວລັດໂຄໂລນາ ທີ່ມີຜົນກະທົບຕໍ່ມະນຸດເຊັ່ນກັນ. ການຄ້າ ແລະ ໄພດັ່ງກ່າວກຳລັງຂະຫຍາຍຕົວແຕ່ຄວາມຮັບຮູ້ຂອງຜູ້ບໍລິໂພກກໍ່ເພີ່ມຂຶ້ນເຊັ່ນກັນກ່ຽວກັບຜົນເສຍຫາຍທີ່ເກີດຈາກການຄ້າ ແລະ ການຊຸກຍູ້ທີ່ເພີ່ມຂຶ້ນແກ່ໜ່ວຍງານບັງຄັບໃຊ້ກົດໝາຍ, ໂຄງການລິເລີ່ມ ແລະ ບັນດາກົດໝາຍຕ້ານການຄ້າຂາຍສັດປ່າທີ່ຜິດກົດໝາຍ. ບັນຫາຕົ້ນຕໍສຳລັບເຈົ້າໜ້າທີ່ສືບສວນ ແລະ ບັງຄັບໃຊ້ກົດໝາຍຕ້ານການຄ້າຂາຍສັດປ່າແມ່ນການຂາດທຶນ ແລະ ລະບົບຕ່າງໆທີ່ໃຊ້ໃນການຕໍ່ສູ້ຕ້ານການລັກລອບຄ້າຂາຍສັດປ່າ. ໃນທາງກັບກັນ, ສິ່ງຈູງໃຈທີ່ສຳຄັນໃຫ້ແກ່ຜູ້ລັກລອບຄ້າຂາຍສັດປ່າແມ່ນທຸລະກິດນີ້ແມ່ນໜຶ່ງໃນທຸລະກິດທີ່ສ້າງຄວາມຮັ່ງມີທີ່ສຸດໃນໂລກ. ໂດຍສະເພາະ ຮູ້ກັນດີເມື່ອຊາຍແດນມີເສັ້ນທາງລັກລອບ, ກົດໝາຍທີ່ອ່ອນແອ ແລະ ການບັງຄັບໃຊ້ກົດໝາຍເປັນບາງບ່ອນ, ອາຊີຕາເວັນອອກສ່ຽງໃຕ້ເປັນພື້ນທີ່ໜຶ່ງທີ່ກຳລັງພົ້ນເດັ່ນໃນໂລກສຳລັບການລ່າສັດ, ການລັກລອບຄ້າຂາຍ ແລະ ການບໍລິໂພກສັດປ່າ ຫຼື ຊິ້ນສ່ວນຂອງພວກມັນຢ່າງຜິດກົດໝາຍ.[2] ເພື່ອໃຫ້ເກີດການທັບມ້າງ ແລະ ແກ້ໄຂວຽກງານການລັກລອບຄ້າຂາຍສັດປ່າຢ່າງຍືນຍົງ, ພວກເຮົາຈຳເປັນຕ້ອງສຸມໃສ່ການທັບມ້າງແຫຼ່ງການເງິນທີ່ສ້າງຜົນກຳໄລເພື່ອຫຼຸດຜ່ອນສິ່ງຈູງໃຈຜູ້ລັກລອບຄ້າຂາຍສັດປ່າຈາກການເຂົ້າຮ່ວມການຄ້າໃນໄລຍະທຳອິດ. ຢ່າງໃດກໍ່ຕາມມາຮອດປະຈຸບັນ, ບັນດາແຜນງານທີ່ສຸມໃສ່ການຕໍ່ສູ້ການລັກລອບ

### ການລ່າແຮດ




ປະກົດການລັກລອບລ່າໂຕແຮດໃນອາຟີລິກກາໃຕ້ເພີ່ມຂຶ້ນຢ່າງຫຼວງຫຼາຍຈາກທີ່ໂຕແຮດຖືກຂ້າ 13 ໂຕໃນປີ 2007 ເພີ່ມຂຶ້ນມາເກືອບຮອດ 1000 ໂຕໃນປີ 2013.[5]




ອັດຕາສ່ວນລະຫວ່າງໂທດສູງສຸດທີ່ກຳນົດໃຫ້ອາດຊະຍາກຳຕໍ່ສັດປ່າ ແລະ ປ່າໄມ້, ແລະ ຈີດີພີ ຕໍ່ຫົວຄົນໃນຊາດສະມາຊິກອາຊຽນ, ມັນຍົກໃຫ້ເຫັນຄວາມແຕກໂຕນລະຫວ່າງໂທດປັບໄໝທີ່ແຕ່ລະປະເທດໄດ້ກຳນົດແນວໃດຕໍ່ອາດຊະຍາກອນທີ່ກະທຳຜິດຕໍ່ສັດປ່າ. ທະນາຄານໂລກ, ຂໍ້ມູນ, ຈີດີພີ.

ຄ້າຂາຍສັດປ່າຍັງບໍ່ທັນສາມາດທັບມ້າງລະບົບການເງິນຂອງບັນດາຜູ້ລັກລອບຄ້າຂາຍສັດປ່າ. ຍັງມີຫຼາຍບັນຫາທີ່ກ່ຽວຂ້ອງກັບສິ່ງທ້າທາຍນີ້ເຊັ່ນ:

ກ. ການລັກລອບຄ້າຂາຍສັດປ່າແມ່ນສ້າງຜົນກຳໄລນັບມື້ນັບເພີ່ມຂຶ້ນ;

ຂ. ແຜນງານຕ້ານການລັກລອບຄ້າຂາຍສັດປ່າໄດ້ຮັບການຈັດສັນທຶນທີ່ໜ້ອຍຫຼາຍ;

ຄ. ການກຳນົດໂທດຕ່າງໆທີ່ມີຢູ່ແມ່ນໂທດເບົາ ແລະ ບໍ່ແທດເໝາະກັບຜົນກະທົບທີ່ເກີດຂຶ້ນ; ແລະ

ງ. ຂີດຄວາມສາມາດຂອງໜ່ວຍງານບັງຄັບໃຊ້ກົດໝາຍມີຈຳກັດຍ້ອນຄວາມຮູ້ ແລະ ການເຝິກອົບຮົມທີ່ຍັງບໍ່ພຽງພໍ.

ເພື່ອແກ້ໄຂບັນຫາດັ່ງກ່າວ, ພວກເຮົາຈຳເປັນຕ້ອງເພີ່ມຄວາມສ່ຽງດ້ານການເງິນແກ່ຜູ້ລັກລອບຄ້າຂາຍສັດປ່າ ແລະ ເພີ່ມນະໂຍບາຍຊຸກຍູ້ບັນດາເຈົ້າໜ້າທີ່ຜູ້ປົກປ້ອງສັດປ່າ. ສິ່ງນີ້ສາມາດເຮັດໄດ້ໂດຍການວາງໂທດທີ່ແທດເໝາະກັບຜົນເສຍຫາຍ ແລະ ມອບຄວາມຍຸຕິທຳໃຫ້ກັບຜູ້ຖືກເຄາະຮ້າຍ ທີ່ໄດ້ຮັບຜົນກະທົບ, ເຊັ່ນ: ການວາງມາດຕະການຄຳຕັດສິນທີ່ເປັນການຊົດເຊີຍ ແລະ ເພີ່ມເຕີມ. ພາບລວມຂອງແນວຄວາມຄິດນີ້ໄດ້ຮັບການພິຈາລະນາເປັນລາຍລະອຽດໃນພາກຕໍ່ໄປ (ພາກ 2 ) ຂອງບົດລາຍງານນີ້.

## ກ. ການລັກລອບຄ້າຂາຍສັດປ່າສ້າງຜົນກຳໄລນັບມື້ນັບເພີ່ມຂຶ້ນ:

ເມື່ອສາຍພັນຂອງສັດປ່າຍິ່ງຫາຍາກເທົ່າໃດ, ການລັກລອບຄ້າຂາຍສັດປ່າກໍ່ຈະຍັງສືບຕໍ່ເພື່ອສ້າງຜົນກຳໄລໃຫ້ເພີ່ມຍິ່ງຂຶ້ນເທົ່ານັ້ນ. ລາຄາຂາຍຍ່ອຍຂອງງາຊ້າງພຽງຢ່າງດຽວແມ່ນເພີ່ມຂຶ້ນຈາກ 5,77 ໂດລາ/ກິໂລ ໃນປີ 1976 ມາເປັນ 3.000 ໂດລາ/ກິໂລ ໃນປີ 2014 ແລະມາມີລາຄາຄົງທີ່ຢູ່ປະມານ 730 ໂດລາ/ກິໂລ ໃນປີ 2017 ຍ້ອນສ່ວນຫຼາຍແມ່ນປະເທດຈີນຫ້າມການມີງາຊ້າງ.[3-4]

## ຂ. ແຜນງານຕໍ່ສູ້ຕ້ານການລັກລອບຄ້າຂາຍສັດປ່າໄດ້ຮັບການຈັດສັນທຶນໜ້ອຍຫຼາຍ:

ບັນດາແຜນງານຕ່າງໆທີ່ເນັ້ນໜັກໃສ່ການຕໍ່ສູ້ຕ້ານການລັກລອບຄ້າຂາຍສັດປ່ານັ້ນສ່ວນຫຼາຍມັກໄດ້ຮັບການປະຕິບັດເປັນແຜນງານທີ່ມີບູລິມະສິດຕ່ຳ ແລະ ໄດ້ຮັບການຈັດສັນທຶນໜ້ອຍ. "ຄວາມເອົາໃຈໃສ່ຈາກຜູ້ກຳນົດນະໂຍບາຍຕໍ່ເສດຖະກິດທີ່ຜິດກົດໝາຍ ແລະ ພາກລາຍຈ່າຍດ້ານຊັບພະຍາກອນເພື່ອຕ້ານການກະທຳຜິດແມ່ນເປັນໄປຕາມໄພຄຸກຄາມຕໍ່ເສດຖະກິດດັ່ງກ່າວຕາມຄວາມເຊື່ອທີ່ຜ່ານມາ. ສິ່ງນີ້ຈຶ່ງເປັນເຫດຜົນຍ້ອນຫຍັງ ການສະໜອງທຶນເພື່ອຕ້ານການລັກລອບຄ້າຂາຍຢາເສບຕິດຈຶ່ງມີຫຼາຍກວ່າການຕ້ານການລັກລອບຄ້າຂາຍສັດປ່າ."[5] ປັດໃຈເພີ່ມເຕີມທີ່ພາໃຫ້ເກີດການຈັດສັນທຶນ

ທີ່ມີໜ້ອຍແກ່ແຜນງານດັ່ງກ່າວແມ່ນຍ້ອນມີຫຼາຍປະເທດທີ່ການລັກລອບຄ້າຂາຍສັດປ່າແມ່ນຍັງພວມພັດທະນາທາງເສດຖະກິດ. ຈາກຜົນດັ່ງກ່າວ, ການກະທຳຜິດອື່ນໆຈຶ່ງເປັນບູລິມະສິດຫຼາຍກວ່າການກະທຳຜິດຕໍ່ສັດປ່າ. "ເມື່ອປະເທດເອງຍັງຍາກທີ່ຈະຢູ່ລອດ ຫຼື ກຳລັງພັດທະນາທ່າແຮງທາງເສດຖະກິດຂອງຕົນຢູ່, ການປົກປ້ອງສິ່ງແວດລ້ອມ ແລະ ສັດປ່າໃນປະເທດຈຶ່ງບໍ່ຄ່ອຍໄດ້ຮັບບູລິມະສິດ. ນີ້ແມ່ນບັນຫາພື້ນຖານເພື່ອການຈັດຝຶກອົບຮົມໃຫ້ພະນັກງານ, ສ້າງເຄືອຂ່າຍບັງຄັບໃຊ້ກົດໝາຍ, ຕິດຕາມ ແລະ ປະເມີນຜົນ, ຊຶ່ງທັງໝົດນີ້ລ້ວນແຕ່ຕ້ອງການທຶນ."[6]

ເຖິງຢ່າງໃດກໍ່ຕາມ, ບັນຫາທີ່ສຳຄັນຢູ່ປະເທດທີ່ກຳລັງພັດທະນາແມ່ນການພິຈາລະນາຈັດສັນທຶນໃຫ້ແຜນງານ ທີ່ເປັນຕົ້ນທຶນຈາກແຫຼ່ງພາຍນອກຂອງການລັກລອບຄ້າຂາຍສັດປ່າ. "ອາດຊະຍາກຳສັດປ່າເປັນການກະທຳຜິດທີ່ຮຸນແຮງມີຜົນຕໍ່ສະພາບແວດລ້ອມດ້ານລົບລວມທັງຄວາມເຊື່ອມໂຊມຂອງປ່າ ແລະ ສັດປ່າ, ແລະ ຕົ້ນທຶນຂອງການສ້າງບ້ານ ແລະ ເອົາໃຈໃສ່ສັດປ່າທີ່ໄດ້ຊ່ວຍຊີວິດມາ, ການຟື້ນຟູ ແລະ ການຮັກສາສັດປ່າ, ແລະຫຼື ແຫຼ່ງທີ່ຢູ່ອາໄສຂອງສັດໃນປ່າ. ຕົ້ນທຶນທີ່ເປັນຜົນກະທົບຕໍ່ລັດຖະບານ: ເງິນສຳລັບສູນຊ່ວຍຊີວິດສັດປ່າ, ສຳລັບພົນລະເມືອງທີ່ອາດສູນເສຍພືດພັນ ຫຼື ລາຍຮັບ, ແລະ ຕໍ່ສັງຄົມໂດຍລວມທີ່ເປັນຜົນຈາກການປ່ຽນແປງຂອງລະບົບນິເວດ-ຈາກການລະບາດຂອງພະຍາດ."[7] ສະພາບພາຍນອກນີ້ຈະຕ້ອງນຳມາພິຈາລະນາທາງໃນດ້ານການກຳນົດໂທດທີ່ເໝາະສົມໃຫ້ອາດຊະຍາກອນສັດປ່າ ແຕ່ຍັງພິຈາລະນາການຈັດສັນທຶນສຳລັບແຜນງານປົກປ້ອງ ແລະ ຟື້ນຟູສັດປ່າ.

## ຄ. ການກຳນົດໂທດທີ່ເບົາ ແລະ ບໍ່ເໝາະສົມກັບຜົນກະທົບທີ່ເກີດຂຶ້ນ:

ໃນຫຼາຍກໍລະນີ, ມີຫຼາຍປະເທດໄດ້ວາງໂທດທີ່ມີຂໍ້ຈຳກັດຈົນໄປຮອດການວາງໂທດທີ່ມີການເຈລະຈາທາງເສດຖະກິດໄດ້ສຳລັບອາດຊະຍາກຳສັດປ່າ, ແລະ ຜູ້ຖືກຫາເຂົ້າມາຢູ່ໃນລະບົບຄວາມຍຸຕິທຳນັ້ນສ່ວນຫຼາຍເປັນນາຍພານ ຫຼື ຜູ້ຂົນສົ່ງທີ່ຢູ່ລະດັບຕ່ຳ, ບໍ່ແມ່ນຫົວໜ້າ ຫຼື ຜູ້ສະໜອງທຶນໃຫ້ກັບເຄືອຂ່າຍອາດຊະຍາກຳນີ້.[8] ຄ່າປັບໄໝທີ່ຕ່ຳໄດ້ວາງໃຫ້ເຄືອຂ່າຍລັກລອບຄ້າຂາຍສັດປ່າສ່ວນຫຼາຍເປັນ ຕົ້ນທຶນການດຳເນີນທຸລະກິດ, ຕົ້ນທຶນທີ່ເຂົາສາມາດເກັບຈາກຜູ້ບໍລິໂພກ ແລະ ເປັນພຽງການຈ່າຍຊົ່ວຄາວ (ຖ້າບໍ່ຈ່າຍທັງໝົດ). ສິ່ງນີ້ເປັນຍ້ອນສັດປ່າ ແລະ ຊັບສິນທີ່ກ່ຽວຂ້ອງຖືກຍຶດໂດຍລັດຖະບານ ສ່ວນຫຼາຍມັກຈະຖືກປ່ຽນບ່ອນທັນທີ ແລະ ມູນຄ່າຂອງຄ່າປັບໄໝສ່ວນຫຼາຍຈະໜ້ອຍກວ່າຜົນກຳໄລທີ່ຜູ້ກະທຳຜິດສາມາດສ້າງໄດ້.[9] "ມາຮອດປະຈຸບັນ, ມີພຽງຜົນກະທົບດ້ານໜ້ອຍ ຫຼື ບໍ່ມີຜົນທາງເສດຖະກິດຕໍ່ຜູ້ທີ່ກ່ຽວຂ້ອງໃນການສະໜອງ ແລະ ຕ້ອງການໆລັກລອບຄ້າຂາຍສັດປ່າ. ບັນດາປະເທດທີ່ວາງໂທດດ້ານເສດຖະກິດຕິດພັນກັບອາດຊະຍາກຳນັ້ນໄດ້ຈຳກັດບົດລົງໂທດໄວ້ສະເພາະການຮິບ ແລະ ການຍຶດສັດປ່າ ຫຼື ຊິ້ນສ່ວນສັດປ່າ-ບໍ່ແມ່ນການເງິນຂອງອາດຊະຍາກຳ. ຈາກປະສົບການໃນການຕ້ານການລັກລອບຄ້າຂາຍຢາເສບຕິດ, ການຍຶດຢາເສບຕິດພ້ອມທັງການກິດຂອງອົງການຄ້າຢາ ແມ່ນຊົ່ວຄາວ ແລະ ປ່ຽນບ່ອນຢ່າງໄວ. ຢ່າງໃດກໍ່ຕາມ, ການທັບມ້າງໂຄງລ່າງພື້ນຖານທາງການເງິນ ແລະ ຄວາມຮັ່ງມີຂອງອົງການດັ່ງກ່າວພາໃຫ້ເກີດຄວາມລຳບາກຕໍ່ຄວາມສາມາດຂອງເຂົາໃນການເຮັດສິ່ງຜິດກົດໝາຍ ແລະ ພາໃຫ້ອ່ອນແອ ແລະ ພາໃຫ້ເປີດເຜີຍຕົວຕົນຂອງ



ໜໍ່ແຮດທີ່ຍຶດໄດ້ໃນລະຫວ່າງພາລະກິດ ໂຄບລາ (2013). ຄ່າປັບໄໝທີ່ກຳນົດຕໍ່ຜູ້ລັກລອບມີຈຳນວນມູນຄ່າໜ້ອຍຫຼາຍເມື່ອທຽບໃສ່ມູນຄ່າຕົວຈິງຂອງໜໍ່ແຮດ, ແລະ ສະນັ້ນ ຈຶ່ງເຮັດໃຫ້ຄ່າປັບໄໝບໍ່ມີບັນຫາສຳລັບຜູ້ລັກລອບ. ອົງການຟີແລນ

ເຂົາແກ່ພາລະກິດຂອງເຈົ້າໜ້າທີ່ບັງຄັບໃຊ້ກົດໝາຍ."[10]

## ຂີດຄວາມສາມາດຂອງເຈົ້າໜ້າທີ່ບັງຄັບໃຊ້ກົດໝາຍ:

ວຽກຂອງເຈົ້າໜ້າທີ່ບັງຄັບໃຊ້ກົດໝາຍແມ່ນພາລະໜ້າທີ່ອັນຈຳເປັນໃນທຸກຂະບວນການສືບສວນສອບສວນ-"ຈາກການສືບສວນເບື້ອງຕົ້ນ ທີ່ຮັບປະກັນສະຖານທີ່ຂອງການກະທຳຜິດ ຫຼື ການເຂົ້າຍຶດ,ໄປຈົນຮອດການພັດທະນາຂໍ້ມູນນຳໄປສູ່ການສືບສວນສອບສວນ, ແລະ ສືບຕໍ່ຜ່ານການຄຸ້ມຄອງສຳນວນຄະດີ, ການຟ້ອງຢູ່ສານ, ການຕັດສິນຄະດີ ແລະ ອາດເປັນການຟື້ນຟູຊັບສິນ".[11] ຈະຢ່າງໃດກໍ່ຕາມ, ໃນຫຼາຍປີ, ຜູ້ລັກລອບຄ້າຂາຍສັດປ່າໄດ້ປັບຕົວໄປເປັນອາດຊະຍາກຳທີ່ມີການຈັດຕັ້ງຊັບຊ້ອນ ມີຄວາມສາມາດຢູ່ໃນທ່າໄດ້ປຽບຂອງຊ່ອງວ່າງທາງກົດໝາຍ, ການບັງຄັບໃຊ້ກົດໝາຍທີ່ອ່ອນ ແລະ ລະບົບຄວາມຍຸຕິທຳທີ່ບອບບາງ.[12] "ການນຳໃຊ້ເຄືອຂ່າຍນາຍພານທີ່ຊັບຊ້ອນ, ຜູ້ລັກລອບຕັດໄມ້, ຄົນກາງ, ເຄືອຂ່າຍຂອງຜູ້ລັກລອບ, ຜູ້ຂົນສົ່ງ ແລະ ພໍ່ຄ້າ, ກຸ່ມອາດຊະຍາກອນນີ້ (ສາມາດຄຸ້ມຄອງ) ຢູ່ເໜືອກົດໝາຍກ່ອນກ້າວໜຶ່ງສະເໝີ."[13]

ໃນການຈັດຕັ້ງປະຕິບັດຕົວຈິງ, "ເຈົ້າໜ້າທີ່ບັງຄັບໃຊ້ກົດໝາຍ ແລະ ເຈົ້າໜ້າທີ່ຮັບຜິດຊອບປ້ອງກັນຊາຍແດນຈາກຂະບວນການລັກລອບຄ້າຂາຍສັດປ່າ ແລະ ອາດຊະຍາກອນອື່ນໆ ສ່ວນຫຼາຍບໍ່ຮູ້ວິທີ ແລະ ເຕັກນິກທີ່ອາດຊະຍາກອນໃຊ້, ແລະ ຂາດທັກສະ ແລະ ຊັບພະຍາກອນທີ່ຈຳເປັນໃນການສືບສວນທາງການເງິນ."[14] ຈາກສາເຫດດັ່ງກ່າວ, ຄວາມພະຍາຍາມໃນທົ່ວໂລກຊຸມປີຜ່ານມາໄດ້ເນັ້ນໃສ່ການເຝິກອົບຮົມໃຫ້ໜ່ວຍງານບັງຄັບໃຊ້ກົດໝາຍໃນທ້ອງຖິ່ນ, ການແລກປ່ຽນຂໍ້ມູນຂ່າວສານລະຫວ່າງໜ່ວຍງານ ແລະ ພາກສ່ວນຕຸລາການ, ແລະ ເພີ່ມທະວີຂີດຄວາມສາມາດໃນການສືບສວນສອບສວນ ແລະ ການວິເຄາະຄະດີ, ເພື່ອຮັບປະກັນການຈັບກຸມ ແລະ

ການລົງໂທດບໍ່ສະເພາະພຽງແຕ່ກັບຜູ້ທີ່ກ່ຽວຂ້ອງໂດຍກົງແຕ່ຍັງຕໍ່ການລົງໂທດອາດຊະຍາກອນໃນລະດັບສູງໄປອີກດ້ວຍ.

## ໆ. ເພີ່ມທະວີຄວາມສ່ຽງທາງການເງິນໃຫ້ຜູ້ລັກລອບຄ້າຂາຍສັດປ່າ:

ອາດຊະຍາກຳສັດປ່າເປັນສາເຫດພາໃຫ້ເກີດຜົນເສຍຫາຍຢ່າງກວ້າງຂວາງຕໍ່ສິ່ງແວດລ້ອມ ແລະ ຄຸກຄາມຊີວິດມະນຸດ ແລະ ຄວາມປອດໄພຂອງຊຸມຊົນທີ່ຢູ່ອ້ອມຂ້າງ. ແຕ່ໃນການກຳນົດຜູ້ຖືກເຄາະຮ້າຍທີ່ແທດເໝາະ (ພ້ອມສິດທິພາຍໃຕ້ກົດໝາຍ) ສາມາດເປັນສິ່ງທ້າທາຍ ແລະ ສ້າງຜົນກະທົບ ຫຼື ຄວາມເສຍຫາຍທີ່ຍາກໃນການກຳນົດຈຳນວນ. ຍ້ອນບັນຫາດັ່ງກ່າວ, ຜົນເສຍຫາຍຈຶ່ງບໍ່ມີການຊົດເຊີຍຈາກການກຳນົດໂທດແບບທົ່ວໄປທີ່ເປັນການປັບໄໝ ຫຼື ການຕັດອິດສະຫຼະພາບ. ໂດຍປາດສະຈາກການກຳນົດໂທດທີ່ມີຄວາມສຳຄັນເພີ່ມນັ້ນ, ສິ່ງຈູງໃຈໃຫ້ກັບອາດຊະຍາກອນສັດປ່າຈະຍັງສືບຕໍ່ເພີ່ມຂຶ້ນ ແລະ ມີຄວາມສ່ຽງຕ່ຳໃຫ້ຜູ້ກະທຳຜິດ.

ພວກເຮົາຕ້ອງການເພີ່ມຄວາມສ່ຽງຕໍ່ການລັກລອບຄ້າຂາຍສັດປ່າໂດຍການກຳນົດໂທດທີ່ໜັກຂຶ້ນກວ່າເກົ່າ ທີ່ແທດເໝາະກັບການກະທຳທີ່ສ້າງຜົນເສຍຫາຍ. ເງິນ/ຊັບສິນທີ່ຟື້ນຟູໄດ້ຈາກຄວາມຮັ່ງມີຂອງຜູ້ລັກລອບຄ້າຂາຍສັດປ່າສາມາດຖືກນຳມາໃຊ້ເພື່ອຈ່າຍໃຫ້ການປົກປັກຮັກສາ ແລະ ຟື້ນຟູສັດປ່າ, ສະນັ້ນ ເຮັດໃຫ້ຜູ້ລັກລອບຄ້າຂາຍສັດປ່າເປັນຜູ້ຈ່າຍໃຫ້ແກ່ການປົກປ້ອງສັດປ່າ.

# ຍຸດທະສາດແບບໃໝ່ເພື່ອທັບມ້າງໂຄງລ່າງພື້ນຖານການເງິນຂອງອາດຊະຍາກອນສັດປ່າ: ການຊົດເຊີຍ

ໃນໄລຍະຊຸມປີທີ່ຜ່ານມາ, ບັນດາລັດຖະບານ ແລະ ກຸ່ມຕໍ່ຕ້ານການລັກລອບຄ້າຂາຍສັດປ່າໄດ້ພິຈາລະນາ ຫຼື ລິເລີ່ມບັນດາຍຸດທະສາດທີ່ແຕກຕ່າງກັນສຸມໃສ່ ແກ້ໄຂຄວາມເປັນຫ່ວງ ສອງດ້ານໃນການຕໍ່ສູ້ຕ້ານການລັກລອບຄື: 1) ການຈັດຕັ້ງປະຕິບັດໂທດທີ່ເປັນສາເຫດພາໃຫ້ເກີດຜົນເສຍຫາຍທາງເສດຖະກິດຫຼາຍຕໍ່ຜູ້ກະທຳຜິດໃນຄະດີລັກລອບຄ້າຂາຍສັດປ່າ; ແລະ 2) ນຳໃຊ້ທຶນ ຫຼື ຊັບສິນທີ່ຟື້ນຟູໄດ້ນັ້ນເພື່ອຊຸກຍູ້ ຫຼື ຊົດເຊີຍຕົ້ນທຶນທີ່ເກີດຈາກການປົກປັກຮັກສາ ແລະ ຟື້ນຟູສັດປ່າ. ຍຸດທະສາດໜຶ່ງທີ່ຊ່ວຍແກ້ຄວາມເປັນຫ່ວງທັງສອງດ້ານນີ້ ແລະ ມີບົດຮຽນປະສົບຄວາມສຳເລັດໃນບາງລະບົບຕຸລາການແມ່ນການຈັດຕັ້ງປະຕິບັດແຜນງານການຊົດເຊີຍສຳລັບອາດຊະຍາກຳສັດປ່າ ຄຽງຄູ່ໄປພ້ອມກັບການກຳນົດໂທດແບບທົ່ວໄປ.

## ກ. ການແນະນຳແຜນງານການຊົດເຊີຍ:

ການຊົດເຊີຍຖືກໃຊ້ທົ່ວໄປຄືກັບ ການຊົດເຊີຍທາງແພ່ງ ທີ່ອອກແບບມາເພື່ອກັນຜູ້ກະທຳຜິດຈາກການຮັກສາໄວ້ຜົນປະໂຫຍດທີ່ໄດ້ມາຈາກການເຮັດຜິດກົດໝາຍຕໍ່ ຜູ້ຖືກເຄາະຮ້າຍ; ແລະ ເຮັດໃຫ້ຜູ້ຖືກເຄາະຮ້າຍຮັບຜົນເສຍຫາຍຕະຫຼອດການກະທຳຜິດທັງໝົດ.[15] ໃນກໍລະນີຂອງອາດຊະຍາກຳສິ່ງແວດລ້ອມ ຫຼື ສັດປ່າ, ການຊົດເຊີຍອາດເປັນກົນໄກທີ່ເໝາະສົມສຳລັບ: 1) ຮຽກຮ້ອງໃຫ້ຈຳເລີຍຊົດໃຊ້ຄ່າເສຍຫາຍແກ່ບຸກຄົນທີສາມທີ່ຕິດພັນກັບຜົນເສຍຫາຍເກີດຈາກການກະທຳຜິດຂອງຈຳເລີຍ; ຫຼື 2) ຮຽກຮ້ອງໃຫ້ຈຳເລີຍຟື້ນຟູສ່ວນໃດໜຶ່ງຂອງສິ່ງແວດລ້ອມທີ່ຖືກກະທົບຕົວຈິງຈາກການກະທຳຜິດດັ່ງກ່າວ.[16]

ກົດໝາຍວ່າດ້ວຍ ການຊົດເຊີຍເນັ້ນໃສ່ແກ້ໄຂບັນຫາຄວາມຮັ່ງມີຂອງຈຳເລີຍທີ່ສາມາດຊຳລະຄ່າເສຍຫາຍທີ່ເປັນລາຍຈ່າຍຂອງຜູ້ຮ້ອງຂໍ, ໂດຍຟື້ນຟູຄືນຜົນກຳໄລທີ່ກ່ຽວຂ້ອງ ຫຼື ເຮັດໃຫ້ຜູ້ຟ້ອງຮ້ອງໄດ້ຮັບປະໂຫຍດ.

ໃນຄວາມໝາຍທີ່ກວ້າງອອກ, ຜູ້ຟ້ອງຮ້ອງທີ່ຍື່ນຄຳຮ້ອງເພື່ອການຊົດເຊີຍຈະຕ້ອງຍົກໃຫ້ເຫັນສາມອົງປະກອບຫຼັກຄື:



ລັດຖະບານໄດ້ທ້ອນໂຮມງາຊ້າງ. ບັນດານັກລົງທຶນທີ່ກ່ຽວຂ້ອງກັບການຄ້າຂາຍສັດປ່າທີ່ຜິດກົດໝາຍກຳລັງຊອກຫາງາຊ້າງ ແລະ ໜໍ່ແຮດ ພ້ອມທັງຜະລິດຕະພັນອື່ນໆທີ່ກ່ຽວຂ້ອງເພື່ອເປັນການຊຸກຍູ້ການລົງທຶນໃນອານາຄົດ. ພວກເຂົາກຳລັງສະສົມສາຍພັນສັດທີ່ກຳລັງຈະສູນພັນເພື່ອພະຍາຍາມໃຫ້ໄດ້ຜົນຕອບແທນຈາກການລົງທຶນຂອງຕົນ. ອົງການຟີແລນ




ເຈົ້າໜ້າທີ່ແຫ່ງລາດຊະອານາຈັກໄທ ໄດ້ຖະແຫຼງຂ່າວໃນກອງປະຊຸມສື່ມວນຊົນທີ່ສະໜາມບິນສຸວັນນະພູມ, ບາງກອກ, ເດືອນມັງກອນ 2018, ບອກໃຫ້ຮູ້ເຖິງການຈັບກຸມຫົວໜ້າກຸ່ມລັກລອບຄ້າຂາຍສັດປ່າທີ່ຕົກເປັນຜູ້ຖືກຫາ, ບຸນໄຊແບັກ. ອີງການຟີແລນ.

- ຈຳເລີຍໄດ້ຮັບຜົນປະໂຫຍດ ຫຼື ໄດ້ຮັບຜົນກຳໄລ;
- ຜົນປະໂຫຍດທີ່ຈຳເລີຍໄດ້ມາແມ່ນຜິດກົດໝາຍ; ແລະ
- ຜົນປະໂຫຍດທີ່ຈຳເລີຍໄດ້ມາແມ່ນເກີດຈາກລາຍຈ່າຍຂອງຜູ້ຟ້ອງຮ້ອງ.[18]

ໃນທາງກົງກັນຂ້າມກັບຄ່າປັບໄໝ, ຊຶ່ງໂດຍທົ່ວໄປກຳນົດເພື່ອຈຸດປະສົງລົງໂທດຈຳເລີຍສຳລັບການລະເມີດກົດໝາຍ, ແຕ່ການຊົດເຊີຍຖືກພິຈາລະນາເປັນການຊົດເຊີຍທີ່ມີຄວາມຍຸຕິທຳ ແລະ ອາດກຳນົດເພື່ອຟື້ນຟູຜູ້ຖືກເຄາະຮ້າຍໃຫ້ກັບຄືນໄປສູ່ ສະຖານະພາບກ່ອນການກະທຳຜິດຂອງຈຳເລີຍ, ແລະ ການຊົດເຊີຍຜູ້ຖືກເຄາະຮ້າຍກ່ອນການກະທຳຜິດ ແລະ ຊົດເຊີຍໃຫ້ລາວຜູ້ທີ່ຖືກເຄາະຮ້າຍທັງໝົດ.[19] ດ້ວຍເຫດຜົນນີ້ ການຟື້ນຟູສ່ວນຫຼາຍຖືກໃຊ້ໃນກໍລະນີຂອງຂີ້ລັກ ຫຼື ການຫຼອກລວງ, ຊຶ່ງການຊົດເຊີຍໃຫ້ຜູ້ຖືກເຄາະຮ້າຍແມ່ນຊັດເຈນ-ຈຳເລີຍສົ່ງຄືນເງິນທີ່ລັກໄປ ແລະ ຊົດເຊີຍໃຫ້ກັບໜ່ວຍງານລັດ/ມະຫາຊົນຈາກການກະທຳຜິດ (ແລະ ອາດຮັບໂທດອື່ນໆພ້ອມ).

ຢ່າງໃດກໍ່ຕາມ, ການຊົດເຊີຍຍັງຖືກໃຊ້ເພື່ອແກ້ໄຂຄະດີອາດຊະຍາກຳສິ່ງແວດລ້ອມ ແລະ ໃນບາງຄະດີທີ່ບໍ່ມັກເກີດຂຶ້ນ, ອາດຊະຍາກຳລັກລອບຄ້າຂາຍສັດປ່າ. ໃນກໍລະນີເຫຼົ່ານີ້, ອາດຊະຍາກອນສິ່ງແວດລ້ອມ ຫຼື ຜູ້ລັກລອບຄ້າຂາຍສັດປ່າໄດ້ຖືກຮຽກຮ້ອງໃຫ້ຊົດເຊີຍຜົນເສຍຫາຍເກີດຈາກການໄດ້ຮັບຜົນປະໂຫຍດທີ່ຜິດກົດໝາຍ, ໂດຍທົ່ວໄປຈະໃຫ້ສະໜອງທຶນແກ່ການປົກປັກຮັກສາ ຫຼື ການຟື້ນຟູສິ່ງແວດລ້ອມ ແລະ ສັດປ່າ.

ເຫດຜົນທີ່ຢູ່ເບື້ອງຫຼັງມາດຕະການນີ້ແມ່ນ "ຜົນເສຍຫາຍຕໍ່ສິ່ງແວດລ້ອມໂດຍການກະທຳຜິດນັ້ນບໍ່ສາມາດຊົດເຊີຍໄດ້ທັງໝົດເພື່ອການຟື້ນຟູສິ່ງແວດລ້ອມທີ່ຖືກກະທົບດັ່ງກ່າວ. ສິ່ງແວດລ້ອມອາດຖືກກະທົບຢ່າງໜັກໜ່ວງ ຊຶ່ງໃນພາກປະຕິບັດແລ້ວ ມັນບໍ່ສາມາດຟື້ນຟູໃຫ້ຄືນສູ່ສະພາບທີ່ເຄີຍເປັນມາກ່ອນການກະທຳຜິດ. ປະເພດຂອງຜົນເສຍຫາຍຕໍ່ສິ່ງແວດລ້ອມທີ່ອາດຕ້ອງການຄ່າຊົດເຊີຍຈາກຜູ້ກະທຳຜິດ ຫຼື ຈ່າຍໃຫ້ກັບບຸກຄົນອື່ນ, ໂຄງການເພື່ອການຟື້ນຟູ ຫຼື ສົ່ງເສີມສິ່ງແວດລ້ອມຢູ່ບ່ອນອື່ນເພື່ອໃຫ້ທີ່ຢູ່ອາໄສແກ່ສັດປ່າ."[20] ວິທີແກ້ໄຂທີ່ຄ້າຍຄືກັນສາມາດເຮັດໄດ້ຕາມຂໍ້ຫາຂອງຜູ້ກະທຳຜິດໃນການລັກລອບຄ້າຂາຍສັດປ່າ ຊຶ່ງການຊົດເຊີຍຈະນຳໄປສູ່ການຟື້ນຟູ ຫຼື ປົກປ້ອງແຫຼ່ງທີ່ຢູ່ອາໄສຂອງສັດທີ່ເປັນສາຍພັນຖືກລັກລອບຄ້າຂາຍນັ້ນ.

ການຊົດເຊີຍແມ່ນມີຈຸດປະສົງເພື່ອໃຊ້ເປັນມາດຕະການເສີມ ແລະ ບໍ່ໄດ້ບັນຈຸໃນຂໍ້ກຳນົດໂທດທົ່ວໄປອື່ນໆ. ອີງຕາມກະຊວງຍຸຕິທຳຂອງສະຫະລັດທີ່ມີບົດແນະນຳການຕັດສິນພາຍໃນ, "ຕາບໃດກໍ່ຕາມທີ່ການຊຳລະຄ່າປັບໄໝບໍ່ໄດ້ເປັນອຸປະສັກເຮັດໃຫ້ຈຳເລີຍຕ້ອງຊົດເຊີຍຜູ້ຖືກເຄາະຮ້າຍຈາກການກະທຳຜິດ, ໄອຍະການຍາມໃດກໍ່ຄວນຄົ້ນຄວ້າການຈ່າຍຄ່າປັບໄໝຂຶ້ນກັບຄວາມຮຸນແຮງຂອງການກະທຳຜິດ ແລະ ປັດໃຈອື່ນໆອີກ."[21]

## ຂ. ບັນຫາດ້ານກົດໝາຍ:

ໃນລະບົບຍຸຕິທຳສ່ວນຫຼາຍ, ການຊົດເຊີຍຍັງບໍ່ຖືເປັນກົນໄກການແກ້ໄຂບັນຫາທີ່ໃຊ້ກັບຄະດີລັກລອບຄ້າຂາຍສັດປ່າ ຫຼື ສິ່ງແວດລ້ອມ. ໃນນີ້ມີບັນຫາດ້ານກົດໝາຍຫຼາຍຢ່າງທີ່ນຳມາໃຊ້ກັບວິທີແກ້ໄຂບັນຫາແບບນີ້ເຊັ່ນ:

> **ຕໍ່ກັບສະພາບການລະບາດ ຂອງ ໂຄວິດ-19 ທີ່ພວກເຮົາກຳລັງປະເຊີນຢູ່ ແລະ ສາຍພົວພັນທີ່ເກີດຂຶ້ນລະຫວ່າງການບໍລິໂພກສັດປ່າທີ່ຖືກລັກລອບ ແລະ ການເສຍຊີວິດຂອງມະນຸດ,[27] ມັນອາດງ່າຍຂຶ້ນກວ່າເກົ່າທີ່ຈະຕິດຕາມອັນຕະລາຍຂອງການລັກລອບສັດປ່າທີ່ກະທົບກັບຜູ້ຖືກເຄາະຮ້າຍທີ່ເປັນມະນຸດ ແລະ ກຳນົດຈຳນວນຂອງຜົນກະທົບດັ່ງກ່າວໂດຍອີງໃສ່ຕົວເລກຂອງຊີວິດມະນຸດທີ່ເສຍໄປ, ຜົນເສຍຫາຍຕໍ່ທຸລະກິດ, ການຢຸດດຳເນີນງານຂອງອຸດສາຫະກຳຕ່າງໆ ແລະ ມູນຄ່າເງິນຫຼາຍຕື້ທີ່ຈ່າຍໃນການຮັກສາທາງການແພດທີ່ເກີດຈາກ ໂຄວິດ-19.**

## 1) ພື້ນຖານທາງກົດໝາຍ:

ເພື່ອນຳໃຊ້ໃຫ້ຖືກຕາມກົດໝາຍ, ການຊົດເຊີຍອາດຕ້ອງການກອບວຽກທາງນິຕິກຳສະເພາະດ້ານເພື່ອເປັນວິທີແກ້ໄຂທີ່ເປັນໄປໄດ້ສຳລັບການກະທຳຜິດທີ່ກ່ຽວຂ້ອງ. ສິ່ງນີ້ໝາຍຄວາມວ່າ ນິຕິກຳທາງຄະດີອາຍາ ແລະ/ຫຼື ບົດແນະນຳການຕັດສິນທີ່ກ່ຽວຂ້ອງອາດຈຳເປັນຕ້ອງມີການປັບປຸງເພື່ອບັນຈຸເອົາການຊົດເຊີຍທີ່ເປັນມາດຕະການກັບຈຳເລີຍ. ສຳລັບອາດຊະຍາກຳລັກລອບຄ້າຂາຍສັດປ່າ, ໃນລະບົບຍຸຕິທຳສ່ວນຫຼາຍ, ສິ່ງນີ້ຍັງບໍ່ຖືເປັນຄະດີກະທຳຜິດໃນປະຈຸບັນ.

## 2) ການກຳນົດຜູ້ຖືກເຄາະຮ້າຍທີ່ເໝາະສົມ:

ການຊົດເຊີຍແມ່ນກ່ຽວກັບຜູ້ຖືກເຄາະຮ້າຍທັງໝົດແຕ່ ຜູ້ທີ່ເປັນຜູ້ຖືກເຄາະຮ້າຍໃນຄະດີລັກລອບຄ້າຂາຍສັດປ່າ ແລະ ບຸກຄົນ ຫຼື ພາກສ່ວນດັ່ງກ່າວມີສິດທາງກົດໝາຍທີ່ຈະໄດ້ຮັບຄ່າຊົດເຊີຍ ຫຼື ບໍ່? ປັດໃຈທີ່ນຳມາພິຈາລະນາຢ່າງສົມເຫດຜົນທີ່ສຸດອາດແມ່ນຜູ້ຖືກເຄາະຮ້າຍທີ່ເປັນສັດປ່າເອງ ແຕ່ເຖິງວ່າ ສັດປ່າຈະຍັງມີຊີວິດກໍ່ຕາມ, ມັນກໍ່ບໍ່ອາດສາມາດຮັບເອົາຄ່າຊົດເຊີຍໂດຍກົງໄດ້. ຍ້ອນແນວນັ້ນ ເມື່ອການຊົດເຊີຍຖືກນຳໃຊ້ກັບຄະດີອາດຊະຍາກຳຕໍ່ສັດປ່າ, ພາກສ່ວນທີ່ສາມາດສະແດງໃຫ້ເຫັນເຖິງຜົນເສຍຫາຍແຕ່ເປັນຜູ້ຖືກກະທົບໂດຍທາງອ້ອມຫຼາຍກວ່ານັ້ນ ມັກອາດໄດ້ຮັບການພິຈາລະນາເປັນຜູ້ຖືກເຄາະຮ້າຍ.22 ຕົວຢ່າງ: ໃນຄະດີລັກລອບຄ້າຂາຍສັດປ່າທີ່ມີການຟ້ອງຮ້ອງໂດຍກະຊວງຍຸຕິທຳ (ຫຼື ອົງການບໍລິຫານທີ່ທຽບເທົ່າ) ຂອງລັດຖະບານມີລາຍລະອຽດດັ່ງລຸ່ມນີ້:

- ພາກລັດຂັ້ນສູນກາງ (ຫຼື ທ້ອງຖິ່ນ) ຢູ່ບ່ອນທີ່ສັດປ່າໄດ້ຖືກພົບເກີດຈາກການລັກລອບ ອາດຟ້ອງຮ້ອງໃຫ້ມີການຊົດເຊີຍແກ່ອົງການລັດບົນພື້ນຖານເຫດຜົນທີ່ ພາກລັດດັ່ງກ່າວໄດ້ໃຊ້ຊັບພະຍາກອນໃນການສືບສວນສອບສວນ ແລະ ດຳເນີນຄະດີ;
- ພາກລັດ ຫຼື ພົນລະເມືອງຂອງຕ່າງປະເທດທີ່ຢູ່ໃນປະເທດທີ່ເກີດມີການລັກລອບ ອາດຟ້ອງຮ້ອງໃຫ້ມີການຊົດເຊີຍແກ່ເຂົາເຈົ້າບົນພື້ນຖານເຫດຜົນທີ່ ການລັກລອບຄ້າຂາຍສັດປ່າດັ່ງກ່າວເປັນອັນຕະລາຍຕໍ່ສິ່ງແວດລ້ອມ, ວັດທະນະທຳ ຫຼື ມໍລະດົກທີ່ເປັນຊັບພະຍາກອນຂອງເຂົາເຈົ້າ;
- ອົງການຈັດຕັ້ງອານຸລັກສັດປ່າທີ່ເຮັດວຽກປົກປັກຮັກສາສັດປ່າອາດຟ້ອງຮ້ອງໃຫ້ມີການຊົດເຊີຍບົນພື້ນຖານເຫດຜົນທີ່ອົງການ

### ສົມທຽບການກະຕຸ້ນທາງເສດຖະກິດເພື່ອຮັບມືກັບພະຍາດໂຄໂລນາໄວລັດ

ການຮັບມືດ້ານການເງິນຕໍ່ຜົນກະທົບຈາກການລະບາດຂອງໂຄວິດ-19 ຕາມສ່ວນແບ່ງຂອງຈີດີພີ (ປະເທດທີ່ຄັດເລືອກ) *




* As of May 10, 2020     Source: Ceyhun Elgin

ການຈ່າຍຄ່າປະກັນຕົວໃນບັນດາປະເທດທົ່ວໂລກ. ຕົ້ນທຶນຈາກຜົນກະທົບຂອງ ໂຄວິດ-19 ທີ່ລັດຖະບານຕ່າງໆໄດ້ຈ່າຍໄປແມ່ນມະຫາສານ. ທຶນບາງສ່ວນສາມາດຈັດສັນຄືນໃຫ້ບັນດາໂຄງການທີ່ເນັ້ນໜັກໃສ່ການຢຸດຕິໂລກລະບາດເພື່ອແກ້ໄຂບັນຫາຊົ່ວຄາວ. 10/05/2020 ເຄຮັນ ເອວກິນ.

ຈັດຕັ້ງດັ່ງກ່າວຈໍາເປັນຕ້ອງນໍາໃຊ້ຊັບພະຍາກອນເພີ່ມເຕີມເພື່ອຟື້ນຟູຈໍານວນປະຊາກອນຂອງພັນສັດທີ່ຖືກກະທົບ;

- ອົງການຈັດຕັ້ງທາງສັງຄົມທີ່ຊ່ວຍຊຸກຍູ້ວຽກງານຂອງໜ່ວຍງານບັງຄັບໃຊ້ກົດໝາຍ ອາດຟ້ອງຮ້ອງຄ່າຊົດເຊີຍບົນພື້ນຖານທີ່ອົງການດັ່ງກ່າວໄດ້ນໍາໃຊ້ຊັບພະຍາກອນເພື່ອຊ່ວຍໃນການສືບສວນ ແລະ ດໍາເນີນຄະດີກັບຜູ້ກະທໍາຜິດທີ່ລັກລອບຄ້າຂາຍສັດປ່າ; ຫຼື
- ພາກລັດອາດຟ້ອງຄ່າຊົດເຊີຍເພື່ອຕາງໜ້າໃຫ້ສັງຄົມ, ໃຫ້ສັດປ່າ ຫຼື ຄົນລຸ້ນຫຼັງ, ບົນພື້ນຖານທີ່ພາກລັດເປັນຜູ້ປົກປ້ອງຜົນປະໂຫຍດຂອງພາກສ່ວນທີ່ກ່ຽວຂ້ອງ.

ພາກສ່ວນທີ່ສາມາດຟ້ອງຮ້ອງຄ່າຊົດເຊີຍຕົວຈິງນັ້ນ ຈະຂຶ້ນກັບກອບວຽກທາງນິຕິກໍາທີ່ກ່ຽວຂ້ອງ, ຄໍາແນະນໍາໃນການຕັດສິນຄະດີ ຫຼື ວິຈາລະຍານຂອງສານ (ຕາມຄວາມເໝາະສົມ). ອີງຕາມ ອົງການສະຫະປະຊາຊາດຕ້ານຢາເສບຕິດ ແລະ ອາດຊະຍາກໍາ, ໃນກໍລະນີຂອງການກະທໍາຜິດຕໍ່ສັດປ່າ, "ການຊົດເຊີຍອາດຊໍາລະໃຫ້ພາກລັດທີ່ເປັນຕົວແທນໃຫ້ສັດປ່າ ຫຼື ປ່າໄມ້ ແລະ ບໍ່ຈໍາເປັນຕ້ອງຊໍາລະໃຫ້ຜູ້ຖືກເຄາະຮ້າຍສະເພາະເທົ່ານັ້ນ."[23] ຢ່າງໃດກໍ່ຕາມ ຊຸມຊົນທີ່ໄດ້ຮັບປະໂຫຍດຈາກສັດປ່າ ແລະ ສັດປ່າທີ່ເປັນຜູ້ຖືກເຄາະຮ້າຍ ຍັງສາມາດ



ກຸ້ງມັງກອນຫີນ (ເຈສຸດເອັດວາຊີ). ຄະດີລະຫວ່າງ ລັດຖະບານສະຫະລັດ ແລະ ເບັນຈິດສ ເປັນຄະດີທີ່ມີການຈ່າຍຄ່າຊົດເຊີຍສູງທີ່ສຸດທີ່ສານໄດ້ເຄີຍຕັດສິນມາພາຍໃຕ້ກົດໝາຍ ເລຊີ ຂອງສະຫະລັດ. ມີຜູ້ຊາຍສາມຄົນໄດ້ເຮັດທຸລະກິດທັງໃນປະເທດອາຟຣິກາໃຕ້ ແລະ ສະຫະລັດ, ຊຶ່ງເຂົາໄດ້ຈັບກຸ້ງມັງກອນຫີນຫຼາຍເກີນໂຄຕ້າແຕ່ພັດລາຍງານຕົວເລກກຸ້ງໜ້ອຍເກີນຄວາມເປັນຈິງ, ຕິດສິນບົນເຈົ້າໜ້າທີ່ໃຫ້ປິດຕາເຮັດບໍ່ເຫັນ, ແລະ ລາຍງານພ້ອມຂາຍເຂົ້າມາທັງພາກຕາເວັນອອກຂອງສະຫະລັດເພື່ອສ້າງກໍາໄລ.

ເປັນຕົວແທນໂດຍມີຜູ້ຕາງໜ້າຈາກອົງການຈັດຕັ້ງຂອງລັດ ຫຼື ບໍ່ສັງກັດລັດທີ່ຮັບຜິດຊອບ ຫຼື ມີສ່ວນຮ່ວມໃນການປົກປັກຮັກສາ ຫຼື ຟື້ນຟູສັດປ່າ.[24]

### 3) ການອອກແບບການຊົດເຊີຍທີ່ແທດເໝາະ:

ພາຍຫຼັງທີ່ໄດ້ກໍານົດຜູ້ຖືກເຄາະຮ້າຍທີ່ເໝາະສົມແລ້ວ, ບັນຫາຕໍ່ໄປຈະເປັນວິທີການອອກແບບການຊົດເຊີຍທີ່ແທດເໝາະ ແລະ ມີຄວາມໝາຍ ຊຶ່ງສາມາດຊົດເຊີຍແກ່ຜູ້ຖືກເຄາະຮ້າຍທັງໝົດ. ອີງຕາມ ສປຊ ຕ້ານຢາເສບຕິດ ແລະ ອາດຊະຍາກໍາ ທີ່ມີຊຸດເຄື່ອງມືກ່ຽວກັບສັດປ່າ, "ການຊົດເຊີຍຄວນປະກອບດ້ວຍການສົ່ງຄືນຊັບສິນ ຫຼື ການຊໍາລະເພື່ອຜົນເສຍຫາຍ ຫຼື ການສູນເສຍທີ່ເກີດຈາກການກະທໍາຜິດ, ການຊໍາລະຄືນຄ່າໃຊ້ຈ່າຍທີ່ເກີດຈາກຜົນກະທົບຕໍ່ຜູ້ຖືກເຄາະຮ້າຍ, ການສະໜອງການບໍລິການ ແລະ ການຟື້ນຟູສິດທິອື່ນໆ."[25] ຂຶ້ນກັບສະຖານະພາບຂອງສັດປ່າທີ່ຖືກລັກລອບ, ຕົ້ນທຶນອາດປະກອບດ້ວຍ: ຄ່າປິ່ນປົວທາງການແພດ ຫຼື ການຟື້ນຟູສັດປ່າ, ການສ້າງທີ່ພັກໃຫ້ກັບສັດ ຫຼື ພືດທີ່ຍຶດມາໄດ້, ແລະ ການສົ່ງສັດທີ່ຍັງມີຊີວິດກັບຄືນສູ່ປະເທດທີ່ເປັນບ້ານເກີດຂອງມັນ.[26] ຢ່າງໃດກໍ່ຕາມ ຕົ້ນທຶນບາງຢ່າງແມ່ນຍາກທີ່ສຸດທີ່ຈະກໍານົດເປັນຫົວໜ່ວຍມູນຄ່າໄດ້. ຕົວຢ່າງ: ເມື່ອກະເປົາເດີນທາງໜ່ວຍໜຶ່ງບັນຈຸໜໍ່ແຮດອາຟລິກາມາເຕັມກະເປົາຖືກຍຶດໄດ້ຢູ່ດ່ານກວດກາພາສີ, ພວກເຮົາສາມາດກໍານົດຕົ້ນທຶນໄດ້ງ່າຍສໍາລັບການຂົນສົ່ງ/ການສົ່ງຄືນຊັບສິນດັ່ງກ່າວ (ຖ້າຈໍາເປັນ), ຕົ້ນທຶນອາດກວມເອົາການສືບສວນສອບສວນ, ແລະ ຄ່າຕອບແທນຜູ້ທີ່ແຈ້ງເບາະແສ. ຢ່າງໃດກໍ່ຕາມ ວິທີໃຊ້ໃນການກໍານົດຫົວໜ່ວຍມູນຄ່າ "ການຊໍາລະເງິນເພື່ອຜົນເສຍຫາຍ ຫຼື ຄວາມສູນເສຍທີ່ເກີດຂຶ້ນ" (ເຊັ່ນ: ການສູນເສຍໂຕແຮດ ຫຼື ການສູນເສຍໂຕສຸດທ້າຍຂອງພັນສັດທີ່ໃກ້ສູນພັນ ຄິດເປັນມູນຄ່າບໍ່ໄດ້)? ແລະ ວິທີພວກເຮົາກໍານົດຫົວໜ່ວຍມູນຄ່າທີ່ຈໍາເປັນຕໍ່ "ຟື້ນຟູສິດທິ" (ຂອງຜູ້ຖືກເຄາະຮ້າຍ), ຕົວຢ່າງ: ມາດຕະການ ຫຼື ຈໍານວນເງິນເທົ່າໃດ? ຈໍາເປັນທີ່ຕ້ອງຊົດເຊີຍໃຫ້ຜູ້ຖືກເຄາະຮ້າຍທັງໝົດ (ເຊັ່ນ: ຊ່ວຍຟື້ນຟູຈໍານວນຂອງປະຊາກອນສັດໃຫ້ຢູ່ໃນລະດັບກ່ອນການກະທໍາຜິດ).

## ຄ. ກໍລະນີສຶກສາ: ສະຫະລັດອາເມລິກາ

ໃນສະຫະລັດອາເມລິກາ:

- **<u>ພື້ນຖານທາງກົດໝາຍ:</u>** ພື້ນຖານທາງກົດໝາຍເພື່ອນໍາໃຊ້ການຊົດເຊີຍໃນຄະດີລັກລອບຄ້າຂາຍສັດປ່າ ໄດ້ປາກົດຂຶ້ນພາຍໃຕ້ກົດໝາຍເລກທີ 16 ຍູ.ເອັດສ.ຊີ 3371-3378, ກົດໝາຍ ເລຊີ, ທີ່ເຮັດໃຫ້ບຸກຄົນໃດໜຶ່ງລະເມີດກົດໝາຍເມື່ອ "ນໍາເຂົ້າ, ສົ່ງອອກ, ຂົນສົ່ງ, ຂາຍ, ໄດ້ຮັບ, ມີ ຫຼື ຊື້ປາ ຫຼື ສັດປ່າໃດໜຶ່ງພາຍໃນລັດ ຫຼື ຫົວໜ່ວຍທຸລະກິດຈາກຕ່າງປະເທດເພື່ອມາຄອບຄອງ, ມາຂົນສົ່ງ ຫຼື ມາຂາຍ, ແມ່ນລ້ວນແລ້ວເປັນການລະເມີດຕໍ່ກົດໝາຍ ຫຼື ລະບຽບການຂອງລັດໃດໜຶ່ງ ຫຼື ລະເມີດຕໍ່ກົດໝາຍສາກົນໃດໜຶ່ງ."[28] ການຊົດເຊີຍຍັງໄດ້ຮັບສິດອານຸຍາດໃນສະຫະລັດອາເມລິກາ ຍ້ອນເປັນການລະເມີດທາງອາຍາທີ່ເປັນການກະທໍາຜິດຕໍ່ກົດໝາຍສິ່ງແວດລ້ອມເລກທີ 18.ຍູ. ເອັດສ.ຊີ.3563 ແຕ່ໃນຄະດີດັ່ງກ່າວ, ການຊົດເຊີຍແມ່ນຕັດສິນຕາມວິຈາລະຍານ, ບໍ່ແມ່ນຕາມກົດໝາຍບັງຄັບ ແລະ ມັນຈະເກີດຂຶ້ນໃນເງື່ອນໄຂຂອງການພາກໂທດ.



ໂດຍອີງໃສ່ ມາດຕາ 96 ຂອງກົດໝາຍການປາມົງຂອງປະເທດ ຟີລິບປິນ, ການຂຸດຄົ້ນ ຫຼື ການສຳຫຼວດປາກາລັງທີ່ຜິດກົດໝາຍຈະຖືກປັບໄໝ, ຮິບ ແລະ ຈ່າຍຄ່າຊົດເຊີຍເພື່ອການຟື້ນຟູທຳມະຊາດ. ກອບວຽກດັ່ງກ່າວ ອາດຖືກນຳໃຊ້ກັບການຊົດເຊີຍໃນກໍລະນີສະເພາະທີ່ຄ້າຍຄືກັນກັບສາຍພັນສັດປ່າປະເພດອື່ນໆ ທີ່ຖືກລັກລອບ ຫຼື ສົ່ງອອກໂດຍລະເມີດກົດໝາຍນີ້. (ອີງປະກອບຄວາມແຕກຕ່າງຂອງປາກາລັງທີ່ໃກ້ສູນພັນໃນບັນຊີຂອງໄຊເຕດ). ຮູບຖ່າຍຈາກ
ເມືອງ ຫວຍອັນ, ຫວຽດນາມ. ການຂຸດຄົ້ນແນວປາກາລັງໃນພາກພື້ນນີ້ຂອງໂລກຍັງບໍ່ທັນໄດ້ຮັບການຄຸ້ມຄອງເປັນສ່ວນໃຫຍ່. ອີງການພີແລນ

- **<u>ຜູ້ຖືກເຄາະຮ້າຍ:</u>** ຜູ້ຖືກເຄາະຮ້າຍຈະຕ້ອງເປັນ ບຸກຄົນທີ່ຖືກກະທົບໂດຍກົງ ຫຼື ໂດຍທາງອ້ອມ.[29] ຢ່າງໃດກໍ່ຕາມ "ສານຂອງ (ສະຫະລັດ) ໄດ້ຢໍ້າສະເໜີວ່າ: ລັດຖະບານກາງ ແລະ ໜ່ວຍງານຂອງລັດ, ລັດ ແລະ ລັດຖະບານຕ່າງປະເທດມີສິດເປັນຜູ້ຖືກເຄາະຮ້າຍ ຮັບເອົາຄ່າຊົດເຊີຍ."[30] ພ້ອມກັນນັ້ນ ສານໄດ້ຕັດສິນໃຫ້ມີການຊົດເຊີຍແກ່ມູນນິທິທີ່ສ້າງຕັ້ງໂດຍສະພາ, ກອງທຶນ, ອົງການຈັດຕັ້ງ, ແລະ/ຫຼື ວິສາຫະກິດທີ່ສ່ວນຫຼາຍ (ແຕ່ກໍ່ບໍ່ສະເໝີໄປ) ໄດ້ຮັບສິດທາງກົດໝາຍທີ່ຈະຮັບເອົາການບໍລິຈາກ.[31]
- **<u>ການແກ້ໄຂຄວາມເສຍຫາຍ:</u>** ການແກ້ໄຂແມ່ນແຕກຕ່າງອອກໄປແຕ່ສາຍພົວພັນທີ່ພຽງພໍຈະຕ້ອງໄດ້ຮັບການກຳນົດລະຫວ່າງການກະທຳຜິດທາງອາຍາ ແລະ ການແກ້ໄຂຄວາມເສຍຫາຍທີ່ຈະຕັດສິນ.[32] ຢ່າງໃດກໍ່ຕາມ ຍ້ອນການຊົດເຊີຍແມ່ນອີງໃສ່ຜົນປະໂຫຍດທີ່ຜິດກົດໝາຍຂອງຈຳເລີຍ ແລະ ການປ່ວແປງຜົນເສຍຫາຍທີ່ເກີດກັບພາກສ່ວນທີ່ບາດເຈັບ, ໃນສະຫະລັດອາເມລິກາ ການຊົດເຊີຍມັກຈະມີມູນຄ່າເກີນໂທດທາງກົດໝາຍທີ່ກຳນົດໄວ້ ແລະ ບາງຄັ້ງກໍ່ລວມເອົາການຊົດເຊີຍທີ່ບໍ່ແມ່ນການຊຳລະເງິນອີກ.[33]

### 1) ຄະດີ *ເບັນຈິດສ*:

ໜຶ່ງຄະດີທີ່ມັກຖືກໃຊ້ເປັນຕົວຢ່າງໃນການກຳນົດຄ່າຊົດເຊີຍທີ່ປະສົບຄວາມສຳເລັດກັບຄະດີລັກລອບຄ້າຂາຍສັດປ່າແມ່ນຄະດີ ສະຫະລັດອາເມລິກາ ແລະ ເບັນຈິດສ, ເອັດສ 1 03 ອາຍາ 0308 (ແອວເອເຄ) (ເອັດສ. ດີ. ເອັນ. ວາຍ. ເດືອນມິຖຸນາ ທີ 14 ຂອງ 2013), ຊຶ່ງເປັນຄຳຕັດສິນຂອງສານໃຫ້ຈ່າຍຄ່າຊົດເຊີຍທີ່ຫຼາຍທີ່ສຸດພາຍໃຕ້ກົດໝາຍ ເລຊີ ຂອງສະຫະລັດ.[34] ໃນຄະດີ ເບັນຈິດສ, ມີຜູ້ຊາຍສາມຄົນເຮັດທຸລະກິດໃນອາຟລິກກາໃຕ້ ແລະ ຢູ່ສະຫະລັດທີ່ເຂົາທັງສາມຄົນໄດ້ຈັບກຸ້ງມັງກອນອາຟລິກກາໃຕ້ເກີນໂຄຕ້າ, ລາຍງານການຈັບກຸ້ງຕໍ່າກວ່າຄວາມເປັນຈິງຫຼາຍ, ຕິດສິນບົນເຈົ້າໜ້າທີ່ເພື່ອເຮັດບໍ່ຮູ້ບໍ່ເຫັນ, ແລ້ວສົ່ງອອກ ແລະ ຂາຍກຸ້ງມັງກອນມາພາກຕາເວັນອອກຂອງສະຫະລັດເພື່ອສ້າງຜົນກຳໄລ.[35]

ຄະດີນີ້ມີເອກະລັກສະເພາະຍ້ອນການພິຈາລະນາຂອງສານຄັ້ງທີສອງຢູ່ສະຫະລັດໄດ້ຕັດສິນວ່າ ລັດຖະບານອາຟລິກກາໃຕ້ ມີສິດໄດ້ຮັບຄ່າຊົດເຊີຍຈາກການກະທຳຂອງຈຳເລີຍທີ່ໄດ້ຈັບກຸ້ງມັງກອນຫຼາຍຈົນເກີນໄປ ເປັນການລະເມີດກົດໝາຍການປາມົງຂອງອາ ຟລິກກາໃຕ້.

*"ມີຄວາມສຳຄັນຫຼາຍໃນການພິຈາລະນາຂອງສານຄັ້ງທີສອງເມື່ອກົດໝາຍຂອງອາຟລິກກາໃຕ້ ທີ່ມາກ່ຽວຂ້ອງກັບກຸ້ງມັງກອນ. ເມື່ອກຸ້ງມັງກອນຖືກຈັບເກີນຈຳນວນໂຄຕ້າ, ກົດໝາຍອາຟລິກກາໃຕ້ອານຸຍາດໃຫ້ລັດຖະບານຍຶດຈຳນວນກຸ້ງທີ່ເກີນ ແລະ ຂາຍກຸ້ງດ້ວຍຕົວລັດຖະບານເອງ. ການຕັດສິນຮອບສອງພົບວ່າ ສິ່ງນີ້ເປັນປະໂຫຍດດ້ານຊັບສິນ...ການກະທຳຂອງຈຳເລີຍ ຈຶ່ງເປັນການກີດຂວາງປະໂຫຍດຈາກຊັບສິນຂອງລັດຖະບານອາຟລິກກາໃຕ້ ສະນັ້ນ ພາໃຫ້*



ເມືອງ ຫອຍອັນ, ຫວຽດນາມ. ການຂຸດຄົ້ນແນວປາກາລັງໃນພາກພື້ນນີ້ຂອງໂລກຍັງບໍ່ທັນໄດ້ຮັບການຄຸ້ມຄອງເປັນສ່ວນໃຫຍ່. ອົງການຟີແລນ

*ເກີດພົນເສຍຫາຍໂດຍກົງຕໍ່ລັດຖະບານ. ສະນັ້ນ, ລັດຖະບານອາຟລິກກາໃຕ້ ຕົກໃນຄຳນິຍາມ ຜູ້ຖືກເຄາະຮ້າຍພາຍໃຕ້ (ກົດໝາຍຂອງສະຫະລັດ).”*[36]

ຫຼັງຈາກນັ້ນ ຄ່າຊົດເຊີຍທີ່ຫຼາຍກວ່າ 7 ລ້ານໂດລາ ໄດ້ຈ່າຍໃຫ້ແກ່ລັດຖະບານອາຟລິກກາໃຕ້ ທີ່ເປັນສ່ວນໜຶ່ງຂອງຄະດີອາຍາທີ່ແຍກກັນ ໂດຍມີມູນຄ່າ 5.9 ລ້ານໂດລາ ຖືກຮິບໂດຍລັດຖະບານສະຫະລັດ, ຈຳເລີຍແມ່ນຢູ່ໃນສະຫະລັດ ໂດຍຖືກຕັດສິນໃຫ້ຈ່າຍ **22,5 ລ້ານໂດລາ ເພື່ອເປັນຄ່າຊົດເຊີຍຕໍ່ພົນເສຍຫາຍທີ່ເກີດກັບລັດຖະບານອາຟລິກກາໃຕ້.**[37] ທະນາຍຄວາມ ພລິດ ບາລາລາ ຢູ່ແມນຮັດຕັນ ໃນສະຫະລັດກ່າວວ່າ: “ຄຳຕັດສິນຂອງສານໃນມື້ນີ້ສະແດງໃຫ້ເຫັນ ຜູ້ທີ່ລະເມີດກົດໝາຍສິ່ງແວດລ້ອມຂອງອີກປະເທດໜຶ່ງໂດຍການເຮັດການປາມົງ, ຈັບສັດປ່າ ຫຼື ຂຸດຄົ້ນພັນພືດທີ່ຜິດກົດໝາຍແລ້ວນຳເຂົ້າຜະລິດຕະພັນດັ່ງກ່າວເຂົ້າມາໃນສະຫະລັດ ຈະຖືກຕັດສິນໃຫ້ຈ່າຍຄືນແກ່ຜູ້ຖືກເຄາະຮ້າຍຈາກການກະທຳຜິດຂອງອາດຊະຍາກອນ.”[38]

## 2) ຂໍ້ຈຳກັດໃນຄະດີ *ເບັນຈິດສ:*

ເມື່ອຄະດີ ເບັນຈິດສ ມັກເຫັນເປັນໄຊຊະນະຂອງການດຳເນີນຄະດີລັກລອບຄ້າຂາຍສັດປ່າ, ການຕັດສິນຂັ້ນສຸດທ້າຍຂ້ອນຂ້າງເປັນວົງແຄບ-ການພິຈາລະນາຮອບສອງທີ່ໃຫ້ປະເທດອາຟລິກກາໃຕ້ເປັນຜູ້ຖືກເຄາະຮ້າຍນັ້ນ ບໍ່ແມ່ນຍ້ອນສິດໃນການເປັນເຈົ້າຂອງກຸ້ງມັງກອນ; ເປັນເປັນຍ້ອນປະເທດອາຟລິກກາໃຕ້ມີສິດຖືກຕ້ອງທາງກົດໝາຍທີ່ຈະຂາຍປາໃດກໍ່ໄດ້ ທີ່ຈັບມາຢ່າງຜິດກົດໝາຍ, ມັນໄດ້ສ້າງຄວາມເສຍຫາຍ ແລະ ເປັນຜູ້ຖືກເຄາະຮ້າຍພາຍໃຕ້ກົດໝາຍຂອງປະເທດ.[39] ການດຳເນີນຄະດີ *ເບັນຈິດສ* ໃນຕົວຈິງນຳສິ່ງສຳນວນຄະດີທີ່ມີການຄິດໄລ່ສອງແບບເພື່ອກຳນົດຄ່າຊົດເຊີຍຄື: 1) ວິທີຄິດໄລ່ທຳອິດອີງໃສ່ຕົ້ນທຶນເພື່ອການແກ້ໄຂບັນຫາສິ່ງແວດລ້ອມ ແລະ ການຟື້ນຟູຄືນຈຳນວນກຸ້ງມັງກອນ; ແລະ 2) ວິທີຄິດໄລທີສອງແມ່ນອີງໃສ່ຫົວໜ່ວຍລາຄາຕະຫຼາດຂອງກຸ້ງມັງກອນທີ່ຈັບໄປ.[40] ສານຮັບເອົາແຕ່ພຽງວິທີຄິດໄລ່ທີສອງເທົ່ານັ້ນ.

## 3) ເນື້ອໃນເພີ່ມ:

- ໃນຄະດີລະຫວ່າງ ລັດຖະບານສະຫະລັດ ກັບ ບັດເລີ, 694 ເອັບ.3ດີ 1177, 1182 (ພິຈາລະນາຄັ້ງທີ 10, 2012), ການພິຈາລະນາຂອງສານຄັ້ງທີ 10 ໃນສະຫະລັດ ຍັງຂະຫຍາຍຄວາມໝາຍຂອງແນວຄວາມຄິດ “ຜູ້ຖືກເຄາະຮ້າຍ” ໃນການຮັບເອົາຄ່າຊົດເຊີຍຢູ່ລັດອາຄັນຊໍ ທີ່ເປັນບ່ອນຈຳເລີຍໄດ້ກະທຳຜິດໃນການລັກລອບຂາຍ ແລະ ຂົນສິ່ງກວາງທີ່ເປັນການລະເມີດກົດໝາຍເລຊີ. “ສານທີ່ພິຈາລະນາຄະດີ ບັດເລີ ພົບວ່າ ລັດອາຄັນຊໍ ມີປະໂຫຍດໃນຊັບສິນລວມ ຕໍ່ກັບຊາກກວາງທີ່ບໍ່ທັນຂຶ້ນທະບຽນ, ໂດຍອີງໃສ່ຄວາມຈິງທີ່ວ່າ ມີຫຼາຍລັດ **ທີ່ເປັນເຈົ້າຂອງສັດພາຍໃນຂອບເຂດຊາຍແດນການຄຸ້ມຄອງຂອງຕົນເອງ, ແລະ ສະນັ້ນ ພົນເສຍຫາຍຕໍ່ສັດປ່າໃນລັດ ແມ່ນການກະທຳຜິດຕໍ່ຊັບສິນຂອງລັດ, (ກົດໝາຍສະຫະລັດ).”**[41]
- ສານທີ່ພິຈາລະນາຄະດີ ລັດຖະບານສະຫະລັດ ກັບ ໂຣດສ, ເລກທີ 11-30101, 2012 ດັບເບີນຢູແອວ 4848876 ທີ່ *5 (ດີ.ເອັດສ.ດີ ເດືອນຕຸລາ ທີ 10 ຂອງ2012) ໄດ້ພິຈາລະນາຂໍ້ຂັດແຍ່ງເພີ່ມເຕີມໃນການກຳນົດມູນຄ່າຂອງການຊົດເຊີຍນົກອິນຊີ 16 ໂຕທີ່ຖືກຂ້າຢ່າງຜິດກົດໝາຍໂດຍເຈົ້າຂອງສູນລ່າ

ສັດ ແລະ ພະນັກງານຂອງລາວ.[42] ສານພົບວ່າ "ລັດຖະບານມີປະໂຫຍດທີ່ຖືກຕ້ອງທາງກົດໝາຍ ແລະ ສິດພຽງພໍໃນການອານຸລັກ ແລະ ປົກປ້ອງນົກອິນຊີ, (ຊຶ່ງ) ທີ່ສິດໄດ້ມາບໍ່ແມ່ນຈາກການເປັນເຈົ້າຂອງຊັບພະຍາກອນໃດໜຶ່ງແຕ່ເປັນພາລະບົດບາດຂອງລັດຖະບານຕໍ່ປະຊາຊົນ. **ພາລະໜ້າທີ່ຂອງລັດຖະບານໃນການປົກປ້ອງຜົນປະໂຫຍດລວມທີ່ເປັນຊັບພະຍາກອນທໍາມະຊາດສັດປ່າ ໄດ້ຖືກກະທົບໂດຍກົງ ແລະ ໂດຍທາງອ້ອມຍ້ອນການກະທໍາຂອງຈໍາເລີຍ ແລະ ມີຄໍາສັ່ງຕັດສິນໃຫ້ຊົດເຊີຍ.**"[43]

ມີຄວາມເປັນໄປໄດ້ສໍາລັບຂະບວນການຍຸຕິທໍາໃນປະເທດອື່ນ ທີ່ຈະປະຕິບັດຕາມຕົວຢ່າງຂອງຄະດີ *ເບັນຈິດສ* ແລະ ໃຊ້ຄໍາໂຕ້ແຍ້ງ "ປະໂຫຍດໃນຊັບສິນ" ທີ່ເປັນພື້ນຖານທາງກົດໝາຍເພື່ອຟ້ອງຮ້ອງຂໍການຊົດເຊີຍແກ່ຂະບວນການຍຸຕິທໍາຍ້ອນການກະທໍາຜິດທາງກົດໝາຍຂອງພົນລະເມືອງ ຫຼື ບໍລິສັດອາເມລິກາ ທີ່ກ່ຽວຂ້ອງກັບຄະດີອາຍາການລັກລອບຄ້າຂາຍສັດປ່າ ຫຼື ຕໍ່ສິ່ງແວດລ້ອມ. ຕົວຢ່າງ: ລັດຖະບານຂອງຕ່າງປະເທດອາດຟ້ອງຮ້ອງວ່າ ເຂົາເຈົ້າມີປະໂຫຍດໃນຊັບສິນໂດຍສະເພາະ ສາຍພັນຂອງສັດທີ່ໄດ້ມີການລັກລອບຄ້າຂາຍໂດຍຢັ້ງຢືນໃຫ້ເຫັນວ່າ ນັກທ່ອງທ່ຽວ (ພາຍໃນ ແລະ ສາກົນ) ໄດ້ເຂົ້າມາປະເທດຂອງເຂົາເຈົ້າເພື່ອເບິ່ງສັດດັ່ງກ່າວທີ່ອາໄສໃນປ່າ ແລະ ເມື່ອບໍ່ມີສັດດັ່ງກ່າວແລ້ວ ຊຸມຊົນທີ່ກ່ຽວຂ້ອງຈະປະເຊີນກັບຜົນເສຍຫາຍທາງເສດຖະກິດ (ມູນຄ່າສະເພາະຂອງຜົນເສຍຫາຍທີ່ຄິດໄລ່ໄວ້ ອາດຈໍາເປັນຕ້ອງກໍານົດເປັນຫົວໜ່ວຍລາຄາ). ຄໍາໂຕ້ແຍ້ງທີ່ຄ້າຍຄືກັນອາດເປັນໃນຮູບແບບຂອງອາກອນລາຍຮັບທີ່ໄດ້ສູນເສຍໄປ.

ອີກທາງເລືອກໜຶ່ງ, ລັດຖະບານຂອງຕ່າງປະເທດອາດສາມາດຟ້ອງຮ້ອງຄ່າຊົດເຊີຍໂດຍກົງຫຼາຍຂຶ້ນໃນຄະດີການລັກລອບຄ້າຂາຍສັດປ່າຢູ່ສະຫະລັດອາເມລິກາ ຖ້າມີກົດໝາຍເປັນລາຍລັກອັກສອນກໍານົດສະເພາະໄວ້ວ່າ ລັດຖະບານ ຫຼື ພົນລະເມືອງຂອງຕົນ, ປະໂຫຍດໃນຊັບສິນ ຫຼື ສິດຕໍ່ຊັບສິນສະເພາະກັບສັດປ່າທີ່ອາໄສຢູ່ພາຍໃນຂອບເຂດຊາຍແດນຂອງປະເທດ. ໃນສິ່ງນີ້ຈະມີລັກສະນະຄ້າຍຄືກັບວິທີການພິຈາລະນາຮອບສອງທີ່ນໍາໄປສູ່ຂໍ້ສະຫຼຸບຂອງຄະດີ *ເບັນຈິດສ*, ສານຂອງສະຫະລັດອາດມີເຈດຈໍານົງເພີ່ມຂຶ້ນໃນການພິຈາລະນາຄະດີສັດປ່າທີ່ລະເມີດສິດຕໍ່ຜົນປະໂຫຍດໃນຊັບສິນຂອງລັດຖະບານດັ່ງກ່າວ (ຫຼື ປະຊາຊົນຂອງປະເທດນັ້ນ).

## ງ. ການນໍາໃຊ້ມາດຕະການຊົດເຊີຍໃນຂະບວນຍຸຕິທໍາຂອງຊາດອື່ນ:

### 1) ປະເທດໄທ:

ການຊົດເຊີຍ ທີ່ເປັນການແກ້ໄຂບັນຫາ ປະຈຸບັນຍັງບໍ່ທັນໄດ້ບັນຈຸເຂົ້າໃນກົດໝາຍ ແລະ ລະບຽບການ ຄຸ້ມຄອງສັດປ່າໃນລາດຊະອານາຈັກໄທ. ຢ່າງໃດກໍ່ຕາມ ການຊົດເຊີຍທີ່ເປັນແນວຄວາມຄິດໄດ້ເກີດມີໃນກອບວຽກທາງກົດໝາຍທີ່ກວ້າງຂຶ້ນ ແລະ ສານໃນປະເທດໄທໄດ້ມີຄໍາສັ່ງສະເພາະໃນການຈ່າຍຄ່າຊົດເຊີຍໃຫ້ຜູ້ຖືກເຄາະຮ້າຍຈາກ ການຄ້າມະນຸດ. ອີງໃສ່ກະຊວງການຕ່າງປະເທດ ທີ່ມີບົດລາຍງານການຄ້າມະນຸດໃນປີ 2018, ເຮັດໃຫ້ຮູ້ວ່າໃນປີ 2016 "ລັດຖະບານໄດ້ປັບປຸງກົດໝາຍການດໍາເນີນຄະດີທາງອາຍາກັບການຄ້າມະນຸດ, ທີ່ອານຸຍາດໃຫ້ຜູ້ພິພາກສາຕັດສິນການຊົດເຊີຍ ຫຼື ຄ່າຊົດເຊີຍໃຫ້ກັບຜູ້ຖືກເຄາະຮ້າຍ, ລວມທັງຜູ້ຖືກເຄາະຮ້າຍທີ່ບໍ່ສາມາດມາຂຶ້ນສານແຕ່ສາມາດຂໍທົບດັ່ງກ່າວໄດ້."[44] ໃນມູນຄ່າທັງໝົດ ສານໄດ້ຕັດສິນຄ່າຊົດເຊີຍຫຼາຍກວ່າ 18,4 ລ້ານບາດ (565.640 ໂດລາ) ເກັບຈາກຜູ້ຄ້າມະນຸດເພື່ອຈ່າຍໃຫ້ກັບຜູ້ຖືກເຄາະຮ້າຍ 151 ຄົນໃນ 2017, ເພີ່ມຈາກ 1,7 ລ້ານບາດ (50.610 ໂດລາ) ຈ່າຍໃຫ້ຜູ້ຖືກເຄາະຮ້າຍ 15 ຄົນໃນ 2016.[44] ໃນຂະນະທີ່ການສືບສວນສອບສວນເປັນແຜນງານທີ່ຍັງບໍ່ທັນໄດ້ຮັບການຈັດຕັ້ງປະຕິບັດທັງໝົດ ແລະ ການຊົດເຊີຍບາງຈໍານວນກໍ່ຍັງບໍ່ທັນຖືກຈ່າຍອອກໄປ,[46] ການມີແຜນງານໄດ້ຍົກໃຫ້ເຫັນຄວາມເປັນໄປໄດ້ທີ່ແຜນງານຄ້າຍຄືກັນນີ້ອາດສາມາດສ້າງຕັ້ງສໍາລັບປະເພດການກະທໍາຜິດທີ່ເປັນການລັກລອບແບບອື່ນ ເຊັ່ນ: ການລັກລອບຄ້າຂາຍສັດປ່າ. ຖ້າແຜນງານໄດ້ຮັບການສ້າງຕັ້ງ, ບັນຫາຕົ້ນຕໍທີ່ຕ້ອງພິຈາລະນາແມ່ນ:

- ພາກສ່ວນໃດທີ່ຈະໄດ້ຮັບອານຸຍາດເປັນ ຜູ້ຖືກເຄາະຮ້າຍ (ທາງອ້ອມ); ແລະ
- ວິທີການຊໍາລະຄ່າຊົດເຊີຍຈະຖືກໃຊ້ແນວໃດ? ເພື່ອແກ້ໄຂຜົນເສຍຫາຍທີ່ຕິດພັນ.

### 2) ປະເທດເຄັນຢາ:

ໃນເວລາທີ່ການຊົດເຊີຍຍັງບໍ່ທັນຖືກບັນຈຸເຂົ້າໃນກອບວຽກເພື່ອຕ້ານການກະທໍາຜິດລັກລອບຄ້າຂາຍສັດປ່າໃນປະເທດເຄັນຢາ, ກົດໝາຍອານຸລັກສັດປ່າ ໄດ້ກໍານົດສະເພາະໃຫ້ຈ່າຍຄ່າຊົດເຊີຍໃຫ້ແກ່ຜູ້ຖືກເຄາະຮ້າຍຂອງປະຊາກອນສັດປ່າທີ່ຖືກກະທົບຈາກມົນລະພິດ. ພ້ອມກັນນັ້ນ ສານອາດຕັດສິນສັ່ງໃຫ້ຈໍາເລີຍ "ຈ່າຍຄ່າທັງໝົດໃນການທໍາຄວາມສະອາດແຫຼ່ງທີ່ຢູ່ອາໄສຂອງປະຊາກອນສັດປ່າທີ່ຖືກກະທົບຈາກມົນລະພິດ ແລະ ລະບົບນິເວດ, ແລະ ກໍາຈັດມົນລະພິດເພື່ອຕອບສະໜອງຄວາມຕ້ອງການຂອງການບໍລິການ."[47] ຄຽງຄູ່ກັບການຊົດເຊີຍນີ້, ສານໄດ້ຮັບອານຸຍາດໃຫ້ ຊີ້ນໍາຜູ້ສ້າງມົນລະພິດໃຫ້ປະກອບສ່ວນເຂົ້າໃນກິດຈະກໍາອານຸລັກສັດປ່າໃນຮູບການເຊັ່ນ: ການຊົດເຊີຍ, ການປັບປຸງໃຫ້ຄືນສູ່ສະພາບເກົ່າ ແລະ ການຟື້ນຟູ."[48] ຄ້າຍຄືກັບການລັກລອບຄ້າຂາຍສັດປ່າ, ຜົນເສຍຫາຍທີ່ເກີດຈາກມົນລະພິດສາມາດພາໃຫ້ຍາກທີ່ຈະກໍານົດເປັນຈໍານວນຫົວໜ່ວຍ. ມັນຈຶ່ງພັກດັນໃຫ້ບັນດາເຈົ້າໜ້າທີ່ໃນປະເທດເຄັນຢາສ້າງຫຼັກການຄໍາຕັດສິນທີ່ຊ່ວຍໃຫ້ຜົນເສຍຫາຍຕໍ່ສິ່ງແວດລ້ອມ (ຫຼື ຜົນກະທົບອື່ນໆທີ່ກ່ຽວຂ້ອງ) ຊົດເຊີຍຜ່ານແຜນງານການປົກປັກຮັກສາ ແລະ ຟື້ນຟູສິ່ງແວດລ້ອມໂດຍລວມໃຫ້ຫຼາຍຂຶ້ນ. ສິ່ງນີ້ສາມາດຂະຫຍາຍໄດ້ເພື່ອກໍານົດການຊົດເຊີຍທີ່ອາດມີຕື່ມອີກໃຫ້ແກ່ຜູ້ຖືກເຄາະຮ້າຍຈາກການລັກລອບຄ້າຂາຍສັດປ່າ.

### 3) ປະເທດຟີລິບປິນ:

ໃນປະເທດຟີລິບປິນ, ກົດໝາຍອາຍາໄດ້ກໍານົດການຊົດເຊີຍທີ່ເປັນວິທີແກ້ໄຂທີ່ອາດນໍາໃຊ້ສໍາລັບຄວາມຮັບຜິດຊອບໃນຄະດີແພ່ງ ແລະ ພັນທະໃຫ້ຈໍາເລີຍໃນຄະດີອາດຊະຍາກໍາຈ່າຍຄ່າຊົດເຊີຍຖ້າຈໍາເລີຍນັ້ນ "ບໍ່ຈໍາເປັນຕ້ອງມີສ່ວນຮ່ວມໃນຂະບວນການກະທໍາຜິດທາງອາຍາ" (ໃນຈໍານວນທີ່ທຽບເທົ່າກັບການມີສ່ວນຮ່ວມຂອງລາວໃນຄະດີອາຍາ).[49] ກົດໝາຍການປາມົງຂອງຟີລິບປິນ ບໍ່ໄດ້ກໍານົດຄ່າຊົດເຊີຍທີ່ເປັນການແກ້ໄຂສະເພາະ ແຕ່ຮັບຮູ້ເຖິງແນວຄວາມຄິດທີ່ວ່າ:

- ການຮັບຮູ້ລັດຖະບານທີ່ເປັນຜູ້ປົກປ້ອງຜົນປະໂຫຍດຂອງ ປະຊາຊົນ ສະນັ້ນ ຈຶ່ງຖືເປັນຜູ້ຖືກເຄາະຮ້າຍ; ແລະ
- ຄວາມຕ້ອງການຕໍ່ການຊົດເຊີຍທີ່ໄດ້ຈາກການກະທຳຜິດ ນັ້ນ ປະກອບດ້ວຍການຊົດເຊີຍເພື່ອຈຸດປະສົງການປັບປຸງ ສິ່ງແວດລ້ອມທີ່ຖືກກະທົບນັ້ນໃຫ້ກັບຄືນມາສະພາບເກົ່າ.

ອີງຕາມມາດຕາ 96 ຂອງກົດໝາຍປາມົງ, ການຂຸດຄົ້ນ ຫຼື ການ ສົ່ງອອກປາກາລັງທີ່ຜິດກົດໝາຍອາດສົ່ງຜົນໃຫ້:

ກ) ຄ່າປັບໄໝທີ່ເປັນມູນຄ່າ 8 ເທື່ອຂອງປາກາລັງ ຫຼື 500.000-10.000.000 ເປໂຊ, ມູນຄ່າໃດກໍ່ໄດ້ທີ່ສູງກວ່າຄ່າປາກາລັງ;

ຂ) ການຮິບປາກາລັງ; ແລະ

ຄ) ການຊຳລະຄ່າຊົດເຊີຍເພື່ອຟື້ນຟູແນວປາກາລັງທີ່ຖືກເສຍຫາຍ ( ການກຳນົດຫົວໜ່ວຍມູນຄ່າຕາມຜົນການສຶກສາທີ່ມີ ແລະ ຕາມ ການກຳນົດໂດຍບັນດາກົມກອງທີ່ກ່ຽວຂ້ອງ).[50]

ເມື່ອມີແນວຄວາມຄິດທີ່ຄ້າຍຄືກັນນີ້ເກີດສຳລັບການຂຸດຄົ້ນ ແລະ ສົ່ງອອກປາກາລັງ, ກອບວຽກສາມາດຂະຫຍາຍໃຫ້ກວມສະເພາະ ການຊົດເຊີຍທີ່ຄ້າຍກັນນີ້ກັບຊະນິດຂອງສາຍພັນສັດປ່າອື່ນໆທີ່ມີການ ລ່າ ຫຼື ສົ່ງອອກ ຜິດຕໍ່ລະບຽບກົດໝາຍ.

# ວິທີແກ້ໄຂຜົນເສຍຫາຍຕໍ່ສັດປ່າໂດຍຜ່ານການນໍາໃຊ້ມາດຕະການຄໍາຕັດສິນຂອງສານ: "ຄໍາຕັດສິນທີ່ມີລັກສະນະຫືອຄິດປະດິດສ້າງ", "ການບໍລິການທາງການເງິນແກ່ຊຸມຊົນ" ແລະ "ບັນລຸຂໍ້ຕົກລົງ"

## ກ. ພາກແນະນໍາ:

ໃນລະບົບຄວາມຍຸຕິທໍາຂອງຫຼາຍປະເທດອາດບໍ່ໄດ້ນໍາໃຊ້ສະເພາະ "ການຊົດເຊີຍ" ທີ່ເປັນວິທີການແກ້ໄຂການກະທໍາຜິດລັກລອບຄ້າຂາຍສັດປ່າ, ແຕ່ນັບມື້ນັບຍິ່ງມີລະບົບຍຸຕິທໍາທີ່ກໍາລັງເລີ່ມຕົ້ນນໍາໃຊ້ "ການຕັດສິນຂອງສານທີ່ເປັນມາດຕະການເສີມ" (ບາງຄັ້ງມາດຕະການນີ້ຖືກຮ້ອງວ່າ ຄໍາຕັດສິນທີ່ມີລັກສະນະຫືອຄິດປະດິດສ້າງ) ເປັນມາດຕະການຕ່າງໆ. ມາດຕະການດັ່ງກ່າວອານຸຍາດໃຫ້ສານໃຊ້ວິຈາລະຍານກໍານົດໂທດເພີ່ມເຕີມແກ່ຈໍາເລີຍໃນປະເພດຂອງຄະດີທີ່ແນ່ນອນໃດໜຶ່ງໃນເວລາມີການຕັດສິນ ຫຼື ເປັນສ່ວນໜຶ່ງໃນການບັນລຸຂໍ້ຕົກລົງ. ຕໍ່ກັບການກະທໍາຜິດກ່ຽວກັບສິ່ງແວດລ້ອມ ຫຼື ສັດປ່າ, ມາດຕະການດັ່ງກ່າວມີຂີດຄວາມສາມາດໃນການຊົດເຊີຍເຕັມຈໍານວນຕໍ່ກັບຜົນເສຍຫາຍທີ່ມີກັບສິ່ງແວດລ້ອມ ແລະ ຊຸມຊົນທີ່ຖືກກະທົບຈາກການລະເມີດກົດໝາຍ , ມີການຢັບຢັ້ງຫຼາຍຂຶ້ນຕໍ່ກັບພຶດຕິກໍາອາດຊະຍາກໍາ, ແລະ ສົ່ງເສີມການຮ່ວມມືປະຕິບັດກົດໝາຍສິ່ງແວດລ້ອມໃຫ້ດີກວ່າເກົ່າ. ຈາກຜົນທີ່ໄດ້ຮັບ, ມາດຕະການດັ່ງກ່າວໄດ້ຊ່ວຍໃຫ້ສານກໍານົດການຊົດເຊີຍເປັນວິທີແກ້ໄຂທີ່ທຽບເທົ່າ ເຖິງວ່າກອບວຽກທາງກົດໝາຍຈະບໍ່ກໍານົດສະເພາະການຊົດເຊີຍຕໍ່ການກະທໍາຜິດທີ່ກ່ຽວຂ້ອງກໍ່ຕາມ.

ເຫດຜົນແມ່ນ ການກະທໍາຜິດດັ່ງກ່າວກໍ່ໃຫ້ເກີດຜົນເສຍຫາຍຕໍ່ສິ່ງແວດລ້ອມ, ຖ້າບໍ່ໄດ້ຮັບການແກ້ໄຂ, ອາດສືບຕໍ່ເພີ່ມທະວີໃນອານາຄົດ ຫຼື ຮັກສາຄວາມເສຍຫາຍໄວ້.[52] ຜົນໄດ້ຮັບທີ່ເປັນການຟື້ນຟູອາດສໍາລັບຜູ້ກະທໍາຜິດໃຫ້ປະຕິບັດການປ້ອງກັນ, ຄວບຄຸມ, ບັນເທົາ ຫຼື ຫຼຸດຜ່ອນຜົນເສຍຫາຍຕໍ່ສິ່ງແວດລ້ອມທີ່ເກີດຈາກການກະທໍາຜິດ ແລະ ພາໃຫ້ເກີດຜົນດີແກ່ສິ່ງແວດລ້ອມທີ່ຖືກກະທົບນັ້ນ.[53]



ໃນລະບົບຍຸຕິທໍາຂອງບາງປະເທດໄດ້ນໍາໃຊ້ ສານສີຂຽວ ເພື່ອແກ້ໄຂສະເພາະບັນຫາອາດຊະຍາກໍາຕໍ່ສິ່ງແວດລ້ອມ (ປະເທດບັງຄາລາເທດ, ຈີນ, ອິນໂດເນເຊຍ, ເກົາຫຼີໃຕ້, ປາກີສະຖານ, ຟີລິບປິນ ແລະ ໄທ).

## ຂ. ບັນຫາທາງກົດໝາຍ:

ບັນຫາຈາກແນວຄວາມຄິດທາງກົດໝາຍລວມເອົາການວິເຄາະທີ່ມີລັກສະນະຄ້າຍກັນໃນການກໍານົດຜູ້ຖືກເຄາະຮ້າຍທີ່ແທດເໝາະ ແລະ ການອອກແບບວິທີຊົດເຊີຍທີ່ມີຄວາມໝາຍ, ຕາມທີ່ກໍານົດໃນພາກ 2 (ຂ) (2) ແລະ ຂໍ້ (3) ຂ້າງເທິງ. ນອກເໜືອຈາກນັ້ນ, ບັນຫາທາງກົດໝາຍເພີ່ມເຕີມຈໍາເປັນຕ້ອງໄດ້ມີການພິຈາລະນາດັດປັບມາດຕະການຄໍາຕັດສິນເພີ່ມເຕີມເຊັ່ນ:

### 1) ພື້ນຖານທາງກົດໝາຍ:

ໃນບາງລະບົບຍຸຕິທໍາ, ສານອາດຖືກຈໍາກັດໃນການກໍານົດໂທດທາງກົດໝາຍສະເພາະດ້ານທີ່ໃຊ້ກັບຄະດີການກະທໍາຜິດສະເພາະໃດໜຶ່ງທີ່ມາຂຶ້ນສານ. ເພື່ອໃຫ້ລະບົບຍຸຕິທໍາສາມາດປະຕິບັດມາດຕະການຄໍາຕັດສິນເພີ່ມເຕີມໄດ້ນັ້ນ, ບົດແນະນໍາການຕັດສິນຂອງສານມີໃນລະບົບຍຸຕິທໍາທີ່ກ່ຽວຂ້ອງ (ຖ້າມີ) ອາດຈໍາເປັນຕ້ອງມີພື້ນຖານທາງກົດໝາຍໃຫ້ສານເພື່ອກໍານົດຄໍາຕັດສິນເພີ່ມເຕີມໃຫ້ຈໍາເລີຍນອກເໜືອຈາກການກໍານົດໂທດຕາມມາດຕະຖານກົດໝາຍທີ່ໄດ້ວາງໄວ້.

ບາງລະບົບຍຸຕິທໍາ (ລວມມີປະເທດບັງຄາລາເທດ, ສປ ຈີນ, ອິນເດຍ, ອິນໂດເນເຊຍ, ເກົາຫຼີໃຕ້, ປາກີສະຖານ, ຟີລິບປິນ, ໄທ ແລະ ປະເທດອື່ນໆ) ໄດ້ໝູນໃຊ້ "ສານສີຂຽວ" (ຍັງຮ້ອງກັນວ່າ ສານຂັ້ນຕົ້ນສໍາລັບຄະດີສິ່ງແວດລ້ອມ) ເພື່ອແກ້ໄຂຄະດີສິ່ງແວດລ້ອມສະເພາະ.[54] ເຈດຈໍານົງແມ່ນເພື່ອໃຫ້ຜູ້ພິພາກສາທີ່ມີຄວາມຮູ້ສະເພາະດ້ານກົດໝາຍຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມຮັບຜິດຊອບຄະດີ ພ້ອມຈຸດສຸມໃນການສ້າງຄວາມເຂັ້ມແຂງໃຫ້ການຈັດຕັ້ງປະຕິບັດ, ປະຕິບັດຕາມກົດໝາຍ ແລະ ບັງຄັບໃຊ້ກົດໝາຍສິ່ງແວດລ້ອມ.[55] ໃນລະບົບຍຸຕິທໍາທີ່ສານຖືກຈໍາກັດຄວາມສາມາດໃນການກໍານົດໂທດເພີ່ມເຕີມນອກ ເໜືອຈາກໂທດທີ່ກໍານົດໃນກົດໝາຍ, ບົດແນະນໍາຄໍາຕັດສິນຂອງສານສີຂຽວອາດຊ່ວຍ ຫຼື ຖືກໝູນໃຊ້ໃຫ້ຊ່ວຍ ຜູ້ພິພາກສາສານສິ່ງແວດລ້ອມມີອໍານາດພິເສດໃນການກໍານົດຄໍາຕັດສິນເພີ່ມເຕີມທີ່ເປັນພາກບັງຄັບໃນຄະດີອາດຊະຍາກໍາຕໍ່ສິ່ງແວດລ້ອມ ຫຼື ຕໍ່ສັດປ່າ. ລະບົບຍຸຕິທໍາສາມາດໃຫ້ທໍາມະຊາດທີ່ຖືກກະທົບຈາກອາດຊະຍາກໍາດັ່ງກ່າວຮັບໂທດເພີ່ມເຕີມຈາກການ

ກະທຳຜິດຕໍ່ບຸກຄົນພາຍນອກໃນຊຸມຊົນອ້ອມຂ້າງ ແລະ ວິທີແກ້ໄຂ ສາມາດບັນລຸໄດ້ດ້ວຍການຊົດເຊີຍສະເພາະດ້ານທີ່ມີຄວາມໝາຍ ແກ້ໄຂການກະທຳຜິດດັ່ງກ່າວໂດຍກົງ.

### 2). ການປາກົດມີຄວາມບໍ່ເໝາະສົມ:

ເມື່ອຄຳຕັດສິນຂອງສານເພີ່ມເຕີມ ປະກອບເອົາການສະໜອງທຶນ ໃຫ້ອົງການຈັດຕັ້ງ ຫຼື ແຜນງານສະເພາະໃດໜຶ່ງ ໂດຍມີຈຸດສຸມເພື່ອ ຊົດເຊີຍຜົນເສຍຫາຍທີ່ເກີດຂຶ້ນ ຫຼື ເພື່ອປົກປັກຮັກສາສັດປ່າຈາກ ຜົນເສຍຫາຍໃນອານາຄົດ, ການເລືອກຄຳຕັດສິນຂອງສານ ຫຼື ການ ອານຸຍາດສະໜອງທຶນໃຫ້ອົງການຈັດຕັ້ງສະເພາະ ຫຼື ແກ້ໄຂສາເຫດ ສະເພາະນັ້ນ ອາດນຳໄປສູ່ການສໍ້ລາດບັງຫຼວງ ຫຼື ຢ່າງໜ້ອຍ ພາໃຫ້ ເກີດມີຄວາມບໍ່ເໝາະສົມເກີດຂຶ້ນ.[56] ໃນການອອກແບບຂັ້ນຕອນ ຄຳຕັດສິນຂອງສານເພີ່ມເຕີມ, ສານຄວນພິຈາລະນາຜົນເສຍຫາຍ ສະເພາະດ້ານທີ່ເກີດຈາກການກະທຳຜິດດັ່ງກ່າວ ແລະ ຮັບປະກັນວ່າ ປັດໃຈທີ່ກ່ຽວຂ້ອງອື່ນໆມີພຽງພໍລະຫວ່າງ ຜົນເສຍຫາຍນັ້ນ ແລະ ຄ່າ ຊົດເຊີຍທີ່ໄດ້ຕັດສິນ.[57] ເພື່ອຫຼຸດຜ່ອນຄວາມສ່ຽງຂອງບັນຫາດັ່ງກ່າວ, ໃນສະຫະລັດອາເມລິກາ ສະພາໄດ້ສ້າງ ຫຼື ອານຸຍາດມູນນິທິ ສະເພາະ ທີ່ແນ່ນອນ, ກອງທຶນ ຫຼື ອົງການຈັດຕັ້ງທີ່ເປັນປາຍທາງ ໄດ້ຮັບອານຸ ຍາດທາງດ້ານກົດໝາຍຮັບເອົາທຶນສະໜັບສະໜູນທີ່ເປັນຄ່າຊົດເຊີຍ ເພື່ອຈຸດປະສົງດັ່ງກ່າວ.[58]

### 3) ການຕິດຕາມຄຳຕັດສິນຂອງສານ:

ເມື່ອສານໄດ້ພິຈາລະນາຄຳຕັດສິນ, ບັນຫາສຸດທ້າຍທີ່ຈະພິຈາລະນາ ແມ່ນບັນດາມາດຕະການ ຫຼື ການປ້ອງກັນທີ່ມີເພື່ອຮັບປະກັນໃຫ້ ໄດ້ວ່າ ຄຳຕັດສິນເພີ່ມຕື່ມນັ້ນຈະໄດ້ຮັບການປະຕິບັດຕາມຢ່າງແທດ ເໝາະ - ທັງໃນຮູບການທີ່ເປັນພັນທະຂອງຈຳເລີຍ; ພ້ອມທັງພັນທະ ຂອງພາກສ່ວນທີ່ໄດ້ຮັບປະໂຫຍດທາງການເງິນເພື່ອຮັບປະກັນການ ນຳໃຊ້ໃຫ້ໄປຕາມຈຸດປະສົງຂອງຄຳພິພາກສາ. ພັນທະຂອງຈຳເລີຍ ຄວນຖືກປະຕິບັດໃນຮູບແບບເຊັ່ນດຽວກັນກັບມາດຕະການພາກ ໂທດ ຫຼື ກັກຂັງພາງ, ພ້ອມທັງຄວາມເປັນໄປໄດ້ສຳລັບການກຳນົດ ໂທດ (ໃໝ່ ຫຼື ເພີ່ມເຕີມ) ລວມທັງການຈຳຄຸກ ທີ່ຈຳເລີຍບໍ່ໄດ້ ປະຕິບັດຕາມພັນທະຂອງຕົນທັງໝົດ. ສຳລັບຝ່າຍທີ່ໄດ້ຮັບປະໂຫຍດ ທາງການເງິນ (ອາດເປັນໜ່ວຍງານຂອງພາກລັດ ຫຼື ອົງການຈັດຕັ້ງທີ່ ແຕກຕ່າງ), ສານອາດຊອກຫາສ່ວນຄ່າຊົດເຊີຍໃຫ້ມອບແກ່ເຈົ້າໜ້າທີ່ ສືບສວນ ຫຼື ເຈົ້າໜ້າທີ່ກວດສອບການເງິນເພື່ອຮັບປະກັນໃຫ້ໄດ້ວ່າ ຄຳຕັດສິນທີ່ເປັນການຊົດເຊີຍໄດ້ຖືກນຳໃຊ້ຕາມຈຸດປະສົງທີ່ມັນໄດ້ ກຳນົດມາ.

## ຄ. ກໍລະນີສຶກສາ: ປະເທດການາດາ

ນິຕິກຳດ້ານສິ່ງແວດລ້ອມຂອງການາດາຊ່ວຍໃຫ້ສານກຳນົດມາດຕະ ການ "ຄຳຕັດສິນທີ່ມີລັກສະນະທົດລອງປະດິດສ້າງ" ແກ່ຈຳເລີຍທີ່ກະ ທຳຜິດທາງອາຍາຕໍ່ສັດປ່າ, ພ້ອມທັງການວາງໂທດອື່ນໆຕາມທີ່ກຳນົດ ໃນກົດໝາຍ.[59]

- **<u>ພື້ນຖານທາງກົດໝາຍ:</u>** ພາກທີ 16 ຂອງກົດໝາຍສັດປ່າ ການາດາ ອານຸຍາດໃຫ້ສານຕັດສິນຈຳເລີຍ "ຈັດຕັ້ງປະຕິບັດ ມາດຕະການໃດໜຶ່ງທີ່ສານພິຈາລະນາເຖິງຄວາມແທດເໝາະໃນ ການຊົດເຊີຍ ຫຼື ຫຼີກລ້ຽງຜົນເສຍຫາຍໃດໜຶ່ງຕໍ່ສັດປ່າ ທີ່ຖືກ ກະທົບ ຫຼື ອາດກະທົບຈາກການກະທຳຜິດນັ້ນ." ພ້ອມກັນນັ້ນ, ກົດໝາຍການປາມິງແຫ່ງຊາດ "ອານຸຍາດໃຫ້ສານອອກຄຳສັ່ງທີ່ມີ ລັກສະນະເປັນມິດກັບສິ່ງແວດລ້ອມໃຫ້ທຸກຄົນທີ່ກະທຳຜິດ."[60]
- **<u>ການແກ້ໄຂຄະດີ:</u>** ພາຍໃຕ້ກົດໝາຍສັດປ່າ, ຄຳຕັດສິນທີ່ມີ ລັກສະນະທົດລອງປະດິດສ້າງອາດປະກອບດ້ວຍ:
  - ສັ່ງໃຫ້ຈຳເລີຍຊົດເຊີຍຄ່າໃຊ້ຈ່າຍໃດໜຶ່ງທີ່ເປັນມາດຕະການ ຊົດເຊີຍ ຫຼື ມາດຕະການປ້ອງກັນທີ່ຕ້ອງປະຕິບັດຍ້ອນຜົນ ຈາກການກະທຳຜິດຂອງຈຳເລີຍດັ່ງກ່າວ;
  - ສັ່ງໃຫ້ຈຳເລີຍໄດ້ກຳນົດວິທີການຊຳລະຄ່າຊົດເຊີຍທີ່ອອກ ແບບເພື່ອສົ່ງເສີມການອານຸລັກ ຫຼື ປົກປັກຮັກສາສັດປ່າທີ່ ຖືກກະທົບ;
  - ສັ່ງໃຫ້ຈຳເລີຍຈ່າຍຄ່າທຶນການສຶກສາແກ່ສະຖາບັນການ ສຶກສາເພື່ອໃຫ້ນັກຮຽນໄດ້ເຂົ້າຮໍ່າຮຽນວິຊາທີ່ກ່ຽວກັບ ສິ່ງແວດລ້ອມ;
  - ສັ່ງໃຫ້ຈຳເລີຍຈ່າຍຄ່າທີ່ຈຳເປັນຕໍ່ການເຮັດການຄົ້ນຄວ້າ ເພື່ອປົກປັກຮັກສາສັດປ່າ ຫຼື ແຫຼ່ງທີ່ຢູ່ອາໄສຂອງສັດທີ່ຖືກ ກະທົບ;
  - ສັ່ງໃຫ້ຈຳເລີຍປະຕິບັດຕາມ ຫຼື ຈ່າຍໃຫ້ການຕິດຕາມຜົນ ກະທົບຕໍ່ສິ່ງແວດລ້ອມ; ແລະ
  - ສັ່ງໃຫ້ຈຳເລີຍປະກອບສ່ວນເຂົ້າໃນວຽກງານບໍລິການຊຸມຊົນ ອີງຕາມສະພາບເງື່ອນໄຂສະເພາະດ້ານທີ່ສົມເຫດຜົນໃດໜຶ່ງ ໄປພ້ອມກັບມາດຕະການອື່ນໆ.[61]

ຄະດີທາງກົດໝາຍການປາມິງແຫ່ງຊາດ ໄດ້ຍົກໃຫ້ເຫັນຄຳສັ່ງ ຕັດສິນຂອງສານທີ່ມີລັກສະນະທົດລອງປະດິດສ້າງເຊັ່ນ: "ການ ຈັດຕັ້ງປະຕິບັດຟື້ນຟູແຫຼ່ງທີ່ຢູ່ອາໄສຂອງສັດອີງຕາມບົດລາຍງານທີ່ ປຶກສາດ້ານວິສະວະກຳ; ພັດທະນາ ແລະ ຈັດຕັ້ງປະຕິບັດການປຸກ ຈິດສຳນຶກປ້ອງກັນການຮົ່ວໄຫຼຂອງນໍ້າມັນ ແລະ ການເຝິກອົບຮົມ ໃຫ້ພະນັກງານຂອງໂຮງງານຜະລິດເຈ້ຍ; ກໍ່ສ້າງສິ່ງອຳນວຍຄວາມ ສະດວກໃນການເກັບກັກນໍ້າຝົນຢູ່ໂຮງງານປຸງແຕ່ງໄມ້; ແລະ ພັດທະນາອົງປະກອບທາງການສຶກສາເພື່ອເປັນສິ່ງອຳນວຍຄວາມ ສະດວກໃນການນັບຈຳນວນປາໄຊມອນ."[62]

- **<u>ບັນຫາດ້ານຜູ້ຖືກເຄາະຮ້າຍ/ຄວາມບໍ່ເໝາະສົມ:</u>** ເພື່ອ ຫຼຸດຜ່ອນຄວາມສ່ຽງຈາກການປາກົດມີຄວາມບໍ່ເໝາະສົມ, ປະເທດການາດາໄດ້ສ້າງຕັ້ງມູນນິທິ ທີ່ແນ່ນອນ, ຊຶ່ງໄດ້ຮັບອານຸ ຍາດທາງດ້ານກົດໝາຍເພື່ອຮັບເອົາທຶນທີ່ໄດ້ຈາກຈຳເລີຍ ທີ່ລະເມີດກົດໝາຍສັດປ່າ. ໜຶ່ງໃນອົງການມູນນິທິນັ້ນ ແມ່ນ ມູນນິທິກອງທຶນອານຸລັກແຫຼ່ງທີ່ຢູ່ອາໄສຂອງສັດ ຊຶ່ງໄດ້ຮັບຄຳ ຕັດສິນທີ່ມອບປະໂຫຍດຄັ້ງທຳອິດໂດຍການຕັດສິນທີ່ມີລັກສະ ນະທົດລອງປະດິດສ້າງຢູ່ປີ 1993.[63] ຕັ້ງແຕ່ປີນັ້ນມາຈົນຮອດ ທີ 31/03/2009, ມີຄຳຕັດສິນຂອງສານທີ່ເປັນການມອບຄ່າ ຊົດເຊີຍ 294 ຄະດີໃຫ້ກັບມູນນິທິ ທີ່ໄດ້ຮັບທຶນລວມເປັນມູນ ຄ່າເກີນ 2,6 ລ້ານໂດລາ.[64]
- **<u>ການຕິດຕາມການຕັດສິນ:</u>** ເພື່ອຮັບປະກັນພັນທະຂອງຈຳ ເລີຍໄດ້ຮັບການປະຕິບັດ, ສານອາດຮ້ອງຂໍໃຫ້ຈຳເລີຍຍັງຕ້ອງວາງ ມັດຈຳ ຫຼື ຫຼັກຄໍ້າປະກັນເພື່ອຮັບປະກັນເຖິງການປະຕິບັດຕາມຂໍ້ ຫ້າມໃດໜຶ່ງ, ຄຳສັ່ງ ຫຼື ເງື່ອນໄຂ ຕາມທີ່ກຳນົດໃຫ້ເປັນສ່ວນໜຶ່ງ ຂອງຄຳຕັດສິນ.[65]

## ງ. ກໍລະນີສຶກສາ: ສະຫະລັດອາເມລິກາ ("ການບໍລິການທາງການເງິນໃຫ້ຊຸມຊົນ")

ໃນປະເທດສະຫະລັດອາເມລິກາ, ນອກເໜືອຈາກການຊົດເຊີຍ ແລະ ຄຽງຄູ່ກັບການກຳນົດໂທດທາງກົດໝາຍອື່ນໆທີ່ອາດນຳໃຊ້, ໄອຍະການທີ່ສັ່ງຟ້ອງການກະທຳຜິດທາງອາຍາຕໍ່ສິ່ງແວດລ້ອມ ແລະ ສັດປ່າ ອາດປະກອບໃບຄຳຮ້ອງໃຫ້ສານວາງໂທດ "ການຊຳລະເງິນໃຫ້ການບໍລິການທາງການເງິນແກ່ຊຸມຊົນ" ໃຫ້ຈຳເລີຍ.

- **<u>ພື້ນຖານທາງກົດໝາຍ:</u>** ບົດບັນທຶກຈາກຄະນະກຳມະການຜູ້ຊ່ວຍທະນາຍຄວາມຂອງສະຫະລັດ ຮ່ວມກັບທະນາຍຄວາມຄະດີອາດຊະຍາກຳຕໍ່ສິ່ງແວດລ້ອມ, ລົງວັນທີ 16/01/2009, ຮັບຮູ້ວ່າ ອຳນາດການປົກຄອງ ແລະ ການຈັດຕັ້ງປະຕິບັດຂອງທະນາຍຄວາມສະຫະລັດເພື່ອຄົ້ນຄວ້າການບໍລິການດ້ານການເງິນໃຫ້ຊຸມຊົນໃນການດຳເນີນຄະດີການກະທຳຜິດຕໍ່ສິ່ງແວດລ້ອມ. ບົດບັນທຶກກຳນົດໄວ້ວ່າ "ການຊົດເຊີຍສຸມໃສ່ການຊຳລະໃຫ້ຄ່າເສຍຫາຍທີ່ໄດ້ກຳນົດເພື່ອຊ່ວຍຜູ້ທີ່ຖືກເຄາະຮ້າຍທີ່ບົ່ງໂຕໄດ້ສະເພາະດ້ານຈາກອາດຊະຍາກຳສະເພາະນີ້, ພ້ອມທັງການບໍລິການຊຸມຊົນທີ່ມັກເນັ້ນໃສ່ເງື່ອນໄຂເຊັ່ນ: ການເຊື່ອມໂຊມຂອງສິ່ງແວດລ້ອມໂດຍລວມ, ຊຶ່ງຜູ້ຖືກເຄາະຮ້າຍບໍ່ສາມາດກຳນົດໄດ້ເປັນລາຍບຸກຄົນ. ການບໍລິການໃຫ້ຊຸມຊົນ…ອາດເປັນການຢັບຢັ້ງພຶດຕິກຳການກະທຳຜິດເພີ່ມເຕີມ, ສົ່ງເສີມການປະຕິບັດຕາມກົດໝາຍສິ່ງແວດລ້ອມໃຫ້ດີກວ່າເກົ່າ, ແລະ ຍົກສູງບັນດາບູລິມະສິດທີ່ສຳຄັນເຊັ່ນ: ການປ້ອງກັນມົນລະພິດ, ການສົ່ງເສີມເຕັກໂນໂລຊີທີ່ເປັນມິດກັບສິ່ງແວດລ້ອມຫຼາຍຂຶ້ນ ແລະ ປັບປຸງການຄຸ້ມຄອງບໍລິຫານຂອງວິສາຫະກິດ."[66]

- **<u>ວິທີແກ້ໄຂ:</u>** ການຊຳລະໃຫ້ແກ່ການບໍລິການທາງການເງິນໃນຊຸມຊົນຈະຕ້ອງເປັນການແກ້ໄຂຜົນເສຍຫາຍໂດຍກົງ ທີ່ຕ້ອງການຢາກຊົດເຊີຍ. ໃນຄະດີການລັກລອບຄ້າຂາຍສັດປ່າ, ບຸກຄົນທີສາມໄດ້ຊຳລະໃຫ້ຜົນເສຍຫາຍໂດຍກົງ ທີ່ຈະຕ້ອງເນັ້ນໃສ່ການປົກປັກຮັກສາ ແລະ ຟື້ນຟູສາຍພັນສັດທີ່ຖືກກະທົບ, ດີແທ້ແມ່ນປະຊາກອນຂອງສັດທີ່ຖືກກະທົບຕາມຄວາມເປັນໄປໄດ້. ການຊຳລະທີ່ສົ່ງເສີມການຟື້ນຟູສາຍພັນສັດທີ່ແຕກຕ່າງ ຫຼື ບໍ່ກ່ຽວຂ້ອງ ບໍ່ໄດ້ຕອບສະໜອງມາດຕະຖານຂອງ "ການຊົດເຊີຍໂດຍກົງ."[67]

- **<u>ບັນຫາຜູ້ຖືກເຄາະຮ້າຍ/ຄວາມບໍ່ເໝາະສົມ:</u>** ຖ້າການຊຳລະການເງິນໃຫ້ການບໍລິການໃນຊຸມຊົນຊອກຫາການສະໜອງທຶນໃຫ້ກິດຈະກຳທີ່ຄ້າຍຄືກັນມີຄວາມຈຳເປັນ ທີ່ເປັນສ່ວນໜຶ່ງຂອງສະພາທີ່ໄດ້ອານຸຍາດໄປແລ້ວ ແລະ ສະໜອງທຶນໃຫ້ແຜນງານ, ມັນຈະເປັນການພິຈາລະນາທີ່ຫຼາຍເກີນໄປ ແລະ ອາດບໍ່ໄດ້ຮັບອານຸຍາດ.[68] ນອກເໜືອຈາກການສະໜອງທຶນໃຫ້ອົງການຈັດຕັ້ງສະເພາະ, ພາກທີ 8 ຂ 1.2 (ຂ) ຂອງບົດແນະນຳການຕັດສິນໃນສະຫະລັດ ອານຸຍາດໃຫ້ຜູ້ພິພາກສາສ້າງກອງທຶນເພື່ອແກ້ໄຂ ຜົນເສຍຫາຍທີ່ຄາດໝາຍໄດ້ ເມື່ອສານສາມາດ ປະເມີນຄ່າຢ່າງສົມເຫດຜົນ ຕໍ່ຂະໜາດຂອງຜົນເສຍຫາຍໃນອານາຄົດ.[69]

- **<u>ການຕິດຕາມການຕັດສິນ:</u>** ການຕິດຕາມທີ່ຊັດເຈນ ແລະ ຂໍ້ກຳນົດຕໍ່ການບັງຄັບໃຊ້ກົດໝາຍຈະຕ້ອງຖືກສ້າງຕັ້ງຂຶ້ນເພື່ອຮັບປະກັນໃຫ້ໄດ້ວ່າ ບັນດາໂຄງການທີ່ກ່ຽວຂ້ອງໄດ້ຮັບການຈັດຕັ້ງປະຕິບັດ ແລະ "ຕໍ່ກັບສະພາບທີ່ຊັບຊ້ອນ ທີ່ອາດເປັນຄະດີທາງສິ່ງແວດລ້ອມ, ສຳນັກງານປະຕິບັດການພາກໂທດ ອາດຍັງບໍ່ທັນມີອຸປະກອນພຽງພໍໃນການປະເມີນຜົນການປະຕິບັດຕາມຫຼັກການທີ່ໃຫ້ບໍລິການແກ່ຊຸມຊົນ ທີ່ເປັນຮູບການຂອງຄຳຕັດສິນຂອງສານ."[70] ບາງຍຸດທະສາດທີ່ສານສະຫະລັດໄດ້ນຳໃຊ້ແມ່ນ:
    - ຮຽກຮ້ອງໃຫ້ອົງການຈັດຕັ້ງທີ່ຮັບຜິດຊອບປະຕິບັດໂຄງການສິ່ງແວດລ້ອມໃຫ້ສະໜອງບົດລາຍງານການບັນຊີປະຈຳປີ ຫຼື ໄຕມາດເພື່ອຍົກໃຫ້ເຫັນເຖິງວິທີຂອງການນຳໃຊ້ກອງທຶນ;
    - ສຳລັບໂຄງການບໍລິການໃຫ້ຊຸມຊົນທີ່ມີຂະໜາດໃຫຍ່ຂຶ້ນ, ການນຳໃຊ້ນັກກວດສອບບັນຊີ ຫຼື ທີ່ປຶກສາພາຍນອກຈະຮັບປະກັນການຈັດຕັ້ງປະຕິບັດຄຳຕັດສິນຂອງສານທີ່ອາດມີຄວາມແທດເໝາະ;
    - ການມອບສິດໃນການເຂົ້າເຖິງ ລວມທັງການເຂົ້າເຖິງທີ່ບໍ່ໄດ້ປະກາດເປັນທາງການ ໃນພື້ນທີ່ມີໂຄງການບໍລິການຊຸມຊົນເພື່ອຈຸດປະສົງໃນການກວດກາສະພາບທາງກາຍຍະພາກ, ເກັບຕົວຢ່າງຕາມຄວາມຈຳເປັນ, ສຳພາດພະນັກງານ ແລະ ທົບທວນບັນດາເອກະສານທີ່ກ່ຽວຂ້ອງ;
    - ອານຸຍາດໃຫ້ນຳໃຊ້ທຶນເຂົ້າໃນອົງການມູນນິທິ ຫຼື ອົງການຈັດຕັ້ງສະເພາະໃດໜຶ່ງທີ່ໄດ້ຮັບອານຸຍາດຈາກສະພາ ແລະ ກົດໝາຍທີ່ຍອມຮັບການບໍລິຈາກເພື່ອຈຸດປະສົງນີ້; ແລະ
    - ໃນເມື່ອການຊຳລະໄດ້ປະກອບເຂົ້າເປັນກອງທຶນ ໂດຍມີບຸກຄົນທີສາມທີ່ເປັນກາງເຊັ່ນ: ເຈົ້າໜ້າທີ່ຈາກພາກລັດໃນທ້ອງຖິ່ນ ຫຼື ສະຖາບັນການເງິນທີ່ຄຸ້ມຄອງບັນຊີ; ຫຼື ມີເງິນທີ່ຖອກໃນບັນຊີທີ່ກ່ຽວຂ້ອງ ແລະ ຮອບວຽນການຊຳລະເປັນປະຈຳຈົນກວ່າໂຄງການຈະສຳເລັດ.[71]

## ຈ. ກໍລະນີສຶກສາ: ປະເທດອິດສະຕາລີ

- **<u>ພື້ນຖານທາງກົດໝາຍ:</u>** ພາຍໃຕ້ກົດໝາຍການປົກປັກຮັກສາສິ່ງແວດລ້ອມ 1997 ຂອງອິດສະຕາລີ (ກົດໝາຍ ພີໂອອີໂອ), ຈຳນວນຂອງທາງເລືອກຄຳຕັດສິນໃໝ່ໄດ້ຮັບການແນະນຳ, ຊຶ່ງເປັນຄຳຕັດສິນທີ່ເພີ່ມເຕີມ, ຫຼື ສອດຄ່ອງກັບ ຄ່າປັບໄໝ ຫຼື ຄຳຕັດສິນຕັດອິດສະຫຼະພາບໃດໜຶ່ງທີ່ອາດໄດ້ກຳນົດໂທດໃຫ້. ໜຶ່ງ ຫຼື ຫຼາຍກວ່າຄຳສັ່ງຂອງສານອາດມີໃຫ້ຈຳເລີຍ ແລະ ຄຳສັ່ງຍັງມີເມື່ອການກະທຳຜິດແມ່ນຮັບຮູ້ແຕ່ບໍ່ມີການບັນທຶກເປັນການກະທຳຜິດ.[72]

- **<u>ວິທີແກ້ໄຂ:</u>** "ສານມີທາງເລືອກໃນການຕັດສິນໂດຍຮັບຮູ້ເຖິງພາວະວິໄສທີ່ຄ່າປັບໄໝ/ການຕັດອິດສະຫຼະພາບບໍ່ແມ່ນການລົງໂທດທີ່ພຽງພໍ ຫຼື ແທດເໝາະສະເໝີໄປ…ຈຸດປະສົງແມ່ນຄວາມພະຍາຍາມໃນການເຮັດໃຫ້ສະພາບແວດລ້ອມກັບຄືນສູ່ສະພາບເກົ່າ, ແລະ ໃຫ້ຊຸມຊົນ/ທີ່ຖືກກະທົບໂດຍການກະທຳຜິດນັ້ນ, ກັບມາຢູ່ໃນສະພາບເກົ່າກ່ອນການກະທຳຜິດ ແລະ ຍັງຮັບປະກັນໃຫ້ໄດ້ວ່າ: ຜູ້ກະທຳຜິດໄດ້ປະຕິບັດບາດກ້າວເພື່ອປ້ອງກັນຜົນເສຍຫາຍໃນອານາຄົດ."[73]

ພາຍໃຕ້ກົດໝາຍສິ່ງແວດລ້ອມຂອງອິດສະຕາລີ, ສານອາດສັ່ງໃຫ້ຜູ້ກະທຳຜິດປະຕິບັດຄື:

- ໃຫ້ຈ່າຍຄ່າຕ່າງໆໃນການສືບສວນ (ພາກທີ 248 (1));

- ຊຳລະເປັນຈຳນວນເງິນຂອງຜົນກຳໄລທາງການເງິນທີ່ເກີດຈາກການກະທຳຜິດ (ພາກທີ 249 (1));
- ພິມເຜີຍແຜ່ລາຍລະອຽດຂອງການກະທຳຜິດ ແລະ ຄຳສັ່ງຂອງສານລົງໃນໜັງສືພິມ ແລະ/ຫຼື ໃນບົດລາຍງານປະຈຳປີຂອງບໍລິສັດ (ພາກທີ 250 (1)(ກ)-(ຂ));
- ຈັດຕັ້ງໂຄງການສະເພາະດ້ານເພື່ອການຟື້ນຟູ ຫຼື ອານຸລັກສິ່ງແວດລ້ອມໃນສະຖານທີ່ສາທາລະນະ ຫຼື ເພື່ອຜົນປະໂຫຍດລວມ (ພາກທີ 250 (1)(ຄ));
- ຈັດຕັ້ງການກວດສອບສະພາບສິ່ງແວດລ້ອມສະເພາະດ້ານຂອງບັນດາກິດຈະກຳທີ່ຜູ້ກະທຳຜິດໄດ້ເຮັດ (ພາກທີ 250 (1)(ງ)); ແລະ
- ທຳຄວາມສະອາດ ແລະ ຈ່າຍຄ່າຊົດເຊີຍ.[74]

- **<u>ບັນຫາຜູ້ຖືກເຄາະຮ້າຍ/ຄວາມບໍ່ເໝາະສົມ:</u>** ອີງຕາມຜູ້ພິພາກສາ ໄບອັນ ເຈ ເພດທັນ, ຜູ້ຖືກເຄາະຮ້າຍ ເພື່ອຈຸດປະສົງການຮັບຄ່າຊົດເຊີຍຈາກຜົນເສຍຫາຍຕໍ່ສິ່ງແວດລ້ອມ ຫຼື ສັດປ່າໃນປະເທດອົດສະຕາລີ ອາດປະກອບດ້ວຍ: ປະຊາຊົນເຜົ່າອາໂບລິຈິນ, ບຸກຄົນອື່ນໆທີ່ຊີວິດ ຫຼື ສຸຂະພາບໄດ້ຮັບຜົນກະທົບ, ບຸກຄົນອື່ນໆທີ່ຊັບສິນຂອງຕົນຖືກກະທົບ, ສະມາຊິກໃນຊຸມຊົນ ຫຼື ຄົນລຸ້ນຫຼັງທີ່ເປັນຕົວແທນໂດຍລັດຖະບານ ຫຼື ອົງການຈັດຕັ້ງທີ່ບໍ່ສັງກັດລັດ ຮັບຜິດຊອບ ຫຼື ກ່ຽວຂ້ອງກັບການປົກປັກຮັກສາສິ່ງແວດລ້ອມທີ່ຖືກກະທົບນັ້ນ.[75]
- **<u>ການຕິດຕາມການຕັດສິນ:</u>** ຜູ້ກະທຳຜິດອາດຖືກສານສັ່ງໃຫ້ເຮັດບົດລາຍງານດ້ວຍຕົນເອງແລ້ວສົ່ງໃຫ້ສານ ແລະ ໜ່ວຍງານກົດໝາຍທີ່ອາດຕິດຕາມພຶດຕິກຳຂອງຜູ້ກະທຳຜິດ ແລະ ລາຍງານຜົນໄດ້ຮັບໃຫ້ສານຮັບຮູ້.[76] ໃນກໍລະນີອື່ນໆ, ບັນດາບົດແນະນຳອາດຖືກນຳໃຊ້ໃຫ້ເຂົ້າກັບຄຳສັ່ງສະເພາະ ແລະ ອາດເປັນເງື່ອນໄຂໃນການພິມເຜີຍແຜ່ມາດຕະການບັງຄັບໃຊ້ກົດໝາຍໃດໜຶ່ງ.[77] ສິ່ງນີ້ຈະຊ່ວຍຮັບປະກັນຄວາມໂປ່ງໃສ, ການກວດສອບທີ່ອາດຊ່ວຍໃນການປາບປາມ.[78]

## ສ. ການນຳໃຊ້ຄຳຕັດສິນເພີ່ມເຕີມໃນລະບົບຍຸຕິທຳອື່ນໆ:

### 1) ປະເທດນາມິເບຍ:

ຄຽງຄູ່ກັບການກຳນົດໂທດຕາມກົດໝາຍທົ່ວໄປ, ການຕັດສິນຜູ້ກະທຳຜິດຈາກການລະເມີດກົດໝາຍການຄ້າສັດປ່າໃນປະເທດນາມິເບຍ, ສານສາມາດກຳນົດໂທດປັບໄໝເພີ່ມເຕີມ ຫຼື ຄ່າຊົດເຊີຍທີ່ເປັນປະໂຫຍດແກ່ປະເທດ, ເພື່ອ:

ກ) ຄ່າໃຊ້ຈ່າຍທັງໝົດທີ່ຕິດພັນກັບການປິ່ນປົວ ຫຼື ດູແລທາງການແພດສຳລັບພັນສັດທີ່ມີຊີວິດ ແລະ ເພື່ອການຖິ້ມນັ້ນ ຈະເກີດກ່ອນ ຫຼື ເກີດຫຼັງຄຳຕັດສິນກໍ່ຕາມ;

ຂ) ຄ່າໃຊ້ຈ່າຍທັງໝົດທີ່ຕິດພັນກັບການສົ່ງຄືນພັນສັດໃດໜຶ່ງ (ຈະຍັງມີຊີວິດ ຫຼື ຕາຍກໍ່ຕາມ) ກັບຄືນໄປປະເທດທີ່ເປັນຕົ້ນທາງ; ແລະ

ຄ) ຈຳນວນໃດນຶ່ງທີ່ເທົ່າກັບຕົ້ນທຶນທັງໝົດທີ່ເກີດຂຶ້ນເພື່ອການຟື້ນຟູປະຊາກອນສັດປ່າທີ່ຖືກກະທົບຜ່ານຂັ້ນຕອນການເຄື່ອນຍ້າຍທີ່ຜິດກົດໝາຍຈາກປ່າໂດຍບຸກຄົນທີ່ກະທຳຜິດ ຫຼື ພາໃຫ້ເກີດຜົນກະທົບທີ່ຜິດກົດໝາຍໂດຍບຸກຄົນທີ່ກະທຳຜິດ.[79]

ຢ່າງໃດກໍ່ຕາມ, "ມັນກໍ່ບໍ່ຊັດເຈນການກຳນົດໂທດເພີ່ມເຕີມແບບນີ້ໄດ້ມີການປະຕິບັດເປັນປະຈຳ ຫຼື ບໍ່."[80]

### 2) ປະເທດມຽນມາ:

ໃນປະເທດມຽນມາ, ພາຍໃຕ້ກົດໝາຍການປົກປ້ອງສັດປ່າ ແລະ ອານຸລັກພື້ນທີ່ທຳມະຊາດ, ລົງວັນທີ 08/06/1994, ພາກ 39 ຂອງກົດໝາຍນີ້ໄດ້ກຳນົດວ່າ ຄຽງຄູ່ກັບການກຳນົດໂທດຕາມກົດໝາຍທີ່ອາດໃຊ້ກັບການກະທຳຜິດຕໍ່ສັດປ່າ, ສານຍັງມີສິດສົ່ງຜ່ານຄຳສັ່ງເພື່ອຟ້ອງຮ້ອງເອົາ "ມູນຄ່າການສູນເສຍ ແລະ ຜົນເສຍຫາຍຕໍ່ກົມປ່າໄມ້ທີ່ເກີດຈາກຜູ້ກະທຳຜິດ ເພື່ອໃຫ້ຊຳລະໃນຮູບແບບຂອງການຊົດເຊີຍ."[81] ອີກເທື່ອໜຶ່ງ ມັນຍັງບໍ່ຊັດເຈນວ່າ ສິດໃນການຊົດເຊີຍທີ່ກຳນົດໃຫ້ຈັດຕັ້ງປະຕິບັດແຕ່ສະທ້ອນໃຫ້ເຫັນຄວາມເປັນໄປໄດ້ທີ່ລັດຖະບານໄດ້ຊອກຫາການຊົດເຊີຍແກ່ຜູ້ຖືກເຄາະຮ້າຍຈາກອາດຊະຍາກຳສັດປ່າ.

## ຊ. ການບັນລຸຂໍ້ຕົກລົງ:

ເມື່ອມີຜົນເສຍຫາຍເກີດຈາກການລະເມີດກົດໝາຍສິ່ງແວດລ້ອມ ສ່ວນຫຼາຍມັກເກີດເປັນວົງກວ້າງ, ໃຊ້ເວລາດົນ, ແລະ ບໍ່ເຊື່ອມສະຫຼາຍງ່າຍ, ແລະ ສາມາດສືບຕໍ່ເປັນບັນຫາໃນໄລຍະຍາວພາຍຫຼັງກິດຈະກຳການທຳຄວາມສະອາດທົ່ວໄປໄດ້ສຳເລັດ, "ການບັນລຸຂໍ້ຕົກລົງຍັງມັກປະກອບດ້ວຍການຊຳລະເງິນເຂົ້າໃນກອງທຶນສິ່ງແວດລ້ອມເພື່ອຕິດຕາມ, ອານຸລັກ ແລະ ສະຫງວນໄວ້ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມທີ່ຖືກກະທົບຈາກການລະເມີດ."[82]

ນອກເໜືອຈາກການເພິ່ງພາຄຳຕັດສິນຂອງສານໃຫ້ມີການຊົດເຊີຍ ຫຼື ຊຳລະເງິນເປັນການຊົດເຊີຍ, ໄອຍະການອາດຍັງສາມາດບັນຈຸເອົາເງື່ອນໄຂເພື່ອເຮັດໃຫ້ການຊຳລະເງິນດັ່ງກ່າວເປັນສ່ວນໜຶ່ງຂອງການເຈລະຈາການກະທຳຜິດກ່ອນການຕັດສິນຂອງສານ.

ການດຳເນີນຄະດີນ້ຳມັນຮົ່ວຈາກບໍລິສັດ ເອັກຊອນ ວາເດັດ ອາລາດສກາ ແມ່ນໜຶ່ງໃນຕົວຢ່າງທີ່ຮູ້ກັນດີໃນສະຫະລັດ, ທີ່ເປັນບ່ອນປະຕິບັດຕາມການບັນລຸຂໍ້ຕົກລົງ, ສານຕັດສິນປັບໄໝ 2 ນິຕິບຸກຄົນເປັນຈຳນວນເງິນທັງໝົດ 150 ລ້ານໂດລາ ດັ່ງລຸ່ມນີ້:

1) 125 ລ້ານໂດລາ ແມ່ນປັບໄໝບົນພື້ນຖານປັດໃຈການຄິດໄລ່ຄ່າທຳຄວາມສະອາດກັບບໍລິສັດ ເອັກຊອນ ສຳລັບການຮົ່ວຂອງນ້ຳມັນ ແລະ ລາຍຈ່າຍສຳລັບພາກສ່ວນທີ່ຖືກບາດເຈັບ; ແລະ

2) 12 ລ້ານໂດລາ ໄດ້ຈ່າຍໃຫ້ກອງທຶນອານຸລັກດິນບໍລິເວນນ້ຳຢູ່ພື້ນທີ່ອາເມລິກາເໜືອ ທີ່ເປັນກອງທຶນສ້າງຕັ້ງໂດຍສະພາ.[83]

ພ້ອມກັນນັ້ນ, ຈຳເລີຍໄດ້ຈ່າຍ 100 ລ້ານໂດລາ ເປັນການຊົດເຊີຍ ແລະ ການຊຳລະເງິນເພື່ອຄ່າຊົດເຊີຍ, ຊຶ່ງຖືກໃຊ້ສະເພາະໃຫ້ໂຄງການຟື້ນຟູ ພາຍໃນລັດອາລາດສກາ.[84]




ເຈົ້າໜ້າທີ່ອານຸລັກສັດປ່າໄດ້ສືບສວນກໍລະນີງາຊ້າງທີ່ຍຶດໄດ້ໃນລະຫວ່າງພາລະກິດໂຄບລາ 1. ໃນເດືອນມັງກອນ 2013, ເຄືອຄ່າຍບັງຄັບໃຊ້ກົດໝາຍສັດປ່າຂອງອາຊຽນ (ອາຊຽນ-ເວັນ), ປະເທດຈີນ, ສະຫະລັດ, ຊາດສະມາຊິກຂອງພາກພື້ນອາຊີໃຕ້ ແລະ ອາຟຣິກກາໄດ້ເຂົ້າຮ່ວມໃນພາລະກິດ ໂຄບລາ ເພື່ອຍຶດ ແລະ ຈັບກຸມຜູ້ຖືກຫາຫຼາຍຄົນ, ໃນນັ້ນ ບາງຄົນກໍ່ຖືກດໍາເນີນຄະດີ. ພາລະກິດໂຄບລາ ໄດ້ຮັບການຊຸກຍູ້ທາງການເງິນ ແລະ ວິຊາການຈາກລັດຖະບານສະຫະລັດ ແລະ ອົງການຟີແລນ. ອົງການຟີແລນ.

ໃນການນໍາໃຊ້ຂະບວນການບັນລຸຂໍ້ຕົກລົງເພື່ອກໍານົດຄໍາຕັດສິນເພີ່ມເຕີມນັ້ນ, ໄອຍະການຄວນເອົາໃຈໃສ່ເພື່ອຮັບປະກັນວ່າ ຈໍາເລີຍບໍ່ສາມາດເຈລະຈາ (ແລະ ຈ່າຍ) ຫົນທາງທີ່ຈະພົ້ນໂທດໜັກໜ່ວງກວ່າ ເຊັ່ນ: ການຈໍາຄຸກ ແລະ ການຍອມຮັບການກະທໍາຜິດ. ເພື່ອເຮັດໃຫ້ການກໍານົດໂທດທີ່ລະບຸນັ້ນຖອດຖອນສິດຂອງຜູ້ກະທໍາຜິດຕາມຈຸດປະສົງເພື່ອຮັກສາມາດຕະການປາບປາມຢ່າງມີປະສິດທິຜົນ, ການຊົດເຊີຍຜົນເສຍຫາຍ ແລະ ການຮັບປະກັນເຖິງການລົງໂທດທີ່ເໝາະສົມ, ການກໍານົດໂທດທາງກົດໝາຍພິເສດເຊັ່ນ: ການຊໍາລະເງິນໃຫ້ການຊົດເຊີຍ ແລະ ຄ່າຊົດເຊີຍ ຄວນເຮັດພຽງແຕ່ການປະສົມປະສານກັບຄໍາຕັດສິນກໍານົດໂທດແບບທົ່ວໄປ ແລະ ບໍ່ໄດ້ບັນຈຸໃນມາດຕະການລົງໂທດດັ່ງກ່າວ.[85]

# ການພິຈາລະນາເພີ່ມເຕີມ ແລະ ສິ່ງທ້າທາຍຕ່າງໆ

ນອກເໜືອຈາກບັນຫາທາງກົດໝາຍທີ່ໄດ້ກຳນົດໃນຂໍ້ 2 (ຂ) ແລະ ຂໍ້ 3 (ຂ) ຂ້າງເທິງນັ້ນ, ການຈັດຕັ້ງປະຕິບັດແຜນງານການຊົດເຊີຍ ຫຼື ຄຳຕັດສິນເພີ່ມເຕີມ, ນັກກົດໝາຍຄວນພິຈາລະນາດັ່ງລຸ່ມນີ້:

- ກອບວຽກທາງກົດໝາຍທີ່ມີໃນປະຈຸບັນ ແລະ ວິທີ ທີ່ມາດຕະການດັ່ງກ່າວສາມາດວາງໄດ້ໂດຍປາດສະຈາກການຂໍປັບປຸງກົດໝາຍທີ່ມີຢູ່;
- ຄວາມສາມາດທາງການເງິນຂອງຜູ້ກະທຳຜິດ ແລະ ຄວາມສາມາດໃນການທັບມ້າງຂະບວນການອາດຊະຍາກຳ;
- ຊອກຫາການຊົດເຊີຍຈາກລັດຖະບານຕ່າງປະເທດເມື່ອຜົນເສຍຫາຍເກີດໃນທ້ອງຖິ່ນແຕ່ຜູ້ກະທຳຜິດຖືກດຳເນີນຄະດີໃນລະບົບຍຸຕິທຳຂອງຕ່າງປະເທດ;
- ອານຸຍາດໃຫ້ສາທາລະນະຊົນມີສ່ວນຮ່ວມໃນການກຳນົດຫືວໜ່ວຍມູນຄ່າ ແລະ ປະເມີນຜົນເສຍຫາຍທີ່ເກີດ; ແລະ
- ຊ່ວຍໃຫ້ຜູ້ຖືກເຄາະຮ້າຍສາມາດໄດ້ຮັບການຊົດເຊີຍທີ່ແຍກຕ່າງຫາກຜ່ານການປົກປ້ອງຜົນປະໂຫຍດສ່ວນລວມ (ພົນລະເມືອງ).

## ກ. ອັບເດດ ຫຼື ປັບປຸງກອບວຽກທາງກົດໝາຍໃນປະຈຸບັນ:

1. ຖ້າພື້ນຖານທາງກົດໝາຍທີ່ມີໃນປະຈຸບັນບໍ່ອານຸຍາດໃຫ້ສານກຳນົດ (ຫຼື ໃຫ້ການດຳເນີນຄະດີມີຂັ້ນຕອນການຕໍ່ລອງ) ການຊົດເຊີຍ ຫຼື ມາດຕະການຄຳຕັດສິນເພີ່ມເຕີມອື່ນໆ, ເພື່ອໃຫ້ມາດຕະການດັ່ງກ່າວສອດຄ່ອງກັບກອບວຽກທີ່ມີ, ນິຕິກຳທາງອາຍາທີ່ກ່ຽວຂ້ອງ ແລະ/ຫຼື ບົດແນະນຳການຕັດສິນຂອງສານອາດຕ້ອງການໆອັບເດດ ຫຼື ປັບປຸງ. ສິ່ງນີ້ອາດເປັນກໍລະນີທີ່ເກີດຂຶ້ນໃນປະຈຸບັນກັບລະບົບຍຸຕິທຳເກືອບທັງໝົດ.
2. ຂັ້ນຕອນການປັບປຸງບັນດາກົດໝາຍມີຂໍ້ຈຳກັດຫຼາຍດ້ານ, ໂດຍສະເພາະແມ່ນການຮຽກຮ້ອງໃຫ້ອຳນາດການປົກຄອງຈາກລະດັບການນຳຂັ້ນເທິງຂອງພາກລັດ ແລະ ໃຊ້ເວລາຫຼາຍປີທີ່ຈະເກີດຜົນ. ດ້ວຍເຫດຜົນດັ່ງກ່າວ, ມັນອາດມີຄວາມ ເໝາະສົມທີ່ຈະພິຈາລະນາເຖິງວິທີນຳໃຊ້ມາດຕະການເພື່ອນຳມາຈັດຕັ້ງປະຕິບັດໂດຍປາດສະຈາກຄວາມຕ້ອງການປັບປຸງທາງນິຕິກຳ. ຄວາມເປັນໄປໄດ້ບາງດ້ານອາດປະກອບດ້ວຍ:
   - **<u>ວິຈາລະຍານຂອງເຈົ້າໜ້າທີ່:</u>** ໃນເວລາທີ່ມີການຄຸ້ມຄອງຂອງພາກລັດທີ່ດີ ຄວນຂໍໃຫ້ສານກຳນົດຫຼັກການສະເພາະເພື່ອວາງໂທດໃຫ້ຜູ້ກະທຳຜິດ, ຈົນກວ່າຫຼັກການ ຫຼື ຄຳແນະນຳໄດ້ມີການປະກາດໃຊ້ ຫຼື ແຈ້ງການອອກມາ, ບັນດານັກກົດ ໝາຍອາດພິຈາລະນາສະພາບທີ່ສານໄດ້ນຳໃຊ້ວິຈາລະຍານໃນການຕັດສິນເພີ່ມເຕີມພາຍໃຕ້ກອບວຽກໃນປະຈຸບັນ.
   - **<u>ການປັບປຸງບົດແນະນຳຄຳຕັດສິນ:</u>** ຍ້ອນວິທີນີ້ເປັນມາດຕະການຄຳຕັດສິນ ວິທີໜຶ່ງທີ່ຈະເຊື່ອມສານມາດຕະການເຂົ້າກັບກອບວຽກໂດຍບໍ່ໃຫ້ມີການປັບປຸງນິຕິກຳ ອາດແມ່ນການປັບປຸງບັນດາບົດແນະນຳຄຳຕັດສິນເພື່ອໃຫ້ເກີດການພິຈາລະນາສະເພາະມາດຕະການເພີ່ມເຕີມ ຫຼື (ຢ່າງໜ້ອຍໃນເບື້ອງຕົ້ນ ທີ່ພວມພິຈາລະນາການປັບປຸງບົດແນະນຳເພີ່ມເຕີມ) ເພື່ອໃຫ້ສານໃຊ້ວິຈາລະຍານໃນການພິຈາລະນາມາດຕະການເພີ່ມເຕີມຕໍ່ຈຳເລີຍ. ໃນເວລາທີ່ພວມປັບປຸງບົດແນະນຳຄຳຕັດສິນຂອງສານອາດຍັງຕ້ອງການໆຮັບຮອງຈາກຫຼາຍລະດັບການຄຸ້ມຄອງ, ມັນອາດມີປະສິດທິພາບດ້ານເວລາຫຼາຍຂຶ້ນ ແລະ ມີຂໍ້ຈຳກັດໜ້ອຍລົງ ເມື່ອທຽບໃສ່ການປັບປຸງບັນດາກົດໝາຍ ຫຼື ດຳລັດ.
   - **<u>ການນຳໃຊ້ຂະບວນການຕໍ່ລອງ:</u>** ບັນດານັກກົດໝາຍອາດພິຈາລະນາເຖິງລະບຽບການຕ່າງໆທີ່ປິ່ນອ້ອມຂະບວນການຕໍ່ລອງເພື່ອກຳນົດສະພາບໃຫ້ມາດຕະການຄຳຕັດສິນເພີ່ມເຕີມນັ້ນ ສາມາດບັນຈຸເຂົ້າໃນຂະບວນການຕໍ່ລອງພາຍໃຕ້ກອບວຽກທີ່ມີຢູ່ ແລະ ໃນສ່ວນທີ່ຍັງບໍ່ທັນມີ, ຖ້າປັດໃຈພຽງໜ້ອຍດຽວແຕ່ກະຕຸ້ນກອບວຽກດັ່ງກ່າວກໍ່ສາມາດຖືກເຊື່ອມສານໃນຮູບຮ່າງຂອງການກຳນົດການຄຸ້ມຄອງ ຫຼື ຄຳແນະນຳທີ່ອອກໂດຍຂັ້ນຄຸ້ມຄອງທີ່ຕໍ່າລົງ (ເຊັ່ນ: ຂັ້ນກະຊວງ ຫຼື ຂັ້ນກົມ).
   - **<u>ສານສິ່ງແວດລ້ອມ ຫຼື ສານສະເພາະຄະດີ:</u>** ໃນເມື່ອບົດແນະນຳຄຳຕັດສິນຂອງສານໂດຍລວມຍັງບໍ່ສາມາດປັບປຸງໄດ້ຢ່າງວ່ອງໄວ ຫຼື ຖືກໝູນໃຊ້ໂດຍປາດສະຈາກຂັ້ນຕອນການປະເມີນຂໍ້ຈຳກັດ (ຫຼື ໃນເວລາທີ່ຂັ້ນຕອນດັ່ງກ່າວກຳລັງຖືກຈັດຕັ້ງປະຕິບັດ), ບັນດາລັດຖະບານທີ່ໄດ້ພັດທະນາປະເພດຂອງສານສະເພາະຄະດີສິ່ງແວດລ້ອມ ຫຼື ຄະດີທີ່ມີລັກສະນະຄ້າຍຄືກັນ ອາດມີພື້ນທີ່ສຳລັບບົດແນະນຳຄຳຕັດສິນຂອງສານດັ່ງກ່າວເພື່ອຊ່ວຍໃຫ້ສາມາດກຳນົດມາດຕະການຄຳຕັດສິນເພີ່ມເຕີມ ຫຼື ອາດສາມາດປັບປຸງຄູ່ມືການຕັດສິນໃຫ້ງ່າຍກວ່າເກົ່າສຳລັບສານສະເພາະຄະດີ, ຕາມທິດທາງຂອງຄຳສັ່ງ ຫຼື ຄຳແນະນຳທີ່ອອກໂດຍລະດັບການຄຸ້ມຄອງທີ່ຕໍ່າລົງ.

## ຂ. ຂີດຄວາມສາມາດທາງການເງິນຂອງຜູ້ກະທຳຜິດ ແລະ ຮິບຊັບສິນຂອງອາດຊະຍາກອນ:

ຜົນສຳເລັດຂອງແຜນງານການຊົດເຊີຍ ຫຼື ຈ່າຍຄ່າຊົດເຊີຍໃດໜຶ່ງຈະຂຶ້ນກັບຂີດຄວາມສາມາດທາງການເງິນຂອງຈຳເລີຍ (ເຊັ່ນ: ຄວາມສາມາດໃນການຈ່າຍຂອງຜູ້ກະທຳຜິດ) ແລະ ຍິ່ງກວ່ານັ້ນ ສານ/ເຈົ້າໜ້າທີ່ມີຄວາມສາມາດເຂົ້າເຖິງການເງິນ ແລະ ຊັບສິນຂອງຈຳເລີຍ.

ໃນການສືບສວນສອບສວນ ແລະ ດຳເນີນຄະດີອາດຊະຍາກຳສັດປ່າ, ເຈົ້າໜ້າທີ່ມັກມີບົດບາດສິດອຳນາດໃນການຮິບສັດປ່າທີ່ຜິດກົດໝາຍດ້ວຍຕົນເອງ ແລະ ຊັບສິນທີ່ຖືກໃຊ້ໃນການກະທຳຜິດ. ຂຶ້ນກັບຫຼັກການທີ່ນຳໃຊ້ໃນລະບົບຍຸຕິທຳທີ່ກ່ຽວຂ້ອງ, ສິ່ງນີ້ອາດບັນຈຸເອົາບໍ່ພຽງແຕ່ປືນ, ກັບດັກ, ຕາຂ່າຍ, ອຸປະກອນ, ກົງຂັງ ຫຼື ພາຫະນະເທົ່ານັ້ນທີ່ຖືກໃຊ້ໃນການກະທຳຜິດ, ແຕ່ຖ້າສາຍພົວພັນສາມາດກຳນົດໄດ້ເພື່ອທັບມ້າງ ຫຼື ແກ້ໄຂອາດຊະຍາກຳທີ່ກ່ຽວຂ້ອງ, ກໍ່ອາດສາມາດຂະຫຍາຍສຳນວນຄະດີໃຫ້ບັນຈຸເອົາ:

- ອະສັງຫາລິມະສັບຂອງຜູ້ກະທຳຜິດ,
- ຄຳ ຫຼື ເຄື່ອງປະດັບ,
- ບັນຊີທະນາຄານ,
- ເຮືອບິນ
- ຮຸ້ນໃນຕະຫຼາດຮຸ້ນ, ຫຼື
- ຮຸ້ນໃນບໍລິສັດ

ຢ່າງໃດກໍ່ຕາມ "ເມື່ອຊັບສິນຂອງອາດຊະຍາກອນໄດ້ຮັບການຕິດຕາມ ແລະ ກຳນົດ, ການເກັບຮັກສາຊັບສິນທີ່ກຳນົດໄດ້ນັ້ນໃຫ້ປອດໄພແມ່ນຈຳເປັນ. ຕໍ່ກັບຄວາມໄວທີ່ຊັບສິນດັ່ງກ່າວສາມາດຂົນສົ່ງຈາກລັດໜຶ່ງໄປອີກບ່ອນອື່ນ, ຄວາມສຳຄັນໃນການປະຕິບັດບາດກ້າວເພື່ອການຍຶດ ແລະ ຮິບຊັບສິນໄດ້ຢ່າງໄວ ກ່ອນການສະຫຼຸບສຳນວນຄຳສັ່ງຂອງສານໃນການຮິບຊັບສິນຂັ້ນສຸດທ້າຍ ບໍ່ສາມາດເນັ້ນໜັກເຖິງຄວາມສຳຄັນຊ້ຳຕື່ມອີກ."[86] ຍ້ອນຄະດີລັກລອບຄ້າຂາຍສັດປ່າສ່ວນຫຼາຍ ປະກອບມີການຈັບກຸມ ຫຼື ດຳເນີນຄະດີໃນເບື້ອງຕົ້ນສະເພາະແຕ່ຜູ້ກະທຳຜິດທີ່ມີບົດບາດໜ້ອຍ, ການສືບສວນສອບສວນ ແລະ ຂັ້ນຕອນການຮິບຊັບມີຄວາມຈຳເປັນສະເພາະດ້ານເພື່ອສ້າງຕັ້ງສາຍພົວພັນທີ່ເຊື່ອມໂຍງໄປຫາຫົວໜ້າຜູ້ວິງການ ແລະ ຜູ້ໃຫ້ທຶນທີ່ຢູ່ເບື້ອງຫຼັງອາດຊະຍາກຳນີ້.[87]

ເມື່ອຊັບສິນຂອງການກະທຳຜິດລັກລອບຄ້າຂາຍສັດປ່າຖືກກຳນົດ, ຕິດຕາມ ແລະ ຮິບຢ່າງຖືກຕ້ອງ, ຊັບສິນດັ່ງກ່າວກາຍມາເປັນສົມບັດຂອງຊາດຜ່ານຂັ້ນຕອນດຳເນີນຄະດີທາງອາຍາ ຫຼື ທາງແພ່ງທີ່ຕິດພັນກັບການກະທຳຜິດນັ້ນ. ຂັ້ນຕອນນີ້ສາມາດກິນເວລາຫຼາຍປີກ່ອນຈຳເລີຍຈະໝົດຫວັງທີ່ຈະປ້ອງກັນການກະທຳຜິດຂອງລາວ ແລະ ການອຸທອນ. ໃນເວລາດັ່ງກ່າວ, ຊັບສິນ ແລະ ຄວາມຮັ່ງມີຂອງຈຳເລີຍອາດຫຼຸດລົງ. ຍ້ອນຜົນທີ່ເກີດຂຶ້ນ, ຄວາມສຳເລັດຂອງຂັ້ນຕອນແມ່ນຂຶ້ນກັບການສືບສວນໃນເບື້ອງຕົ້ນ ແລະ ເພີ່ມເຕີມຫຼາຍສະເພາະຊັບສິນຂອງຈຳເລີຍໃນຄະດີອາຍາ. ຖ້າສາຍພົວພັນທີ່ຊັດເຈນບໍ່ໄດ້ຮັບ



ຮູບຖ່າຍສະແດງໃຫ້ເຫັນຕະຫຼາດ ດາລີ ໃນປະເທດຈີນ ທີ່ເປັນບ່ອນຄ້າຂາຍສັດປ່າທີ່ຜິດກົດໝາຍຢ່າງເປີດເຜີຍ. ອົງການຟີແລນໄດ້ສົ່ງເສີມສັງຄົມທົ່ວໄປໃຫ້ແລກປ່ຽນຂໍ້ມູນການຄ້າສັດປ່າທີ່ຜິດກົດໝາຍຜ່ານເວບໄຊຂອງພວກເຮົາ ຫຼື ວາຍສະແກນ. ຮູບຖ່າຍ: ຊັດເຕີສະຕັອກ

ການກຳນົດລະຫວ່າງຄວາມຮັ່ງມີທີ່ມາຈາກການກະທຳຜິດຂອງຈຳເລີຍ ແລະ ອາດຊະຍາກຳທີ່ປະຈັກຕາ, ຫຼັກຖານອາດຖືກກຳນົດໃຫ້ເປັນຫຼັກຖານທີ່ໃຊ້ບໍ່ໄດ້.

ເມື່ອພາກລັດບໍ່ສາມາດຮິບ ຫຼື ອາຍັດໄດ້ທັນເວລາ ຫຼື ເມື່ອຊັບສິນ ຫຼື ຄວາມຮັ່ງມີຂອງຈຳເລີຍໄດ້ຫຼຸດລົງ, ແຜນງານການຊົດເຊີຍ ແລະ ຄຳຕັດສິນເພີ່ມເຕີມອາດເປັນກຸນແຈ ທີ່ຊ່ວຍໃຫ້ສາມາດເຂົ້າເຖິງຜົນກຳໄລຂອງຈຳເລີຍທີ່ໄດ້ຈາກການກະທຳຜິດ, ຕາມທີ່ອາທິບາຍຂ້າງລຸ່ມ:

(1) ການນຳໃຊ້ຂະບວນການຕໍ່ລອງ: ເມື່ອມີຫຼັກຖານພຽງພໍ, ລັດອາດພິຈາລະນານຳສະເໜີມາດຕະການຄຳຕັດສິນທີ່ເປັນການຊົດເຊີຍ ຫຼື ເພີ່ມເຕີມອື່ນໆ (ເມື່ອຈຳເລີຍຖືກຮຽກຮ້ອງໃຫ້ຈ່າຍຄ່າຊົດເຊີຍເປັນເງິນ ຫຼື ເປັນທຶນໃຫ້ຜູ້ຖືກເຄາະຮ້າຍ ຫຼື ແຜນງານ) ຕາມການເປັນສ່ວນໜຶ່ງຂອງການນຳໃຊ້ຂະບວນການຕໍ່ລອງ, ຊຶ່ງຄວນ (ຍັງ) ບັນຈຸເອົາການດຳເນີນຄະດີ ແລະ ຄຳຕັດສິນຈຳຄຸກ ແລະ/ຫຼື ຄ່າປັບໃໝຕາມກົດໝາຍທົ່ວໄປທີ່ເປັນໂທດເບົາລົງ (ແຕ່ກໍ່ເປັນໂທດພຽງພໍຕໍ່ການກະທຳຜິດ). ໃນສະຖານະການນີ້ພວກເຮົາສາມາດໃຊ້ຫຼັກຖານທີ່ມີເພື່ອໃຫ້ຈຳເລີຍເປີດເຜີຍ, ໃຫ້ຂໍ້ມູນທີ່ອາດເປັນປະໂຫຍດຕໍ່ກັບຂະບວນການ ແລະ ອາດຊະຍາກອນທີ່ຢູ່ເບື້ອງຫຼັງ, ແລະ ໃຫ້ມີການຊົດເຊີຍ/ການຟື້ນຟູສຳລັບຜູ້ຖືກເຄາະຮ້າຍ, ໂດຍປາດສະຈາກການແຊກແຊງຂະບວນການດຳເນີນຄະດີທັງໝົດ ແລະ ຄວາມສ່ຽງໃນການນຳໃຊ້ຊັບພະຍາກອນ ແລະ ພະຍານຢ່າງຫຼວງຫຼາຍໃນຂັ້ນຕອນ.

(2) ເມື່ອສານມີສິດທາງກົດໝາຍໃນການວາງມາດຕະການຄຳຕັດສິນທີ່ເປັນການຊົດເຊີຍ ຫຼື ເພີ່ມເຕີມ (ລວມທັງການຊົດເຊີຍ ຫຼື ການສະໜອງທຶນ) ຕໍ່ກັບຈຳເລີຍທີ່ກະທຳຜິດ ໃນເວລາຂອງການຕັດສິນ, ຄວາມສາມາດຂອງສານໃນການຕັດສິນຕົວຈິງບໍ່ຈຳເປັນຕ້ອງຂຶ້ນກັບການມີຊັບສິນຂອງຈຳເລີຍໃນປະຈຸບັນຈະສາມາດຈ່າຍເພື່ອການຟື້ນຟູ/ຊົດເຊີຍ. ຂຶ້ນກັບບັນດາກົດໝາຍທີ່ອີງໃສ່ເພື່ອການຕັດສິນນັ້ນໄດ້ຮັບການນຳໃຊ້ແນວໃດ, ມັນສາມາດເປັນຂໍ້ໂຕ້ແຍ່ງ ຍ້ອນການຊົດເຊີຍແມ່ນກ່ຽວກັບ ການໄດ້ຜົນປະໂຫຍດທີ່ບໍ່ຍຸຕິທຳຈາກຈຳເລີຍ, ສານຄວນສາມາດກຳນົດຄຳຕັດສິນໃຫ້ຈຳເລີຍເມື່ອການດຳເນີນຄະດີສາມາດຍົກໃຫ້ເຫັນຢ່າງຄົບຖ້ວນວ່າ ຈຳເລີຍໄດ້ສ້າງຜົນກຳໄລຈາກອາດຊະຍາກຳພາຍໃຕ້ການດຳເນີນຄະດີ ເຖິງວ່າ ຈຳເລີຍຈະຖືກແຍກຈາກກຳໄລດັ່ງກ່າວ. ຖ້າຄຳໂຕ້ແຍ່ງນີ້ປະສົບຜົນສຳເລັດ, ມັນອາດຊ່ວຍໃຫ້ການດຳເນີນຄະດີບັນລຸໄດ້ຢ່າງມີປະສິດທິຜົນບໍ່ສະເພາະແຕ່ຊັບສິນທີ່ໄດ້ຈາກການກະທຳຜິດທີ່ມີການຊຸກເຊື່ອງ ຫຼື ໃຊ້ຈ່າຍຢ່າງຟຸມເຟືອຍ ແຕ່ຍັງກວມເອົາຊັບສິນທີ່ຖືກກົດໝາຍຂອງຈຳເລີຍອີກ.

ໃນກໍລະນີນີ້, ການຮິບ ແລະ ການຟື້ນຟູຊັບສິນຄວນເປັນການລົງໂທດທີ່ໃຊ້ຮ່ວມກັນແທນທີ່ຈະແຍກກັນ.

ໃນສະຫະລັດ, "ສານພົບວ່າ ບໍ່ມີຂໍ້ຂັດແຍ່ງເມື່ອຄຳຕັດສິນປະກອບມີທັງຄຳສັ່ງໃຫ້ຊົດເຊີຍ ແລະ ຄຳສັ່ງໃຫ້ຮິບຊັບສິນ, ໂດຍພິຈາລະນາເຖິງຈຸດປະສົງທີ່ຕ່າງກັນສຳລັບການຊົດເຊີຍ ແລະ ການຮິບ ເພື່ອຊຸກຍູ້ຄຳຕັດສິນຂອງສານ. ໃນເວລາທີ່ການຮິບຊັບເປັນການເຮັດໃຫ້ຈຳເລີຍພົ້ນຈາກຊັບສິນທີ່ໄດ້ມາຢ່າງຜິດກົດໝາຍ ແລະ ຖືເປັນການລົງໂທດນັ້ນ, ການຊົດເຊີຍແມ່ນມີຈຸດປະສົງໃຫ້ຜູ້ຖືກເຄາະຮ້າຍຈາກອາດຊະຍາກຳທັງໝົດ, ແລະ ພິຈາລະນາໃຫ້ໄດ້ຮັບຄ່າຊົດເຊີຍ."[88]

## ຄ. ການຄົ້ນຄວ້າຊອກຫາການຊົດເຊີຍຈາກລັດຖະບານຕ່າງປະເທດ:

ລັດຖະບານຕ່າງປະເທດທີ່ສາມາດຍົກໃຫ້ເຫັນຜົນເສຍຫາຍຈາກການກະທຳຜິດລັກລອບຄ້າຂາຍສັດປ່າໃນລະບົບຍຸຕິທຳຂອງປະເທດອື່ນອາດຄົ້ນຄວ້າຊອກວິທີຮິບຊັບສິນ, ຊົດເຊີຍຜົນເສຍຫາຍ ຫຼື ຊົດເຊີຍທີ່ໄດ້ຈາກຜູ້ກະທຳຜິດໃນລະບົບຍຸຕິທຳທີ່ດຳເນີນຄະດີ. ສິ່ງນີ້ອາດບັນລຸໄດ້ຜ່ານຫຼັກການປະຕິບັດທີ່ສ້າງຕັ້ງຂຶ້ນພາຍໃຕ້ສົນທິສັນຍາຊ່ວຍເຫຼືອທາງດ້ານກົດໝາຍ ເມື່ອສົນທິສັນຍາດັ່ງກ່າວບັນຈຸເອົາການກະທຳຜິດຕໍ່ສັດປ່າ. "ການຊ່ວຍເຫຼືອທາງດ້ານກົດໝາຍລະຫວ່າງປະເທດແມ່ນກົນໄກທີ່ອານຸຍາດໃຫ້ອີກປະເທດໜຶ່ງສະໜອງການຊ່ວຍເຫຼືອໃຫ້ກັບອີກປະເທດໜຶ່ງໃນເວລາມີການສືບສວນສອບສວນ ແລະ ດຳເນີນຄະດີ. ປະເພດຂອງການຊ່ວຍເຫຼືອອາດຜ່ານການຊ່ວຍເຫຼືອເຊິ່ງກັນ ແລະ ກັນທາງດ້ານກົດໝາຍທີ່ໃຊ້ຫຼັກການຂອງສົນທິສັນຍາ ແລະ ກົດໝາຍພາຍໃນ, ແລະ ອາດກວມເອົາມາດຕະການບັງຄັບ ຫຼື ຕ້ອງປະຕິບັດ."[89] ເມື່ອສົນທິສັນຍາຊ່ວຍເຫຼືອທາງດ້ານກົດໝາຍລະຫວ່າງປະເທດກວມເອົາການກະທຳຜິດຕໍ່ສັດປ່າ, ລັດອາດມີຫຼັກການທີ່ສ້າງຕັ້ງໄວ້ແລ້ວເຖິງການຮິບຊັບສິນທີ່ມີໃນລະບົບຍຸຕິທຳທີ່ຕ່າງກັນວິທີ ທີ່ຊັບສິນຂອງການກະທຳຜິດທີ່ກ່ຽວຂ້ອງນັ້ນຈະຖືກຄຸ້ມຄອງ ແລະ ການຊົດເຊີຍ ຫຼື ການຟື້ນຟູທີ່ອາດມອບໃຫ້ຜູ້ຖືກເຄາະຮ້າຍຈາກການກະທຳຜິດນັ້ນ.[90]

## ງ. ການມີສ່ວນຮ່ວມຂອງສັງຄົມໃນການກຳນົດຈຳນວນຫົວໜ່ວຍ ແລະ ປະເມີນຜົນເສຍຫາຍ:

ສະມາຊິກຂອງອົງການຈັດຕັ້ງລັດ ແລະ ໜ່ວຍງານທີ່ກ່ຽວຂ້ອງອາດສາມາດມີບົດບາດສຳຄັນໃນການຊ່ວຍເຫຼືອສານໃຫ້ປະເມີນຜົນເສຍຫາຍ/ຜົນກະທົບທີ່ເກີດຈາກຈຳເລີຍ ແລະ ຄິດໄລ່ຕົ້ນທຶນໃຫ້ເປັນການຊົດເຊີຍຜົນເສຍຫາຍ (ຜ່ານການຟື້ນຟູ ແລະ ການປົກປັກຮັກສາ). ບາງລະບົບຍຸຕິທຳອານຸຍາດໃຫ້ມີການຊ່ວຍເຫຼືອ *ຜູ້ພິພາກສາ* (ເປັນພາສາລາຕິນ ໝາຍຄວາມວ່າ ເພື່ອນຂອງສານ) ເປັນຜູ້ທີ່ມີບົດບາດ "ໃຫ້ຂໍ້ມູນ ແລະ ແນະນຳຜູ້ພິພາກສາຕາມຄວາມເປັນຈິງ ຫຼື ກົດໝາຍທີ່ອາດກຳນົດການພິຈາລະນາເພື່ອຫຼຸດຜ່ອນຄວາມສ່ຽງຂອງການຕັດສິນຜິດພາດ."[91] ສິ່ງນີ້ຊ່ວຍຫຼຸດຜ່ອນຂໍ້ຈຳກັດຂອງສານໃນການປະເມີນຜົນເສຍຫາຍໂດຍກົງ, ຊຶ່ງອາດໃຊ້ເວລາດົນ ແລະ ມີມູນຄ່າສູງ ແລະ ອານຸຍາດໃຫ້ຊ່ຽວຊານໃນຂະແໜງການທີ່ກ່ຽວຂ້ອງໄດ້ຈັດການວິເຄາະໂດຍອີງໃສ່ຄວາມຊ່ຽວຊານ ແລະ ປະສົບການຂອງເຂົາເຈົ້າ. ມັນອາດຍັງຊ່ວຍເພີ່ມການມີສ່ວນຮ່ວມຂອງສັງຄົມເຂົ້າໃນຂັ້ນຕອນ ແລະ ສ້າງຄວາມໂປ່ງໃສຂອງຄະດີ.

## ຈ. ການຟ້ອງຮ້ອງເພື່ອປະໂຫຍດຂອງສ່ວນລວມ:

ນອກເໜືອຈາກລັດຖະບານທີ່ສາມາດຟ້ອງຄ່າຊົດເຊີຍ ໂດຍຕາງໜ້າໃຫ້ຜູ້ຖືກເຄາະຮ້າຍຈາກການກະທຳຜິດລັກລອບຄ້າຂາຍສັດປ່າມີບາງລະບົບຍຸຕິທຳຍັງອານຸຍາດໃຫ້ຜູ້ຖືກເຄາະຮ້າຍຟ້ອງຄະດີທາງແພ່ງໂດຍກົງກັບຜູ້ວົງການການກະທຳຜິດຕໍ່ສັດປ່າ ແລະ ປ່າໄມ້.[92] ຕົວຢ່າງ: ກົດໝາຍປົກປັກຮັກສາສິ່ງແວດລ້ອມຂອງປະເທດມົງໂກນອານຸຍາດ

ໃຫ້ພົນລະເມືອງ, ຫົວໜ່ວຍທຸລະກິດ ແລະ ອົງການຈັດຕັ້ງຟ້ອງສານໃຫ້ດໍາເນີນຄະດີກັບຜູ້ທີ່ລະເມີດກົດໝາຍສິ່ງແວດລ້ອມ ຮຽກຮ້ອງໃຫ້ຊົດເຊີຍຄ່າໃຊ້ຈ່າຍຕ່າງໆທີ່ໃຊ້ໃນການຟື້ນຟູຄວາມສົມດຸນຂອງລະບົບນິເວດ ແລະ ຊັບພະຍາກອນທໍາມະຊາດທີ່ຖືກທໍາລາຍ, ການອົບພະຍົບປະຊາຊົນ, ແລະ ການຍ້າຍສັດລ້ຽງ, ແລະ ເມື່ອເຮັດສໍາເລັດ, ຜູ້ກະທໍາຜິດຖືກຮຽກຮ້ອງໃຫ້ "ຊົດເຊີຍໂດຍກົງກັບຜົນເສຍຫາຍຕໍ່ຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມທີ່ເປັນຜົນຈາກການກະທໍາທີ່ຜິດກົດໝາຍ."[93] ຢ່າງໃດກໍ່ຕາມ ການຊໍາລະຄ່າຊົດເຊີຍ "ບໍ່ໄດ້ປ່ອຍໃຫ້ຜູ້ກະທໍາຜິດພົ້ນຈາກຄວາມຮັບຜິດຊອບທາງອາຍາ ຫຼື ທາງບໍລິຫານທີ່ເກີດຈາກການລະເມີດກົດໝາຍ."[94]

# ບັນດາຄຳແນະນຳທາງດ້ານຍຸດທະສາດ

ໃນພາກນີ້ຈະຍົກໃຫ້ເຫັນບັນດາຄຳແນະນຳທາງດ້ານຍຸດທະສາດເພື່ອພິຈາລະນາການຈັດຕັ້ງປະຕິບັດແຜນງານສົ່ງເສີມຄຳຕັດສິນທີ່ເປັນການຊົດເຊີຍ ແລະ ເພີ່ມເຕີມອື່ນໆ.

1. ເພື່ອຮັບປະກັນໃຫ້ໄດ້ວ່າ ບັນດາຈຸດປະສົງລວມໃນການປາບປາມ, ຊົດເຊີຍ ແລະ ຟື້ນຟູໄດ້ຮັບການຕອບສະໜອງ, ຄຳຕັດສິນເພີ່ມເຕີມຄວນ **ກຳນົດໃຫ້ເພີ່ມ** (ແລະ ບໍ່ໄດ້ບັນຈຸເຂົ້າໃນ) **ການກຳນົດໂທດທາງກົດໝາຍອື່ນ** (ເຊັ່ນ: ການປັບໃໝ, ການຈຳຄຸກ).

   ກ. ໂດຍການຕັດສິນເພີ່ມເຕີມທີ່ຕິດພັນກັບການກຳນົດໂທດທົ່ວໄປນັ້ນ, ມັນຈະກະທົບຕໍ່ຜົນສັກສິດຂອງວຽກງານປາບປາມໃນການໃຊ້ຄຳຕັດສິນເພີ່ມແຕ່ທຳອິດຍ້ອນມັນອານຸຍາດໃຫ້ຈຳເລີຍສາມາດມີທັນທາງຫຼຸດພົ້ນຈາກໂທດ.

   ຂ. ມັນອາດຍັງເຮັດໃຫ້ "ເກີດແນວຄວາມຄິດທີ່ວ່າ ບໍ່ມີຄວາມຍຸຕິທຳ, ບໍ່ສະເພາະກັບຜູ້ທີ່ເປັນຜູ້ຖືກເຄາະຮ້າຍຈາກອາດຊະຍາກຳແຕ່ຍັງເປັນຄຳຖາມທີ່ສັງຄົມທົ່ວໄປໄດ້ຕັ້ງໄວ້" ແລະ ອາດຫຼຸດຜ່ອນຄວາມເຊື່ອໝັ້ນຂອງສັງຄົມຕໍ່ຄວາມສາມາດຂອງສານທີ່ຕັດສິນການກະທຳຜິດທາງອາຍາ.[95]

   ຄ. ໃນການສະຫຼຸບ ມັນສຳຄັນສຳລັບຂະບວນການຕຸລາການທີ່ຈະເຮັດໃຫ້ຈຳເລີຍຮັບຜິດຊອບຜົນເສຍຫາຍທີ່ເກີດຈາກການກະທຳ ແລະ ສະນັ້ນ ຢ່າງໜ້ອຍທີ່ສຸດ **ການກະທຳຜິດ (ທາງແພ່ງ ຫຼື ທາງອາຍາ) ໃນເວລາໃດກໍຄວນຮັບຄຳຕັດສິນເພີ່ມເຕີມຈາກຄຳຕັດສິນໂທດອື່ນໆ.**

2. ຍັງມີຄຳແນະນຳໃຫ້ **ຄຳຕັດສິນເພີ່ມເຕີມແມ່ນພາກບັງຄັບ** ພ້ອມທັງການກະທຳຜິດຕໍ່ສັດປ່າທີ່ຮຸນແຮງ ແລະ ໃຊ້ວິຈາລະຍານກັບຄະດີການກະທຳຜິດທີ່ເບົາລົງ.

   ກ. ຖ້າຄຳຕັດເພີ່ມເຕີມປ່ອຍໃຫ້ຂຶ້ນກັບວິຈາລະຍານຂອງສານ ຫຼື ໄອຍະການ, ມັນມີຄວາມເປັນໄປໄດ້ ໂດຍສະເພາະ ໃນລະບົບຄວາມຍຸຕິທຳທີ່ພັດທະນາຫຼາຍ, ສານ/ໄອຍະການອາດບໍ່ຄົ້ນຫາວິທີເພີ່ມເຕີມໃນການກຳນົດໂທດ, ຄຸ້ມຄອງ ແລະ ຕິດຕາມຄຳຕັດສິນຂອງສານ. ເພື່ອຮັບປະກັນຄວາມໝັ້ນໃຈຂອງສັງຄົມໃນຂະບວນການນີ້, ມັນສຳຄັນທີ່ວິທີຈັດຕັ້ງປະຕິບັດຢ່າງສອດຄ່ອງໄດ້ນຳໃຊ້ກັບການຕັດສິນ ແລະ ຂັ້ນຕອນທີ່ເປັນພາກບັງຄັບສຳລັບການກະທຳຜິດທີ່ແນ່ນອນ.

3. ສຳລັບຄຳຕັດສິນເພີ່ມເຕີມທີ່ບັນຈຸເອົາການຊຳລະຄ່າຊົດເຊີຍ ຫຼື ການຟື້ນຟູ, ການດຳເນີນຄະດີຈະອາດຕ້ອງການ **ຍົກໃຫ້ເຫັນວ່າ ຈຳເລີຍມີຊັບສິນທາງການເງິນ** ເພື່ອປະຕິບັດຕາມຄຳຕັດສິນທີ່ວາງອອກ.

   ກ. ຈາກສຳນວນຄະດີໃນໄລຍະການສືບສວນ, ເຈົ້າໜ້າທີ່ຕຳຫຼວດ ແລະ ໄອຍະການຄວນເຮັດວຽກຮ່ວມກັບໜ່ວຍງານສືບຂ່າວທາງການເງິນທີ່ກ່ຽວຂ້ອງເພື່ອເປີດເຜີຍ (ແລະ ເມື່ອເປັນໄປໄດ້ ກໍ່ໃຫ້ອາຍັດ ແລະ ຍຶດໄວ້) ຊັບສິນຂອງຈຳເລີຍທີ່ໄດ້ຈາກການກະທຳຜິດ. ຊັບສິນອື່ນໆ ຫຼື ເງິນຂອງຈຳເລີຍຄວນນຳມາພິຈາລະນາເຂົ້າໃນການຄິດໄລ່ການຈ່າຍເງິນທີ່ວາງໃຫ້.

4. ບົດແນະນຳການຕັດສິນຂອງສານທີ່ກ່ຽວຂ້ອງຄວນໄດ້ຮັບການປັບປຸງເພື່ອວາງໂທດເພີ່ມເຕີມທີ່ເປັນພາກບັງຄັບທາງກົດໝາຍໃນສະພາບເງື່ອນໄຂທີ່ແນ່ນອນ ແລະ ຍັງ **ສະໜອງລາຍລະອຽດກ່ຽວກັບຂັ້ນຕອນເພື່ອການຕິດຕາມ** ຮັບປະກັນໄດ້ວິທີການເຮັດວຽກທີ່ສອດຄ່ອງ ແລະ ແທດເໝາະກັບແຕ່ລະຄະດີ.

   ກ. ການພິມເຜີຍແຜ່ຄະດີຈະຍິ່ງຊ່ວຍໃຫ້ເກີດຄວາມໂປ່ງໃສຫຼາຍຂຶ້ນແກ່ສັງຄົມ ແລະ ຍັງສົ່ງເສີມວຽກງານປາບປາມການກະທຳຜິດອື່ນໆໃນອານາຄົດ.

5. ສຳລັບຄຳຕັດສິນເພີ່ມເຕີມທີ່ຈະມີຜົນສັກສິດທາງກົດໝາຍ, ຈະຕ້ອງມີປັດໃຈຕ່າງໆທີ່ເປັນ**ສາຍພົວພັນພຽງພໍ ແລະ ສົມເຫດຜົນ ສາຍພົວພັນລະຫວ່າງ ລັກສະນະ ແລະ ເງື່ອນໄຂຂອງການກະທຳຜິດ ແລະ ການຊົດເຊີຍ ຫຼື ການປົວແປງທີ່ຖືກສະເໜີ ເພື່ອໃຫ້ຄຳຕັດສິນເພີ່ມເຕີມນັ້ນຊອກຫາວິທີໃນການຊົດເຊີຍ.**

   ກ. ການພິຈາລະນາຄະດີຄວນຊ່ວຍໃຫ້ໄອຍະການນຳໃຊ້ຊ່ຽວຊານເພື່ອເປັນພະຍານຟ້ອງ ຍ້ອນຜົນເສຍຫາຍທີ່ເກີດຂຶ້ນ ແລະ ຊ່ວຍກຳນົດຫຼືໜ່ວຍຈຳນວນມູນຄ່າຂອງຜົນປະໂຫຍດຈາກການກະທຳຜິດຂອງຈຳເລີຍ ແລະ ຕົ້ນທຶນອື່ນໆທີ່ຈຳເປັນເພື່ອຊົດເຊີຍຜົນເສຍຫາຍນັ້ນ.

   ຂ. ເມື່ອມີຄ່າໃຊ້ຈ່າຍໃຫ້ຊ່ຽວຊານທີ່ມາຊ່ວຍ ມີມູນຄ່າສູງເກີນງົບປະມານຂອງສານ, ອົງການຈັດຕັ້ງພາຍນອກ (ທີ່ບໍ່ໄດ້ກ່ຽວຂ້ອງກັບຄະດີ) ອາດໄດ້ຮັບອານຸຍາດປະຕິບັດການວິເຄາະ ແລະ ການຄິດໄລ່ ແລະ ສ້າງບົດລາຍງານ ເພື່ອນຂອງສານ ສົ່ງໃຫ້ສານ.

   ຄ. ມັນອາດຊ່ວຍສ້າງຄວາມໂປ່ງໃສ ແລະ ສົ່ງເສີມການມີສ່ວນຮ່ວມຂອງສັງຄົມໃນຂະບວນການ.

6. ລະບົບຍຸຕິທຳອາດພິຈາລະນາ **ສ້າງຕັ້ງກອງທຶນອານຸລັກ**

**ສັດປ່າ** ໂດຍສະເພາະກອງທຶນທີ່ຖືກອອກແບບເພື່ອປົກປັກ ຮັກສາ ແລະ ອານຸລັກສັດປ່າ.

ກ. ສິ່ງນີ້ອາດຊ່ວຍໃຫ້ສານຮັບປະກັນໄດ້ ການຊຳລະເງິນຂອງຈຳເລີຍຖືກໃຊ້ເພື່ອຈຸດປະສົງທີ່ຕ້ອງການ (ຕົວຢ່າງ: ຊົດເຊີຍໃຫ້ຜົນເສຍຫາຍສະເພາະທີ່ເກີດຂຶ້ນ) ໂດຍບັນຈຸເອົາແຜນງານຍ່ອຍພາຍໃນກອງທຶນ ຊຶ່ງຈະຖືກໃຊ້ເພື່ອຈຸດປະສົງສະເພາະ (ເຊັ່ນ: ໂຄງການຟື້ນຟູ ແລະ ອານຸລັກເສືອໂຄ່ງ, ຫຼື ໂຄງການເພີ່ມແຫຼ່ງທີ່ຢູ່ອາໄສໃຫ້ນົກເງືອກ).

ຂ. ກອງທຶນອາດສາມາດປະກອບດ້ວຍ: ຊັບສິນຂອງອາດຊະຍາກຳທີ່ໄດ້ຜ່ານການຮິບໃນຄະດີສັດປ່າ; ການຊຳລະຄ່າປັບໄໝ; ການຈັດສັນງົບຂອງລັດຖະບານ (ຖ້າມີ) ແລະ ການຊຳລະເງິນໃຫ້ຄຳຕັດສິນເພີ່ມເຕີມ.

7. ເພື່ອຮັບປະກັນໃຫ້ໄດ້ວ່າ ຈຳເລີຍໄດ້ປະຕິບັດພັນທະ ແລະ ໂຄງການດັ່ງກ່າວໄດ້ຕອບສະໜອງຈຸດປະສົງຂອງມັນ (ແລະ ບໍ່ໄດ້ເປັນທຶນທີ່ເສຍໄປສຳລັບອົງການຈັດຕັ້ງ ຫຼື ໜ່ວຍງານຂອງລັດທີ່ກ່ຽວຂ້ອງ), ສານຄວນນຳໃຊ້ບາດກ້າວຕິດຕາມພັນທະຂອງຈຳເລີຍພ້ອມທັງຄວາມຄືບໜ້າຂອງໂຄງການ  ແລະ ຊີ້ນຳການຈັດຕັ້ງປະຕິບັດ. ມັນຈະກະທົບຕໍ່ຄວາມເຊື່ອໝັ້ນຂອງສັງຄົມໃນລະບົບຕຸລາການຖ້າຄຳຕັດສິນເພີ່ມເຕີມ ເມື່ອຕັດສິນແລ້ວ ບໍ່ໄດ້ຮັບການຕິດຕາມ ແລະ ບັງຄັບໃຊ້.

ກ. **ເຈົ້າໜ້າທີ່ຄຸ້ມຄອງການພາກໂທດ/ການກັກຂັງພາງຄວນຮັບຜິດຊອບ** ເພື່ອຮັບປະກັນພັນທະຂອງຈຳເລີຍ ແລະ ຕັດສິນລົງໂທດທີ່ໜັກຂຶ້ນ ເມື່ອພັນທະບໍ່ໄດ້ຮັບການປະຕິບັດທັນເວລາ. ຈຳເລີຍຍັງສາມາດຖືກຮຽກຮ້ອງໃຫ້ວາງມັດຈຳເທົ່າກັບການຊຳລະຄ່າຊົດເຊີຍທີ່ເປັນຄຳຕັດສິນເພີ່ມເພື່ອຮັບປະກັນພັນທະຂອງຕົນທີ່ເປັນເງື່ອນໄຂຂອງການພາກໂທດ ຫຼື ກັກຂັງພາງ.

ຂ. ເຈົ້າໜ້າທີ່ໆຮັບຜິດຊອບຈະຕ້ອງໄດ້ຮັບການແຕ່ງຕັ້ງເພື່ອຕິດຕາມ ແລະ ລາຍງານສານ, ຄວາມຄືບໜ້າຂອງໂຄງການໃດໜຶ່ງທີ່ສານຕັດສິນເພື່ອຈັດຕັ້ງປະຕິບັດ ເປັນສ່ວນໜຶ່ງຂອງວິທີແກ້ໄຂທີ່ໄດ້ວາງອອກ.

8. ຄຽງຄູ່ກັບຄວາມຮັບຜິດຊອບຂອງບຸກຄົນທົ່ວໄປ, ນິຕິບຸກຄົນລວມທັງ **ບໍລິສັດ, ອົງການຈັດຕັ້ງ ແລະ ສອນສັດ ທີ່ຜິດກົດໝາຍ ຊຶ່ງກະທຳຜິດສິ່ງຜົນກະທົບຕໍ່ສິ່ງແວດລ້ອມຄວນຮັບຜິດຊອບເຊັ່ນກັນ**. ຄຳຕັດສິນເພີ່ມເຕີມຄວນກຳນົດໃຫ້ອຳນວຍການ/ເຈົ້າໜ້າທີ່ຂອງກຸ່ມດັ່ງກ່າວ ເຖິງແມ່ນວ່າເຂົາເຈົ້າຈະຮູ້ກິດຈະກຳທີ່ກຳລັງເຮັດໂດຍນິຕິບຸກຄົນທີ່ກ່ຽວຂ້ອງ ຫຼື ບໍ່.

ກ. **ການພິມເຜີຍແຜ່ຄຳຕັດສິນ** ອາດຈະກະທົບຕໍ່ຊື່ສຽງຂອງນິຕິບຸກຄົນ ແລະ ສິ່ງເສີມວຽກງານປາບປາມ.

9. ໃນການສະຫຼຸບສັງລວມ, ເມື່ອຜົນເສຍຫາຍຈາກການລັກລອບຄ້າຂາຍສັດປ່າຢູ່ນອກລະບົບຍຸຕິທຳຂອງປະເທດໃດໜຶ່ງ ທີ່ໃຫ້ຜູ້ລັກລອບຖືກດຳເນີນຄະດີ, ຜູ້ຖືກເຄາະຮ້າຍຄວນໄດ້ຮັບການຊົດເຊີຍໂດຍມີລັດຖະບານທີ່ຄຸ້ມຄອງຄະດີເປັນຕົວແທນສຳລັບຜົນເສຍຫາຍ ແລະ ຄຳຮ້ອງຟ້ອງຂຶ້ນສານໃຫ້ພິຈາລະນາຄະດີ, ສະໜອງຄ່າເສຍຫາຍໃຫ້ຜູ້ຖືກເຄາະຮ້າຍທີ່ເປັນຄົນຕ່າງປະເທດ.

ເມື່ອສານໃນລະບົບຍຸຕິທຳຂອງປະເທດໃດໜຶ່ງທີ່ຮັບຜິດຊອບຄະດີປະຕິເສດການຍອມຮັບການຮ້ອງຟ້ອງ, ຜູ້ຖືກເຄາະຮ້າຍອາດຍື່ນຄຳຮ້ອງຟ້ອງໃຫ້ລັດຖະບານຂອງຕົນເພື່ອໃຊ້ຊ່ອງທາງໆການທູດ (ເຊັ່ນ: ຜ່ານການຊ່ວຍເຫຼືອທາງກົດໝາຍລະຫວ່າງປະເທດ ຫຼື ສົນທິສັນຍາສອງຝ່າຍ) ຫຼື ຜ່ານຂັ້ນຕອນທີ່ບໍ່ເປັນທາງການເພື່ອຮຽກຮ້ອງການຊ່ວຍເຫຼືອ.

# ສະຫຼຸບສັງລວມ




ເຖິງວ່າຈະຢູ່ໃນປະເທດທີ່ລະບົບຍຸຕິທຳມີການພັດທະນາທາງກົດໝາຍຫຼາຍກໍ່ຕາມ, ແຜນງານຄຳຕັດສິນທີ່ເປັນການຊົດເຊີຍ ແລະ ເພີ່ມເຕີມຍັງຢູ່ໃນໄລຍະການລິເລີ່ມເມື່ອມັນໄດ້ຖືກນຳໃຊ້ກັບຄະດີການລັກລອບຄ້າຂາຍສັດປ່າ. ເພື່ອເຮັດໃຫ້ລະບົບຍຸຕິທຳໃໝ່ໃດໜຶ່ງຈັດຕັ້ງປະຕິບັດແຜນງານດັ່ງກ່າວ, ແຕ່ລະລະບົບຈະຕ້ອງໄດ້ພິຈາລະນາກອບວຽກທີ່ເປັນເອກະລັກຂອງຕົນ ແລະ ກຳນົດສິ່ງທ້າທາຍເພື່ອຂ້າມຜ່ານ. ຢ່າງໃດກໍ່ຕາມ ຕໍ່ກັບສະພາບປະຈຸບັນຂອງການລັກລອບຄ້າຂາຍສັດປ່າທີ່ເປັນທຸລະກິດສ້າງກຳໄລສູງ, ມີຄວາມສ່ຽງຕ່ຳ, ຄວາມຕ້ອງການທີ່ຈະທັບມ້າງຄວາມຮັ່ງມີທາງການເງິນຂອງຜູ້ລັກລອບຄ້າຂາຍສັດປ່າບໍ່ສາມາດປ່ອຍປະໄດ້. ການກຳນົດໂທດແບບທົ່ວໄປເຊັ່ນ: ການປັບໄໝ ແລະ ການຈຳຄຸກພຽງແຕ່ຊ່ວຍດັດສ້າງພຶດຕິກຳຂອງຈຳເລີຍແຕ່ບໍ່ທັນໄດ້ປາບປາມຜົນກຳໄລຂອງການລັກລອບຄ້າຂາຍສັດປ່າ.

ແຜນງານຄຳຕັດສິນທີ່ເປັນການຊົດເຊີຍ ແລະ ເພີ່ມເຕີມ ອີກດ້ານໜຶ່ງນັ້ນບໍ່ພຽງແຕ່ຍົກສູງບົດບາດຂອງຜູ້ຖືກເຄາະຮ້າຍຈາກການລັກລອບຄ້າຂາຍສັດປ່າ, ແຜນງານຍັງສາມາດສົ່ງຜົນຕໍ່ວຽກງານການປາບປາມເຄືອຂ່າຍລັກລອບຄ້າຂາຍສັດປ່າຫຼາຍກວ່າການກຳນົດໂທດແບບທົ່ວໄປຍ້ອນແຜນງານສາມາດຊົດເຊີຍຜົນເສຍຫາຍຕົວຈິງທີ່ເກີດຂຶ້ນ ແລະ ມອບຄ່າຊົດເຊີຍໃຫ້ຜູ້ຖືກເຄາະຮ້າຍທັງໝົດ. ສິ່ງນີ້ໝາຍຄວາມວ່າ ບໍ່ພຽງແຕ່ຊົດເຊີຍໂດຍກົງໃຫ້ກັບຜົນເສຍຫາຍແຕ່ຍັງຜົນກະທົບທາງອ້ອມ (ເຊັ່ນ: ສິ່ງແວດລ້ອມທີ່ຢູ່ອ້ອມຂ້າງ), ຊຶ່ງໄດ້ກຳນົດໃນກົດໝາຍ ບໍ່ພຽງການຊົດເຊີຍຜ່ານການວາງໂທດແບບທົ່ວໄປ. ສິ່ງນີ້ສາມາດປະກອບດ້ວຍ ການປ່ຽນຄ່າປັບໄໝ ຫຼື ຊັບສິນທີ່ຮິບມາໄດ້ໄປເປັນຕົ້ນທຶນເພື່ອການຟື້ນຟູ. ເມື່ອແຜນງານຄຳຕັດສິນທີ່ເປັນການຊົດເຊີຍ ແລະ ເພີ່ມເຕີມຖືກໃຊ້ ຮ່ວມກັບ ຄຳຕັດສິນກຳນົດໂທດແບບທົ່ວໄປ, ຄວາມສ່ຽງທາງການເງິນທີ່ຕິດພັນກັບການກະທຳຜິດຕໍ່ສັດປ່າສາມາດເພີ່ມໂທດໄດ້ຢ່າງພຽງພໍ. ຍິ່ງໄປກວ່ານັ້ນ, ຜົນກະທົບຈາກການກະທຳຜິດດັ່ງກ່າວຕໍ່ສິ່ງແວດລ້ອມ ແລະ ຕໍ່ສັງຄົມສາມາດຮັບການຫຼຸດຜ່ອນຜ່ານການຊຳລະເງິນທີ່ເປັນໂທດວາງໃຫ້ຜູ້ລັກລອບເພື່ອເປັນທຶນໃຫ້ການຟື້ນຟູ ແລະ ການປົກປັກຮັກສາສັດປ່າທີ່ກຳລັງມີ ຫຼື ຈະປະຕິບັດໃນອານາຄົດ. ໃນເວລາທີ່ກົດໝາຍ ແລະ ການບັງຄັບໃຊ້ກົດໝາຍທີ່ມີ ເປັນພື້ນຖານເພື່ອການສຶກສາຄົ້ນຄວ້າມາດຕະການຄຳຕັດສິນທີ່ເປັນການຊົດເຊີຍ ແລະ ເພີ່ມເຕີມຕິດພັນກັບວຽກງານຕ້ານການລັກລອບຄ້າຂາຍສັດປ່າ, ບົດລາຍງານນີ້ມີເຈດຈຳນົງເນັ້ນໃສ່ເພື່ອຮັບໃຊ້ເປັນຈຸດລິເລີ່ມການສຶກສາຄົ້ນຄວ້າ, ການພິຈາລະນາ, ການປຶກສາຫາລື ແລະ ການຈັດຕັ້ງປະຕິບັດຕ່າງໆເພີ່ມຂຶ້ນໃນອານາຄົດ.

# ເອກະສານອ້າງອີງ


1. ລົງມືດຽວນີ້ເພື່ອຊ່ວຍສັດປ່າ: 5 ໜ້າວຽກທີ່ສ້າງຄວາມແຕກຕ່າງ" ທະນາຄານໂລກ, ທະນາຄານໂລກ, 28 ພະຈິກ 2017,
2. ແນວຄວາມຄິດໃໝ່ຕໍ່ຫຼັກການຂອງກົດໝາຍ (ອາໂອແອວ), ນະໂຍບາຍ ແລະ ສະພາບແວດລ້ອມດ້ານຕຸລາການ" ຢູເສດ, ບັນທາພື້ນເດັ່ນ ໃນການປຶກສາຫາລືວິຊາການ, ບາງກອກ, ໄທ, 15 ມີນາ 2017.
3. ສະຕີເຟັນ, ສູສະນາ ແລະ ແມັດທິວ ຊາວເທີແລນ. "ບົດບາດຂອງຈີນໃນການລັກລອບຄ້າຂາຍສັດປ່າ ແລະ ການຕອບໂຕ້ຂອງລັດຖະບານຈີນ" ບົດລາຍງານຄະນະກຳມະການທົບທວນຄວາມໝັ້ນຄົງທາງເສດຖະກິດ ສະຫະລັດ-ຈີນ, 6 ທັນວາ 2018,
4. ຊ່ວຍຊ້າງ, , https://www.savetheelephants.org/about-ste-2/press-media/?detail=dramatic-changes-in-china-s-ivory-trade
5. Felbab-Brown, Vanda. Extinction Market: Wildlife Trafficking and How to Counter It. I B TAURIS, 2017, p. 65.
6. Yang, S.C.W. (2018). The Principles Wildlife Conservation Funds and Restitution - Additional Remedy to Wildlife and Forest Offenses. Bangkok: USAID Wildlife Asia and ASEAN Inter-Parliamentary Assembly, p. 1.
7. Yang, S.C.W. (2019). Scaling Efforts to Counterwildlife Trafficking Through Legislative Reforms. Bangkok: USAID Wildlife Asia and ASEAN Inter-Parliamentary Assembly, p. 51.
8. Batt, Chris; Feltham, Jenny, et. al., "Enhancing the Detection, Investigation and Disruption of Illicit Financial Flows from Wildlife Crime". United Nations Office on Drug and Crime (2017), p. 29. Accessed at: https://www.unodc.org/documents/southeastasiaandpacific/Publications/2017/FINAL_-_UNODC_APG_Wildlife_Crime_report.pdf
9. Yang, p. 54.
10. Semesky, Donald C. "Attacking the Financial Infrastructure of Wildlife Trafficking" Richardson Center, 2014, pp. 7–8.
11. "Tools and Resources to Combat Illegal Wildlife Trade." The World Bank Group (2018), p.4. Accessed at: http://pubdocs.worldbank.org/en/389851519769693304/24691-Wildlife-Law-Enforcement-002.pdf
12. Robertson, Simon. "Why Law Enforcement Is Essential to Stopping Illegal Wildlife Trade." World Bank Blogs, 27 July 2017, blogs.worldbank.org/voices/why-law-enforcement-essential-stopping-illegal-wildlife-trade.
13. Ibid.
14. Batt, Chris; Feltham, Jenny, et. al., "Enhancing the Detection, Investigation and Disruption of Illicit Financial Flows from Wildlife Crime". United Nations Office on Drug and Crime (2017). Accessed at: https://www.unodc.org/documents/southeastasiaandpacific/Publications/2017/FINAL_-_UNODC_APG_Wildlife_Crime_report.pdf
15. Martin Harrell, "Organizational Environmental Crime and the Sentencing Reform Act of 1984: Combining Fines with Restitution, Remedial Orders, Community Service, and Probation to Benefit the Environment While Punishing the Guilty", 6 Vill. Envtl. L.J. 243 (1995). p. 26. Available at: https://digitalcommons.law.villanova.edu/elj/vol6/iss2/1
16. Ibid.
17. Barton v Gwyn-Jones, et. al, "Remedies: Restitution" Practical Law Dispute Resolution, Thomson Reuters, EWCA Civ 1999 (December 2019). Available at: https://uk.practicallaw.thomsonreuters.com/Document/Ib9aa1b091c9a11e38578f7ccc38dcbee/View/FullText.html?comp=pluk&transitionType=SearchItem&contextData=(sc.Search)&firstPage=true&bhcp=1&OWSessionId=NA&skipAnonymous=true
18. Ibid.
19. "Restitution in Federal Criminal Cases", Congressional Research Service (Updated 15 Oct. 2019) p. 2. Available at: https://fas.org/sgp/crs/misc/RL34138.pdf
20. Preston, Brian J., Hon. "The Use of Restorative Justice for Environmental Crime Land and Environment Court of NSW" (22 Mar. 2011), p. 18. Available at: http://www.lec.justice.nsw.gov.au/Documents/preston_use%20of%20restorative%20justice%20for%20environmental%20crime.pdf
21. Uhlmann, "Sentencing Guidance in Environmental Prosecutions including the use of Supplemental Sentencing Measures", Internal Guidelines for the U.S. Department of Justice, p. 17
22. Preston, Brian J., Hon. "The Use of Restorative Justice for Environmental Crime Land and Environment Court of NSW" (22 Mar. 2011), p. 8. Available at: http://www.lec.justice.nsw.gov.au/Documents/preston_use%20of%20restorative%20justice%20for%20environmental%20crime.pdf
23. "Wildlife and Forest Crime Analytic Toolkit". United Nations Office on Drugs and Crime, (Nov. 2012), p. 152. Available at: unodc.org/documents/Wildlife/Toolkit_e.pdf
24. Preston, p. 13. ("For example, in Taralga Landscape Guardians Inc v Minister for Planning (2007) 161 LGERA

1; [2007] NSWLEC 59, the operation of a wind farm posed a risk for wedge-tailed eagles which could be killed in collisions with wind turbines. The Land and Environment Court of NSW imposed a consent condition requiring the operator to pay a specified monetary sum in compensation for each eagle killed to the NSW Wildlife and Information Service (WIRES) which is a non-governmental organisation engaged in the rescue and rehabilitation of wildlife.")

25. Wildlife and Forest Crime Analytic Toolkit,  p. 152
26. Ibid.
27. "WWF Urges SE Asia to Ban Unregulated Wildlife Trade Amid Coronavirus Outbreak." Voice of America, 8 Mar. 2020, www.voanews.com/science-health/coronavirus-outbreak/wwf-urges-se-asia-ban-unregulated-wildlife-trade-amid.
28. 16 USC (S) 3372(a)(2)(A).
29. "Restitution in Federal Criminal Cases", Congressional Research Service (Updated 15 Oct. 2019) p. 1. Available at: https://fas.org/sgp/crs/misc/RL34138.pdf
30. Pierson, Melanie, and Meghan N. Dilges. "Wildlife Trafficking I: Restitution in Wildlife Cases." United States Attorneys' Bulletin, vol. 63, no. 3, May 2015, p. 87.
31. "Prosecution Of Federal Wildlife Crimes." The United States Department of Justice, 13 May 2015, www.justice.gov/enrd/prosecution-federal-wildlife-crimes.
32. Environmental Crimes, United States. Department of Justice, July 2012, Volume 60, Number 4, p.101.
33. ຄະດີລະຫວ່າງ ລັດຖະບານສະຫະລັດ ແລະ ດັນແຄນ ທີ່ຕິດພັນກັບການຂຸດຄົ້ນ ແລະ ການລັກລອບຄ້າຂາຍໂສມປ່າອາເມລິກາທີ່ຜິດກົດໝາຍ. ຈຳເລີຍຖືກຕັດສິນໃຫ້ຈ່າຍ ຄ່າປັບໄໝ 15.000 ໂດລາ, ແລະ 55.000 ໂດລາ ໃນການຊົດເຊີຍ ເຂົ້າໃນກອງທຶນອານຸລັກປາ ແລະ ສັດປ່າແຫ່ງຊາດ ແລະ ເຮັດວຽກ 50 ຊົ່ວໂມງໃຫ້ແກ່ຊຸມຊົນ, ແລະ ຮິບໄດ້ປະມານ 1.708 ປອນຂອງໂສມປ່າທີ່ຍຶດໄດ້; ຄະດີລະຫວ່າງ ລັດຖະບານສະຫະລັດ ແລະ ເວີດສ: ຊາວປາມົງຈັບປາລີ້ນໝາຫຼາຍເກີນໄປໂດຍມີມູນຄ່າເກືອບຮອດ 2 ແສນໂດລາ. ຈຳເລີຍໄດ້ຈ່າຍຄ່າປັບໄໝ 5.000 ໂດລາ ແລະ 99.800 ເປັນຄ່າຊົດເຊີຍເຂົ້າກອງທຶນ, ແລະ ເຮັດວຽກ 100 ຊມ ໃຫ້ຊຸມຊົນ. ບໍລິສັດໄດ້ຖືກຕັດສິນໃຫ້ຈ່າຍຄ່າປັບໄໝ 275.000 ໂດລາ ແລະ ໄດ້ຮ່ວມຊໍາລະ ແລະ ຮັບຜິດຊອບການຊົດເຊີຍເຊັ່ນກັນ. ສານໄດ້ສັ່ງໃຫ້ຈຳເລີຍຍົກເລີກໃບອານຸຍາດຫາປາຂອງເຂົາເຈົ້າ, ບໍ່ໃຫ້ຈຳເລີຍນຳໃຊ້ຜົນປະໂຫຍດຂອງເຮືອຕົນເອງ ແລະ ໃຫ້ຍຸບບໍລິສັດ. ຂໍ້ມູນສາມາດໄດ້ຈາກ: https://www.justice.gov/enrd/prosecution-federal-wildlife-crimes
34. Officers Of Fishing And Seafood Corporations Ordered To Pay Nearly $22.5 Million To South Africa For Illegally Harvesting Rock Lobster And Smuggling It Into The United States, Largest Lacey Act Restitution Order Ever Obtained (https://www.justice.gov/usao-sdny/pr/officers-fishing-and-seafood-corporations-ordered-pay-nearly-225-million-south-africa)
35. Pickering, Grace. "Bengis and the 'Victim' of an Environmental Crime." Environmental Law in New York, vol. 22, no. 7, July 2011, p. 103. https://files.arnoldporter.com/arnold&porterllp_environmentallawinnewyork_july2011.pdf.
36. Ibid, p. 105
37. "Officers Of Fishing And Seafood Corporations Ordered To Pay Nearly $22.5 Million To South Africa For Illegally Harvesting Rock Lobster And Smuggling It Into The United States." The United States Department of Justice, 15 May 2015, www.justice.gov/usao-sdny/pr/officers-fishing-and-seafood-corporations-ordered-pay-nearly-225-million-south-africa.
38. Ibid.
39. Pickering, Grace. "Bengis and the 'Victim' of an Environmental Crime." Environmental Law in New York, vol. 22, no. 7, July 2011, p. 106. https://files.arnoldporter.com/arnold&porterllp_environmentallawinnewyork_july2011.pdf
40. Ibid
41. Pierson, Melanie, and Meghan N. Dilges. "Wildlife Trafficking I: Restitution in Wildlife Cases." United States Attorneys' Bulletin, vol. 63, no. 3, May 2015, p. 87.
42. Ibid, p. 90
43. Ibid, pp. 87, 89
44. United States Department of State, 2018 Trafficking in Persons Report - Thailand, 28 June 2018, available at: https://www.refworld.org/docid/5b3e0a604.html [accessed 19 February 2020
45. Ibid.
46. Ibid.

47. Wildlife Conservation Act (No. 47 of 2013), Article 89, Available at: http://extwprlegs1.fao.org/docs/pdf/ken134375.pdf
48. Ibid.
49. Revised Penal Code of the Philippines, Act No. 3815, (8 Dec. 1930), Article 104.Available at: https://www.un.org/Depts/los/LEGISLATIONANDTREATIES/PDFFILES/PHL_revised_penal_code.pdf
50. Yang, Sallie, and Brian Gonzales. "ASEAN Handbook on Legal Cooperation to Combat Wildlife Crime." ASEAN-Wen, 2016. p. 323. (Philippines Fisheries Code of 1998 (Republic Act 8550), as amended by Republic Act 10654).
51. Uhlmann, "Sentencing Guidance in Environmental Prosecutions including the use of Supplemental Sentencing Measures", Internal Guidelines for the U.S. Department of Justice, p.3
52. Preston, Brian J., Hon. "The Use of Restorative Justice for Environmental Crime Land and Environment Court of NSW" (22 Mar. 2011), p. 17. Available at: http://www.lec.justice.nsw.gov.au/Documents/preston_use%20of%20restorative%20justice%20for%20environmental%20crime.pdf
53. Ibid.
54. Mulqueeny, Kala and Bonifacio, Sherielysse, "Asian Judges: Green Courts and Tribunals, and Environmental Justice", Asian Development Bank, Law and Policy Reform, No. 1 (April 2010). p.3
55. Ibid
56. Martin Harrell, "Organizational Environmental Crime and the Sentencing Reform Act of 1984: Combining Fines with Restitution, Remedial Orders, Community Service, and Probation to Benefit the Environment While Punishing the Guilty", 6 Vill. Envtl. L.J. 243 (1995). p. 36. Available at: https://digitalcommons.law.villanova.edu/elj/vol6/iss2/1
57. 18 U.S.C. § 3553(a)(1)
58. Internal Memorandum to: ENRD Deputy Assistant Attorneys General and Section Chiefs; From: Jeffrey H. Wood, Acting Assistant Attorney General, "Settlement Payments to Third Parties in ENRD Cases" (9 Jan. 2018). p.11.
59. Section 16 Canada's Wildlife Act, R.S., 1985, c. W-9, s. 11994, c. 23, s. 2(F), Available at: https://www.canlii.org/en/ca/laws/stat/rsc-1985-c-w-9/latest/rsc-1985-c-w-9.html
60. R.S. Silver, "Investing in Conservation with Revenue from Creative Sentencing, The Characteristics of The Court Award Portfolio Managed by The BC Habitat Conservation Trust Foundation 1993-2009", Victoria, British Columbia, (March 2011), p. 6.
61. Section 16 Canada's Wildlife Act, , R.S., 1985, c. W-9, s. 11994, c. 23, s. 2(F), located at: https://www.canlii.org/en/ca/laws/stat/rsc-1985-c-w-9/latest/rsc-1985-c-w-9.html
62. R.S. Silver, "Investing in Conservation with Revenue from Creative Sentencing, The Characteristics of The Court Award Portfolio Managed by The BC Habitat Conservation Trust Foundation 1993-2009", Victoria, British Columbia, (March 2011), p. 6
63. Ibid, p.11
64. Ibid, p.13
65. Section 16 Canada's Wildlife Act, , R.S., 1985, c. W-9, s. 11994, c. 23, s. 2(F), located at: https://www.canlii.org/en/ca/laws/stat/rsc-1985-c-w-9/latest/rsc-1985-c-w-9.html
66. Internal Memorandum to: ENRD Deputy Assistant Attorneys General and Section Chiefs; From: Jeffrey H. Wood, Acting Assistant Attorney General, "Settlement Payments to Third Parties in ENRD Cases" (9 Jan. 2018). p. 5.
67. Internal Memorandum to: ENRD Deputy Assistant Attorneys General and Section Chiefs; From: Jeffrey H. Wood, Acting Assistant Attorney General, "Settlement Payments to Third Parties in ENRD Cases" (9 Jan. 2018). p.5.
68. Ibid.
69. Martin Harrell, "Organizational Environmental Crime and the Sentencing Reform Act of 1984: Combining Fines with Restitution, Remedial Orders, Community Service, and Probation to Benefit the Environment While Punishing the Guilty", 6 Vill. Envtl. L.J. 243 (1995). pp. 35-36. Available at: https://digitalcommons.law.villanova.edu/elj/vol6/iss2/1
70. Internal Memorandum, To: Environmental Crimes Section Attorneys, From: Ronald J. Tenpas, Assistant Attorney General, "Guidance on Restitution, Community Service, and Other Sentencing Measures Imposed in Environmental Crimes Cases", (16 Jan. 2009), p. 9.

71. Ibid.

72. EPA NSW. "Guidelines-Seeking-Enviro-Court-Orders." NSW Environment Protection Authority, 31 Aug. 2017, www.epa.nsw.gov.au/licensing-and-regulation/legislation-and-compliance/policies-and-guidelines/guide-lines-seeking-enviro-court-orders

73. Ibid

74. Ibid

75. Preston, Brian J., Hon. "The Use of Restorative Justice for Environmental Crime Land and Environment Court of NSW" (22 Mar. 2011), pp. 8-13. Available at: http://www.lec.justice.nsw.gov.au/Documents/preston_use%20of%20restorative%20justice%20for%20environmental%20crime.pdf

76. Ibid, p. 25

77. Ibid.

78. Ibid.

79. Levine, Simon. "Empty Threat 2015: Does the Law Combat Illegal Wildlife Trade?" DLA Piper, 2015, p.303 (Namibia Controlled Wildlife Products and Trade Act 2008. Section 5(3)).

80. Ibid.

81. Levine, Simon. "Empty Threat 2015: Does the Law Combat Illegal Wildlife Trade?" DLA Piper, 2015, p.265

82. Uhlmann, 8-9

83. Martin Harrell, Organizational Environmental Crime and the Sentencing Reform Act of 1984: Combining Fines with Restitution, Remedial Orders, Community Service, and Probation to Benefit the Environment While Punishing the Guilty, 6 Vill. Envtl. L.J. 243 (1995). Available at: https://digitalcommons.law.villanova.edu/elj/vol6/iss2/1 page 12 [United States v. Exxon Corp., Plea Agreement, No. A90-015 (October 7, 1991)]

84. Ibid, p. 12

85. Internal Memorandum, To: Environmental Crimes Section Attorneys, From: Ronald J. Tenpas, Assistant Attorney General, "Guidance on Restitution, Community Service, and Other Sentencing Measures Imposed in Environ-mental Crimes Cases", (16 Jan. 2009), p.2

86. "ASEAN Handbook on International Legal Cooperation in Trafficking in Persons Cases," United Nations Office on Drugs and Crime, (August 2010), Available at: https://www.unodc.org/documents/human-trafficking/ASEAN_Handbook_on_International_Legal_Cooperation_in_TIP_Cases.pdf

87. Batt, Chris; Feltham, Jenny, et. al., "Enhancing the Detection, Investigation and Disruption of Illicit Financial Flows from Wildlife Crime". United Nations Office on Drug and Crime (2017), p. 29. Accessed at: https://www.unodc.org/documents/southeastasiaandpacific/Publications/2017/FINAL_-_UNODC_APG_Wildlife_Crime_report.pdf

88. Pierson, Melanie, and Meghan N. Dilges. "Wildlife Trafficking I: Restitution in Wildlife Cases." United States Attorneys' Bulletin, vol. 63, no. 3, May 2015, p. 86; United States v. Emerson, 128 F.3d 557, 567 (7th Cir. 1997).

89. "Wildlife and Forest Crime Analytic Toolkit". United Nations Office on Drugs and Crime, (Nov. 2012), p. 130. Available at: unodc.org/documents/Wildlife/Toolkit_e.pdf

90. Ibid, 133

91. "Evolving Role of Amicus Curiae.", LawTimes, (6 Nov. 2017). https://www.lawtimesnews.com/archive/evolv-ing-role-of-amicus-curiae/262799.

92. "Wildlife and Forest Crime Analytic Toolkit". United Nations Office on Drugs and Crime, (Nov. 2012), p. 152. Available at: unodc.org/documents/Wildlife/Toolkit_e.pdf

93. Levine, Simon. "Empty Threat 2015: Does the Law Combat Illegal Wildlife Trade?" DLA Piper, 2015, p.197 (197 (Mongolia Environmental Protection Law, Article 37).

94. Ibid.

95. Preston, Brian J., Hon.; Donnelly, Hugh. "The establishment of an environmental crime sentencing database in New South Wales" (22 Mar. 2011), p. 5. Available at:

96. http://www.lec.justice.nsw.gov.au/Documents/preston_the%20establishmentof%20an%20environmental%20crime%20sentencing%20database.pdf

# ຄຳຂອບໃຈ

ປຶ້ມລາຍງານນີ້ສ້າງໂດຍ ເບລຍນາ ອອຍຊັນ, ແລະ ຂຽນຮ່ວມໂດຍທ່ານ ສະຕີບ ອາ. ກາວເຕີ, ຊີອີໄອ ຂອງອົງການ ອາເຊັດ. ປຶ້ມລາຍງານນີ້ຈະບໍ່ສາມາດສ້າງຂຶ້ນໄດ້ຖ້າປາສະຈາກການປະກອບສ່ວນທາງວິຊາການໂດຍ: ອອນຄູລີ ມາຈຸມດາ, ລິຄາໂດ ຟໍເລດເຕີ, ກລໍເລຍ ໂລເປດ ເຣີມັນເດດ ແລະ ມິເຄລາ ກາເດ, ຊຶ່ງທັງໝົດໄດ້ຈັດການຄົ້ນຄວ້າທີ່ມີຄຸນຄ່າ ແລະ ຊຸກຍູ້ການຂຽນປຶ້ມລາຍງານນີ້. ການອອກແບບ ແລະ ຮູບປະກອບໄດ້ຈາກ ລູຊານາ ຄີລາທີບອງເຊ. ປຶ້ມລາຍງານນີ້ສ້າງໂດຍອົງການຟີແລນຜ່ານການສະໜອງທຶນໂດຍ ພີເອັມໄອອີມແພັກ, ທຶນຊ່ວຍເຫຼືອລ້າຈາກມູນນິທິສາກົນຟີລິບມໍລິດ (ພີເອັມໄອ).

ACET

# ສູນການວິເຄາະຂໍ້ມູນເພື່ອຕ້ານການລັກລອບ (ອາເຊັດ)

## ການໃຊ້ຂໍ້ມູນເພື່ອຕໍ່ສູ້ຕ້ານການລັກລອບ ແລະ ສົ່ງເສີມການຟື້ນຟູ

ໃນທຸກບ່ອນຂອງໂລກພວກເຮົາ ໄດ້ເປັນແຫຼ່ງ, ທາງຜ່ານ ຫຼື ປາຍທາງ ສໍາລັບເຄືອຂ່າຍອາດຊະຍາກອນຂ້າມຊາດທີ່ລັກລອບຄ້າຂາຍມະນຸດ, ສັດປ່າ, ອາວຸດສົງຄາມ ແລະ "ສິນຄ້າ" ທີ່ຜິດກົດໝາຍອື່ນໆ.

ການລັກລອບທີ່ຜິດກົດໝາຍກີດຂວາງການພັດທະນາການຄຸ້ມຄອງບໍລິຫານທີ່ດີຂອງພາກລັດ, ການດໍາເນີນທຸລະກິດທີ່ດີ ແລະ ການຮ່ວມມືຂ້າມຊາຍແດນ. ມູນຄ່າຫຼາຍຕື້ໂດລາເກີດຈາກການລັກລອບທີ່ຜິດກົດໝາຍໃນແຕ່ລະປີ, ສົ່ງເສີມອາດຊະຍາກໍາທີ່ມີການຈັດຕັ້ງ ແລະ ການສໍ້ລາດບັງຫຼວງ, ກີດໜ່ວງທຸລະກິດທີ່ຖືກກົດໝາຍ, ແລະ ເປັນໄພຄຸກຄາມຕໍ່ສິດທິມະນຸດ ແລະ ສິ່ງແວດລ້ອມ.

ເພື່ອຫຼຸດຜ່ອນການລັກລອບທີ່ຜິດກົດໝາຍນັ້ນ, ບັນດາລັດຖະບານ ຫົວໜ່ວຍທຸລະກິດ ແລະ ອົງການຈັດຕັ້ງທາງສັງຄົມ ຕ້ອງການໆຄຸ້ມຄອງທີ່ດີເພື່ອຊີ້ນໍາການບັງຄັບໃຊ້ກົດໝາຍໃຫ້ເກີດຜົນສັກສິດ, ນະໂຍບາຍ, ການປ້ອງກັນ ແລະ ຍຸດທະສາດການຟື້ນຟູທີ່ມີປະສິດທິຜົນ.

ໂດຍນໍາໃຊ້ເທັກໂນໂລຢີຈາກ ໄອບີເອັມ ແລະ ເຊເລໄບ ທີ່ເປັນເທັກໂນໂລຢີຂໍ້ມູນທາງດີຈີຕໍ, ພ້ອມທັງເຄືອຂ່າຍອົງການຈັດຕັ້ງທາງສັງຄົມທີ່ເຮັດວຽກຢູ່ດ່ານໜ້າ, ສູນການວິເຄາະຂໍ້ມູນເພື່ອຕ້ານການລັກລອບ (ອາເຊັດ) ໄດ້ເປັນສູນສະໜອງແຫຼ່ງຂໍ້ມູນແບບເປີດເພື່ອຊ່ວຍໃຫ້ພາກສ່ວນທີ່ກ່ຽວຂ້ອງໃຊ້ຂໍ້ມູນເຂົ້າໃນການຕັດສິນໃຈທີ່ຮອບດ້ານ ແລະ ທັນເວລາ ຫຼຸດຜ່ອນການລັກລອບ, ປະຢັດເວລາ, ເງິນ ແລະ ຊ່ວຍຮັກສາຊີວິດ.

ການນໍາໃຊ້ຫຼັກຖານທີ່ຜ່ານການວິເຄາະໂດຍເຕັກໂນໂລຢີອັດສະລິຍະທາງຄອມພິວເຕີ ແລະ ວິເຄາະໂດຍຊ່ຽວຊານດ້ານສະເພາະ, ສູນອາເຊັດໄດ້ເປັນຂົວຕໍ່ໃຫ້ຜູ້ມີຂໍ້ມູນຮ່ວມກັບຜູ້ສ້າງກົດໝາຍ ແລະ ເຈົ້າໜ້າທີ່, ສາມາດເຂົ້າໃຈເຖິງບັນຫາການລັກລອບ ແລະ ສ້າງວິທີແກ້ໄຂໃຫ້:

- ເຈົ້າໜ້າທີ່ປະຈໍາຢູ່ຊາຍແດນ: ກໍານົດທິດທາງທັນກັບເວລາຕົວຈິງທີ່ມີການລັກລອບຂົນສິນຄ້າທີ່ຜິດກົດໝາຍ;
- ບັນດາເຈົ້າໜ້າທີ່ສືບສວນສອບສວນ: ຕິດຕາມ ແລະ ຍຶດຊັບສິນທີ່ໄດ້ຈາກການລັກລອບ;
- ຜູ້ສ້າງກົດໝາຍ: ສ້າງຄວາມເຂັ້ມແຂງ ແລະ ເຊື່ອມສານບັນດາກົດໝາຍ ແລະ ນະໂຍບາຍເພື່ອຫຼຸດຜ່ອນການລັກລອບ;
- ຊ່ຽວຊານດ້ານການປ່ຽນແປງພຶດຕິກໍາ: ເພື່ອກໍານົດປັດໃຈທາງສັງຄົມ ແລະ ເສດຖະກິດຂອງການລັກລອບ;
- ຫົວໜ່ວຍທຸລະກິດ: ເພື່ອຮັບປະກັນການປະຕິບັດຕາມກົດໝາຍ ແລະ ເຮັດທຸລະກິດທີ່ຄໍານຶງເຖິງສັງຄົມ.

ສູນອາເຊັດ ໄດ້ຮັບການຊຸກຍູ້ຈາກພັນທະມິດເຄືອຂ່າຍອົງການຈັດຕັ້ງທາງສັງຄົມ ແລະ ຄູ່ຮ່ວມງານທີ່ເປັນຫົວໜ່ວຍທຸລະກິດລວມທັງອົງການຟີແລນ, ໄອບີເອັມ, ເຊເລໄບ ແລະ ແມ່ຂອງ ຄັບ. ບົດລາຍງານນີ້ໄດ້ຮັບທຶນຊຸກຍູ້ໂດຍ ພີເອັມໄອ-ອິມແພັກ, ທຶນຊ່ວຍເຫຼືອລ້າເພື່ອການລິເລີ່ມໂດຍມູນນິທິຟີລິບມໍລິດສາກົນ ເພື່ອຊຸກຍູ້ໂຄງການທີ່ເສຍສະລະໃນການຕໍ່ສູ້ຕ້ານການຄ້າທີ່ຜິດກົດໝາຍ ແລະ ອາດຊະຍາກໍາອື່ນໆທີ່ກ່ຽວຂ້ອງ.

ACET

ANALYTICAL CENTER
OF EXCELLENCE
ON TRAFFICKING